

ບົດລາຍງານການສ້າງສິ່ງອໍານວຍຄວາມສະດວກ ທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ

# ການວັດແທກການຄຸ້ມຄອງເສດຖະກິດຂອງພາກລັດ ສໍາລັບການພັດທະນາທຸລະກິດໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສະບັບທີ 2

ມີນາ 2022

ADB

ບົດລາຍງານການສ້າງສິ່ງອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ

# ການວັດແທກການຄຸ້ມຄອງເສດຖະກິດຂອງພາກລັດ ສຳລັບການພັດທະນາທຸລະກິດໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສະບັບທີ 2

---

ມີນາ 2022

ອະນຸຍາດຍັ້ງຢືນຜົນງານສ້າງສັນ 3.0 IGO (CC BY 3.0 IGO)

© 2022 ທະນາຄານພັດທະນາອາຊີ
ຖະໜົນ 6 ADB, ມັນດາລູຍອງ ຊິຕີ້, 1550 ເມໂທຣ ມານິລາ, ຟີລິປິນ
Tel +63 2 8632 4444; Fax +63 2 8636 2444
www.adb.org

ສະຫງວນລິຂະສິດ. ຈັດພິມໃນປີ 2022.

ISBN 978-92-9269-432-6
Publication Stock No. TCS220073-3
DOI: http://dx.doi.org/10.22617/TCS220073-3

ຄໍາເຫັນຕ່າງໆ ທີ່ສະແດງອອກໃນສິ່ງພິມນີ້ ແມ່ນທັດສະນະຂອງບັນດາຜູ້ຂຽນ ຊຶ່ງອາດຈະບໍ່ສະທ້ອນເຖິງທັດສະນະ ແລະ ນະໂຍບາຍຂອງທະນາຄານພັດທະນາອາຊີ ຫຼື ທັດສະນະຂອງສະພາຜູ້ບໍລິຫານທະນາຄານດັ່ງກ່າວ ຫຼື ບັນດາລັດຖະບານທີ່ພວກເຂົາເຈົ້າຕາງໜ້າໃຫ້.

ທະນາຄານພັດທະນາອາຊີ ບໍ່ຮັບປະກັນຄວາມຊັດເຈນຂອງຂໍ້ມູນທີ່ຢູ່ໃນສິ່ງພິມນີ້ບໍ່ຮັບຜິດຊອບຕໍ່ຜົນທີ່ຕາມມາຈາກການນໍາໃຊ້ຂໍ້ມູນດັ່ງກ່າວ.

ການກໍານົດ ຫຼື ການອ້າງເຖິງອານາເຂດ ຫຼື ພື້ນທີ່ທາງດ້ານພູມສາດ ຫຼື ການນໍາໃຊ້ຄໍາສັບ “ປະເທດ” ໃນເອກະສານນີ້, ທະນາຄານພັດທະນາອາຊີ ແລະ ທະນາຄານໂລກ ບໍ່ໄດ້ມີຈຸດປະສົງ ທີ່ຈະຕັດສິນສະຖານະພາບຕ່າງໆ ເຊັ່ນ: ສະຖານະພາບທາງກົດໝາຍ ຫຼື ສະຖານະພາບທາງດ້ານອານາເຂດ ຫຼື ພື້ນທີ່ນັ້ນ.

ວຽກນີ້ດໍາເນີນຢູ່ພາກໃຕ້ໃບອະນຸຍາດຍັ້ງຢືນຜົນງານສ້າງສັນ 3.0 IGO (CC BY 3.0 IGO)
https://creativecommons.org/licenses/by/3.0/igo/. ໂດຍການນໍາໃຊ້ເນື້ອໃນຂອງສິ່ງພິມນີ້, ທ່ານຕົກລົງຍອມຮັບເງື່ອນໄຂໃນໃບອະນຸຍາດນີ້. ສໍາລັບເຫດຜົນ, ການແປ, ການແກ້ໄຂປັບປຸງ, ແລະ ການອະນຸຍາດ, ກະລຸນາອ່ານຂໍ້ກໍານົດ ແລະ ເງື່ອນໄຂ ໃນການນໍາໃຊ້ທີ່ https://www.adb.org/terms-use#openaccess.

ໃບອະນຸຍາດ CC ບໍ່ຖືກນໍາໃຊ້ກັບເອກະສານລິຂະສິດ ທີ່ບໍ່ແມ່ນຂອງ ເອດີບີໃນສິ່ງພິມນີ້. ຖ້າເນື້ອຫາແມ່ນມາຈາກແຫຼ່ງອື່ນ, ກະລຸນາຕິດຕໍ່ເຈົ້າຂອງລິຂະສິດ ຫຼື ຜູ້ເຜີຍແຜ່ແຫຼ່ງທີ່ມານັ້ນ ເພື່ອອະນຸຍາດໃຫ້ສ້າງຄືນໃໝ່. ເອດີບີ ຈະບໍ່ຮັບຜິດຊອບຕໍ່ການຮຽກຮ້ອງໃດໆທີ່ເກີດຂຶ້ນເຊິ່ງເປັນຜົນມາຈາກການນໍາໃຊ້ເອກະສານຂອງທ່ານ.

ກະລຸນາຕິດຕໍ່ pubsmarketing@adb.org ຖ້າຫາກທ່ານມີຄໍາຖາມ ຫຼື ຄໍາຄິດເຫັນທີ່ຕິດພັນກັບເນື້ອໃນ ຫຼື ຖ້າທ່ານຢາກຮັກສາລິຂະສິດໄວ້ໃຊ້ສໍາລັບທ່ານ ຈະບໍ່ໄດ້ຕົກຢູ່ໃນເງື່ອນໄຂດັ່ງກ່າວ ຫຼື ການອະນຸຍາດໃຫ້ນໍາໃຊ້ກາໝາຍຂອງ ເອດີບີ.

ບັນດາຂໍ້ຜິດພາດຕ່າງໆຂອງສິ່ງພິມຈາກເອດີບີສາມາດເບິ່ງໄດ້ທີ່ http://www.adb.org/publications/corrigenda.

ໝາຍເຫດ:
ໃນບົດລາຍງານນີ້, “$” ໝາຍເຖິງ ໂດລາສະຫະລັດ ແລະ “KN” ໝາຍເຖິງ ສະກຸນເງິນກີບ.
ເອດີບີຮັບຮູ້ “Laos” ແລະ “Lao” ແມ່ນ ສະທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ “Vietnam” ແມ່ນປະເທດຫວຽດນາມ.

ເນື້ອໃນ: ການປັບປຸງຄຸນນະພາບການຄຸ້ມຄອງເສດຖະກິດ ຢູ່ຂັ້ນສູນກາງ ແລະ ຂັ້ນລັດຖະບານທ້ອງຖິ່ນ ແມ່ນມີຄວາມສໍາຄັນໃນການຂັບເຄື່ອນແວດລ້ອມການດໍາເນີນທຸລະກິດແບບກ້າວກະໂດດໃນ ສປປ ລາວ. ຂໍ້ມູນທີ່ໄດ້ຈາກການສໍາຫຼວດຈາກບົດລາຍງານການສ້າງສິ່ງອໍານວຍຄວາມສະດວກການລົງທຶນ ແລະ ການຄ້າຂັ້ນແຂວງ ໄດ້ສະໜອງໃຫ້ເຫັນບັນຫາທີ່ສໍາຄັນເລິກເຊິ່ງຂອງປະສົບການທີ່ພາກເອກະຊົນໃນດໍາເນີນກິດຈະກໍາທຸລະກິດຂອງເຂົາໃນຂອບເຂດທົ່ວປະເທດ.

ອອກແບບໜ້າປົກ ໂດຍ ໄມ ຄອດເຕ້

# ສາລະບານ


**ຕາຕະລາງ, ຮູບ, ແລະ ຫ້ອງຂໍ້ມູນ** iv

**ຄຳນຳ** vi

**ຄຳຂອບໃຈ** viii

**ປະຫວັດຜູ້ຂຽນ** ix

**ຄຳສັບຫຍໍ້** x

**ບົດສະຫຼຸບຫຍໍ້** xi

**1 ບົດນຳ** 1

**2 ວິທີການສຶກສາ ແລະ ລັກສະນະຂອງຜູ້ຕອບແບບສອບຖາມ** 7

A. ວິທີການສຶກສາ 8

B. ວິທີການກຳນົດຄະແນນ ProFIT 10

C. ການຈັດກຸ່ມແຂວງເພື່ອການວິເຄາະ 11

D. ລັກສະນະຂອງຜູ້ຕອບແບບສອບຖາມ 12

**3 ຜົນຂອງການສຳຫຼວດ ແລະ ດັດສະນີ ProFIT 2019** 15

A. ການຈັດອັນດັບ ແລະ ຄະແນນ ProFIT ສຳລັບແຂວງຂະໜາດໃຫຍ່, ກາງ ແລະ ນ້ອຍ 16

B. ວິເຄາະຄະແນນຂອງແຕ່ລະດັດສະນີຍ່ອຍ 20

1. ການເລີ່ມຕົ້ນສ້າງທຸລະກິດ 20
2. ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ 22
3. ພາລະທາງດ້ານລະບຽບການ 24
4. ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ 27
5. ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍ 30
6. ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ 35

**4 ການເລືອກເອົາບາງບັນຫາທາງດ້ານນະໂຍບາຍ** 37

A. ໂຄງສ້າງຂອງວິສາຫະກິດໃນ ສປປ ລາວ 38

B. ຜົນກະທົບຂອງຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018 ຕໍ່ການຂໍທະບຽນວິສາຫະກິດ 40

C. ພາລະຄ່າໃຊ້ຈ່າຍທີ່ຫຼາຍເກີນໄປສຳລັບທຸລະກິດເອກະຊົນ 43

**5 ນະໂຍບາຍທາງເລືອກ** 47

**ເອກະສານຊ້ອນທ້າຍ** 52

# ຕາຕະລາງ, ຮູບ, ແລະ ຫ້ອງຂໍ້ມູນ

## ຕາຕະລາງ


| | | |
|---|---|---|
| 1 | ປຽບທຽບການປະເມີນຂອງສາກົນ ສໍາລັບ ສປປ ລາວ | 2 |
| 2 | ການປະຕິຮູບທຸລະກິດໃນຊ່ວງປີ 2018–2020 | 4 |
| 3 | ຂະໜາດຂອງກຸ່ມຕົວຢ່າງແບບຕາມແຂວງ | 9 |
| 4 | ອົງປະກອບຂອງການສໍາຫຼວດ ProFIT 2019 ແລະ ດັດສະນີຍ່ອຍ | 11 |
| 5 | ແຂວງແບ່ງຕາມຂະໜາດປະຊາກອນ | 12 |
| 6 | ດັດສະນີ ProFIT 2017 and 2019 | 16 |
| 7 | ແຂວງທີ່ມີເວັບໄຊທາງການ, 2019 ແລະ 2022 | 20 |
| 8 | ບາງຕົວຊີ້ວັດຂອງວິສາຫະກິດ, 2006–2020 | 38 |


## ຮູບ


| | | |
|---|---|---|
| 1 | ອົງປະກອບຂອງດັດສະນີ ProFIT | 8 |
| 2 | ລັກສະນະຂອງວິສາຫະກິດ | 13 |
| 3 | ຄະແນນ ProFIT, 2019 | 17 |
| 4 | ປຽບທຽບຄະແນນ ProFIT ປີ 2017 ແລະ 2019 | 18 |
| 5 | ປຽບທຽບແນນດັດນະນີຍ່ອຍ ProFIT ຕາມຂະໜາດແຂວງປີ 2017 ແລະ 2019 | 19 |
| 6 | ການເລີ່ມຕົ້ນສ້າງທຸລະກິດ, 2019 | 21 |
| 7 | ຄ່າໃຊ້ຈ່າຍ ແລະ ເວລາທີ່ຕ້ອງການສໍາລັບການຂໍທະບຽນວິສາຫະກິດປີ 2017 ແລະ 2019 | 22 |
| 8 | ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານຂອງແຂວງ, 2019 | 23 |
| 9 | ການເຂົ້າເຖິງເອກະສານທາງການໃນແຂວງ, 2019 | 24 |
| 10 | ພາລະທາງດ້ານລະບຽບການໃນແຂວງ, 2019 | 25 |
| 11 | ການປ່ຽນແປງຄະແນນພາລະທາງດ້ານລະບຽບການໃນແຂວງຈາກປີ 2017 ຫາປີ 2019 | 25 |
| 12 | ຄວາມຖີ່ຂອງການກວດກາໃນແຂວງ, 2019 | 26 |
| 13 | ຄ່າໃຊ້ຈ່າຍ ແລະ ເວລາທີ່ນໍາໃຊ້ໃນການຕໍ່ເລກປະຈໍາຕົວອາກອນໃນແຂວງ, ປີ 2017 ແລະ 2019 | 27 |
| 14 | ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃນແຂວງ, 2019 | 28 |
| 15 | ການປ່ຽນແປງຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃນແຂວງຈາກປີ 2017 ຫາ 2019 | 29 |
| 16 | ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍໃນແຂວງ, 2019 | 31 |
| 17 | ການປ່ຽນແປງດັດສະນີຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍແຕ່ 2017 ຫາ 2019 | 31 |
| 18 | ການໃຫ້ບູລິມະສິດລັດວິສາຫະກິດໃນແຂວງ, 2019 | 32 |
| 19 | ຄວາມໄດ້ປຽບຂອງການມີສາຍພົວພັນໃກ້ຊິດໃນແຂວງ, 2019 | 33 |
| 20 | ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດລະບຽບແຫ່ງຊາດໃນແຂວງ, 2019 | 34 |
| 21 | ແຂວງໄດ້ອອກລະບຽບເພີ່ມເຕີມທີ່ແຕກຕ່າງຈາກຂັ້ນສູນກາງ ຫຼື ບໍ່ | 34 |
| 22 | ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ, 2019 | 35 |

23 ຄວາມຄິດເຫັນຕໍ່ອົງການປົກຄອງແຂວງ, 2019 36
24 ໂຄງສ້າງຂອງວິສາຫະກິດໃນ ສປປ ລາວ, 2020 39
25 ຈຳນວນວິສາຫະກິດທີ່ມີເອກະສານປະກອບທຸລະກິດທີ່ຈຳເປັນ, 2020 39
26 ຄ່າໃຊ້ຈ່າຍ ແລະ ເວລາທີ່ນຳໃຊ້ສະເລ່ຍໃນການຂໍທະບຽນວິສາຫະກິດກ່ອນ ແລະ ຫຼັງ ມີຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018 40
27 ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃນຊ່ວງການຂໍທະບຽນວິສາຫະກິດ, 2017-2019 42
28 ຄວາມຮັບຮູ້ກ່ຽວກັບຄຳສັ່ງຂອງທ່ານນາຍົກລັດຖະມົນຕີເລກທີ 02/2018 42
29 ຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການສຳລັບການຂໍທະບຽນ ແລະ ໃບອະນຸຍາດ 43
30 ຄ່າໃຊ້ຈ່າຍ ແລະ ເວລາສະເລ່ຍທີ່ນຳໃຊ້ໃນການຂໍອະນຸຍາດດຳເນີນທຸລະກິດ 43
31 ຕົ້ນທຶນ ແລະ ເວລາທີ່ຈຳເປັນສຳລັບການປະຕິບັດຕາມຂັ້ນຕອນ 44
32 ອັດຕາສ່ວນຂອງຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ 44

## ຫ້ອງຂໍ້ມູນ

1 ການປະຕິບັດທີ່ບໍ່ເປັນທາງການໃນການດຳເນີນທຸລະກິດໃນ ສປປ ລາວ 29
2 ການປະຕິຮູບຜ່ານມາກ່ຽວກັບຂັ້ນຕອນການເລີ່ມຕົ້ນທຸລະກິດ 41
3 ການປະເມີນສະພາບແວດລ້ອມການດຳເນີນທຸລະກິດຂອງທະນາຄານໂລກ 45
4 ລະບົບການລົງທະບຽນທຸລະກິດອອນລາຍຂອງກຳປູເຈຍ 46
5 ການປະຕິຮູບລະບຽບການຢູ່ປະເທດຫວຽດນາມ 46

# ຄຳນຳ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ມີຄວາມພູມໃຈໃນການເປີດຕົວບົດລາຍງານການ ສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ສະບັບທີ 2 ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ). ໂຄງການກະກຽມບົດລາຍງານດັ່ງກ່າວ ແມ່ນໄດ້ຮັບການຊ່ວຍເຫຼືອດ້ານວິຊາການຈາກທະນາຄານພັດທະນາອາຊີ (ADB). ບົດລາຍງານ ProFIT ມີຈຸດປະສົງເພື່ອວັດແທກ ບັນດາແຂວງໄດ້ສະໜັບສະໜູນການພັດທະນາຂອງພາກເອກະຊົນໄດ້ດີພຽງໃດ, ໂດຍຜ່ານມາດຕະການຄຸ້ມຄອງທາງເສດຖະກິດຂອງພາກລັດ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງໜ່ວຍງານຮັບຜິດຊອບ. ProFIT ເປັນການເພີ່ມມູນຄ່າໃຫ້ກັບຊຸດເຄື່ອງມືຂອງ ສຄອຊ ເພື່ອຕິດຕາມອົງການປົກຄອງແຂວງ ໃນການອຳນວຍຄວາມສະດວກ ແລະ ສົ່ງເສີມທຸລະກິດພາກເອກະຊົນໄດ້ດີພຽງໃດ. ມັນເປັນເຄື່ອງມືຊ່ວຍ ໃຫ້ພາກເອກະຊົນສາມາດດຳເນີນການປຶກສາຫາລືກັບລັດຖະບານຂອງ ສປປ ລາວ.

ບົດລາຍງານ ProFIT ນີ້ແມ່ນແທນໃຫ້ຄວາມຄິດເຫັນຂອງ 1,357 ຜູ້ປະກອບການ ຕໍ່ກັບການຄຸ້ມຄອງ ເສດຖະກິດແຂວງ ໂດຍນຳໃຊ້ 6 ດັດສະນີຊີ້ວັດ: (1) ການເລີ່ມຕົ້ນດຳເນີນທຸລະກິດ; (2) ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ; (3) ພາລະທາງດ້ານລະບຽບການ; (4) ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ; (5) ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍ; ແລະ (6) ຄວາມເປັນມິດຂອງຕໍ່ພາກທຸລະກິດ ຂອງອົງການປົກຄອງແຂວງ. ບົດລາຍງານດັ່ງກ່າວໄດ້ສະແດງໃຫ້ເຫັນວ່າ ຄຳສັ່ງທ່ານນາຍົກລັດຖະມົນ ຕີເລກທີ 02 ແມ່ນສົ່ງຜົນກະທົບດ້ານບວກຕໍ່ສະພາບແວດລ້ອມໃນການດຳເນີນທຸລະກິດ, ໂດຍສະເພາະ ແມ່ນຊ່ວຍຫຼຸດເວລາ ແລະ ຄ່າໃຊ້ຈ່າຍໃນການຂໍທະບຽນວິສາຫະກິດ. ປຽບທຽບກັບການສຳຫຼວດ ProFIT ຄັ້ງທີ 1 ໃນປີ 2017, ເກືອບທຸກແຂວງແມ່ນມີຄະແນນເພີ່ມຂຶ້ນໃນປີ 2019, ເຊິ່ງຊີ້ໃຫ້ເຫັນເຖິງ ການປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດ ແລະ ການບໍລິຫານງານຂອງອົງການປົກຄອງທ້ອງຖິ່ນ.

ການແຜ່ລະບາດຂອງພະຍາດໂຄວິດ-19 ໃນປີ 2019 ແລະ ການແຜ່ລະບາດຂອງພະຍາດດັ່ງກ່າວໃນ ທົ່ວປະເທດ ໄດ້ສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ເສດຖະກິດຂອງ ສປປ ລາວ ແລະ ທຸລະກິດຊຸມຊົນ. ເພື່ອກ້າວໄປຂ້າງໜ້າ, ການຜ່ານຜ່າສິ່ງທ້າທາຍຈາກໂລກລະບາດທີ່ບໍ່ເຄີຍມີມາກ່ອນ ມັນຮຽກຮ້ອງໃຫ້ລັດຖະບານຈາກສູນກາງ ແລະ ທ້ອງຖິ່ນຮ່ວມມືກັບພາກເອກະຊົນຢ່າງໃກ້ຊິດ. ການອອກແບບ ແລະ ດຳເນີນການປະຕິຮູບລະບຽບການຕ່າງໆ ຈະຊ່ວຍຫຼຸດຕົ້ນທຶນ ແລະ ຄວາມສ່ຽງໃນການດຳເນີນທຸລະກິດໃນ ສປປ ລາວ. ນອກນັ້ນ, ມັນຍັງຊ່ວຍດຶງດູດການລົງທຶນໃໝ່ທັງຈາກພາຍໃນ ແລະ ຕ່າງປະເທດ. ບົດລາຍງານ ProFIT 2019 ໄດ້ສະໜອງຂໍ້ມູນລະອຽດ ແລະ ວິເຄາະກ່ຽວກັບຈຸດແຂງ ແລະ ຈຸດອ່ອນ ຂອງຂັ້ນຕອນ ການຈັດຕັ້ງປະຕິບັດ ແລະ ສະພາບແວດລ້ອມທາງທຸລະກິດໃນລະດັບທ້ອງຖິ່ນ.

ສຄອຊ ຂໍສະແດງຄວາມຂອບໃຈມາຍັງ ກະຊວງການຄ້າ ແລະ ອຸດສາຫະກຳ ທີ່ໃຫ້ການຮັບຮອງ ແລະ ສະໜັບສະໜູນຕະຫຼອດມາ ແລະ ຫວັງຢ່າງຍິ່ງວ່າທ່ານຈະສືບຕໍ່ ແລະ ເພີ່ມທະວີການຮ່ວມມືຢ່າງຮອບ ດ້ານ. ສຄອຊ ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນທາງດ້ານເຕັກນິກຈາກ ທະນາຄານພັດທະນາ ອາຊີ, ລັດຖະບານອົດສະຕຣາລີ ແລະ ສະພາການຄ້າ ແລະ ອຸດສາຫະກຳ ສສ ຫວຽດນາມ. ພວກເຮົາ ຫວັງຢ່າງຍິ່ງວ່າຈະສືບຕໍ່ຮ່ວມມືກັນຢ່າງປົກກະຕິ ລະຫວ່າງ ລັດຖະບານ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ.

**ອູເດດ ສຸວັນນະວົງ**
ປະທານ
ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

# ຄຳນຳ

ບົດລາຍງານການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ສະບັບທີ 2 ສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ຈາກທີ່ໄດ້ຈັດພິມບົດ ລາຍງານສະບັບທີ 1 ໃນປີ 2018. ProFIT ມີ ຈຸດປະສົງເພື່ອປຽບທຽບໃຫ້ເຫັນພາບກ່ຽວກັບປະສົບການ ແລະ ຄວາມເຂົ້າໃຈຂອງຜູ້ປະກອບການ ໃນການປະຕິບັດຕາມລະບຽບ ການຂອງອົງການປົກຄອງແຂວງ. ບົດລາຍງານສະບັບທີ 2 ນີ້ໄດ້ຍົກໃຫ້ເຫັນເຖິງການປັບປຸງສະພາບແວດລ້ອມຂອງການດຳເນີນ ທຸລະກິດໃນ ທຸກແຂວງ ທັງນີ້ຍ້ອນຄວາມຄືບໜ້າໃນການປະຕິບັດຂໍ້ກຳນົດການລົງທະບຽນວິສາຫະກິດຢ່າງເປັນທາງການ. ເຖິງ ຢ່າງໃດກໍຕາມ, ບົດລາຍງານດັ່ງກ່າວຍັງພົບວ່າ ວິສາຫະກິດຕ່າງໆໃນ ສປປ ລາວ ຍັງຄົງເສຍໂອກາດຈາກຂໍ້ກຳນົດດ້ານລະບຽບ ການທີ່ຫຼາຍເກີນໄປ ແລະ ສືບຕໍ່ການປະຕິບັດທີ່ບໍ່ເປັນທາງການ. ການປະຕິຮູບສະພາບແວດລ້ອມການດຳເນີນທຸລະກິດທີ່ໄດ້ ຈັດຕັ້ງປະຕິບັດມາເຖິງປະຈຸບັນໄດ້ຊ່ວຍຫຼຸດຜ່ອນຕົ້ນທຶນ, ແຕ່ຍັງບໍ່ສາມາດຫຼຸດຜ່ອນການຈັດຕັ້ງປະຕິບັດທີ່ບໍ່ເປັນທາງການ, ການ ປະຕິຮູບທີ່ບໍ່ສົມບູນແບບສົ່ງຜົນຕໍ່ກັບການຈັດເກັບລາຍຮັບອາກອນຂອງພາກລັດ.

ການທັນວາລະການປະຕິຮູບສະພາບແວດລ້ອມຂອງການດຳເນີນທຸລະກິດ ໂດຍການຈັດຕັ້ງປະຕິບັດທີ່ມີ ປະສິດທິພາບ ແລະ ຊື່ສັດ ແມ່ນສິ່ງທີ່ຈຳເປັນ ເພື່ອສ້າງຂວັນກຳລັງໃຈໃຫ້ຜູ້ປະກອບການ ແລະ ເພື່ອຊຸກຍູ້ການຟື້ນຕົວຢ່າງແຂງແຮງ ຫຼັງການແຜ່ລະບາດ ຂອງ ໂຄວິດ-19. ການປະຕິບັດຢ່າງວ່ອງໄວຂອງການ ຟື້ນຕົວຈາກໂລກລະບາດ, ລວມທັງການປະຕິຮູບໃໝ່ ເພື່ອປັບປຸງສະພາບ ແວດລ້ອມການດຳເນີນທຸລະກິດ ແມ່ນກຸນແຈສຳຄັນ ສຳລັບການກະຕຸ້ນໂອກາດທາງທຸລະກິດໃໝ່, ສ້າງວຽກເຮັດງານທຳ ແລະ ນຳ ໄປສູ່ ຄວາມຫຼາກຫຼາຍທາງເສດຖະກິດ ເພື່ອອານາຄົດທີ່ມີປະສິດທິຜົນຍິ່ງຂຶ້ນ.

ທະນາຄານພັດທະນາອາຊີ ພູມໃຈທີ່ໄດ້ຮ່ວມມືກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນການກະກຽມບົດລາຍງານ ສະບັບນີ້. ພວກເຮົາສະແດງຄວາມຂອບໃຈມາຍັງ ກະຊວງອຸດສາຫະກຳ ແລະ ການຄ້າ ສຳລັບຄຳແນະນຳ ແລະ ການສະໜັບສະໜູນ ຕະຫຼອດໄລຍະເວລາຂອງການສຶກສາ.

ພວກເຮົາຫວັງຢ່າງຍິ່ງວ່າ ຜົນໄດ້ຮັບຂອງການສຶກສາ ແລະ ຂໍ້ສະເໜີແນະ ລວມທັງບົດລາຍງານນີ້ ແມ່ນໄດ້ຖືກອ່ານ ແລະ ປຶກສາ ຫາລືກັນຢ່າງກວ້າງຂວາງ. ຖ້າຫາກມີການຈັດຕັ້ງປະຕິບັດ, ຂໍ້ສະເໜີແນະໃນບົດນີ້ ຈະຊ່ວຍປັບປຸງສະພາບແວດລ້ອມດ້ານລະບຽບ ການສຳລັບທຸລະກິດໃນ ສປປ ລາວ, ການປະຕິບັດການດັ່ງ ກ່າວ ຈະຊ່ວຍສະໜັບສະໜູນການຟື້ນຕົວຫຼັງເກີດໂລກລະບາດ ທີ່ນຳ ໂດຍພາກເອກະຊົນຢ່າງເຂັ້ມແຂງ.



ຣາເມສ ຊູບຣາມານຽມ
ຫົວໜ້າກົມ
ກົມອາຊີຕາເວັນອອກສຽງໃຕ້
ທະນາຄານພັດທະນາອາຊີ

# ຄຳຂອບໃຈ

*ບົດລາຍງານການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ-ວັດແທກ ການຄຸ້ມຄອງເສດຖະກິດຂອງພາກລັດ ສຳລັບການພັດທະນາທຸລະກິດ* ແມ່ນຖືກກະກຽມໂດຍ ທະນາຄານພັດທະນາອາຊີ (ADB) ພາຍໃຕ້ໂຄງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການພາກພື້ນ (RETA 9387), ການສ້າງຄວາມເຂັ້ມແຂງຂອງສະຖາບັນສຳລັບທ້ອງຖິ່ນ 2030 ສຳລັບການພັດທະນາແບບຍືນຍົງທີ່ໄດ້ຮັບການສະໜັບສະໜູນຈາກກອງທຶນຮ່ວມມືພາກພື້ນ ແລະ ການຫຼຸດຜ່ອນຄວາມທຸກຍາກ, ຈາກ ສາທາລະນະລັດ ປະຊາຊົນຈີນ. ການສຶກສາຄັ້ງນີ້ ແມ່ນຖືກດຳເນີນການໂດຍສຳນັກງານຫ້ອງການຕົວແທນທະນາຄານພັດທະ ນາອາຊີປະຈຳ ສປປ ລາວ (LRM). ຜູ້ຕາງໜ້າ ທະນາຄານພັດທະນາອາຊີ ປະຈຳ ສປປ ລາວ ທ່ານ Sonomi Tanaka ໄດ້ໃຫ້ຄຳແນະນຳຍຸດທະສາດຂອງການສຶກສາ. ການສຶກສາຄັ້ງນີ້ສຳເລັດໂດຍພາຍໃຕ້ການຊີ້ນຳຂອງນັກ ເສດຖະສາດອາວຸໂສ Emma R. Allen ສຳນັກງານ ທະນາຄານພັດທະນາອາຊີ ປະຈຳ ສປປ ລາວ, ພັນຕຸເລດ ຫຼວງລາດ ສຳນັກງານ ທະນາຄານພັດທະນາອາຊີ ປະຈຳ ສປປລາວ ແລະ Mai Lin Villaruel ຈາກພະແນກຄົ້ນຄວ້າເສດຖະກິດມະຫາພາກ ຂອງກົມຄົ້ນຄວ້າ ເສດຖະກິດ ແລະ ການຮ່ວມມືພາກພື້ນ ທີ່ໄດ້ໃຫ້ການປະກອບສ່ວນທາງດ້ານເຕັກນິກທີ່ມີຄຸນຄ່າສຳລັບການສຶກສາຄັ້ງນີ້, ເມລີ ພົນມະຈັນ ສຳນັກງານ ທະນາຄານພັດທະນາອາຊີ ປະຈຳສປປລາວ ທີ່ໃຫ້ການສະໜັບສະໜູນດ້ານການ ບໍລິຫານ, ສຸພາວັນ ພອນມະນີ ສຳນັກງານ ທະນາຄານພັດທະນາອາຊີ ປະຈຳ ສປປ ລາວ ທີ່ໄດ້ສຳໜັບສະໜູນການຈັດພິມ, Srinivasa Madhur ນຳພາການກວດແກ້ດ້ານເສດຖະສາດຂອງບົດລາຍງານ, Phan Vinh Quang ທີ່ປຶກສາອິດສະຫຼະ ແລະ ບຸນເລີດ ວັນນະລາດ ຈາກມະຫາວິທະຍາໄລແຫ່ງຊາດລາວ, ທີ່ໄດ້ຊີ້ນຳການສຳຫຼວດວິສາຫະກິດ, ລວມທັງການອອກແບບສຳຫຼວດ, ຊີ້ນຳການເກັບຂໍ້ມູນ, ການວິເຄາະຂໍ້ມູນ ແລະ ແບ່ງປັນຜົນໄດ້ຮັບເບື້ອງຕົ້ນກັບແຕ່ລະພາກສ່ວນທີ່ສຳຄັນ. ທີມເກັບກຳຂໍ້ມູນຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ປະກອບມີ ພູໄຊ ເທບພະວົງ, ພອນວິໄລ ສີນາວົງ, ສຸພາພອນ ຄຳແສນນາມ, ດາວອະດິງ ພິລາໄຊພິທັກ, ພຸດທະສອນ ພົມວິໄຊ, ມານິດໂຕ ພົງໂພທິ, ພົງສະຫວັນ ເພັດວໍລະສັກ, ແກ້ວມະນີວອນ ໄຊຍະວົງສາ, ພູມີ ພົມມີວົງ, ເຈນຈິລາ ຈັນທະສົມ, ນົງທອງ ວົງສະຫວັນ, ສຸພັນທອງ ພົນໄຊຍາ, ຄຳສອນ ຈັນທະສີລີ, ຄອນສະຫວັນ ຈັນທະວົງ, ລັດຕິກອນ ແສງເດືອນເພັດ ແລະ ສຸກສະຫວັນ ອາດສະນາວົງ.

ພາຍໃຕ້ການແນະນຳຂອງ Hanif A. Rahemtulla, Rachana Shrestha, Marjorie Anne O. Javillonar, Abigail D. Armamento, ແລະ Rainer Maria Rene Rohdewohld, ກຸ່ມຄົ້ນຄວ້າການຄຸ້ມຄອງລັດທີ່ ADB, ທີ່ໃຫ້ການສະໜັບສະໜູນຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການຈັດຕັ້ງປະຕິບັດ. ການສຶກສາຄັ້ງນີ້ໄດ້ຮັບ ປະໂຫຍດຈາກຄວາມຄິດເຫັນອັນລ້ຳຄ່າ ທີ່ໄດ້ຮັບຈາກຜູ້ທົບທວນເພື່ອນມິດຂອງ ADB ລວມທັງ Gengwen Zhao, Daisuke Mizusawa, Thuy Trang Dang ຈາກກົມອາຊີຕາເວັນອອກສຽງໃຕ້, Robert Lockhart ພະແນກການເງິນພື້ນຖານໂຄງລ່າງ 2 ຂອງກົມປະຕິບັດການພາກເອກະຊົນ, Dominic Patrick Mellor ຈາກໜ່ວຍງານຮັບຜິດຊອບ ຜູ້ອຳນວຍການທົ່ວໄປ ຂອງກົມປະຕິບັດການພາກເອກະຊົນ, Shawn W. Tan, and Mara Tayag ຈາກພະແນກການຮ່ວມມືພາກພື້ນ ແລະ ການຮ່ວມກຸ່ມ ກົມຄົ້ນຄວ້າເສດຖະກິດ ແລະ ກົມຮ່ວມ ມືພາກພື້ນ ແລະ Junkyu Lee ຂະແໜງບໍລິການທີ່ປຶກສາ-ການເງິນ ຂອງກົມພັດທະນາແບບຍືນຍົງ ແລະ ການປ່ຽນແປງດິນຟ້າອາກາດ, ກົມສື່ສານມວນຊົນຂອງ ADB ທີ່ໄດ້ໃຫ້ການທົບທວນຄືນ ແລະ ສະໜັບສະໜູນຂັ້ນ ສຸດທ້າຍໃນການພິມ ແລະ ການພິມເຜີຍແຜ່ບົດລາຍງານໃນເວັບໄຊ.

ການສຶກສາຄັ້ງນີ້ ເປັນຜົນມາຈາກການປຶກສາຫາລືຢ່າງກວ້າງຂວາງກັບບັນດາກະຊວງທີ່ສຳຄັນຂອງລັດຖະບານຂອງ ສປປ ລາວ ແລະ ໜ່ວຍງານຂອງພວກເຂົາ. ພວກເຮົາສະແດງຄວາມຂອບໃຈ ມາຍັງກະຊວງ ອຸດສາຫະກຳ ແລະ ການຄ້າ, ການຊວງການເງິນ ແລະ ອົງການປົກຄອງ 17 ແຂວງ ສຳລັບການສະໜັບໜູນຂອງພວກເຂົາ. ພວກເຮົາສະແດງຄວາມຂອບໃຈທີ່ປຶກສາຂອງ ສຄອຊ, ລວມທັງ ທ່ານ. ສຽວສະຫວາດ ສະແຫວງສຶກສາ, ທ່ານ ອູເດດ ສຸວັນນະວົງ, ທ່ານ.ນາງ. ວາລີ ເວດສະພົງ, ທ່ານ. ໄຊບັນດິດ ລາດສະພົນ, ທ່ານ. ບຸນເລີດ ຫຼວງປະເສີດ ແລະ ທ່ານ. ວັນທອງ ສິດທິກຸນ ສຳລັບການໃຫ້ຄຳແນະນຳ ຕະຫຼອດໄລຍະຂອງການສຶກສາ.

ສຸດທ້າຍ, ພວກເຮົາຂໍສະແດງຄວາມຂອບໃຈມາຍັງບັນດາພາກສ່ວນກ່ຽວຂ້ອງ ແລະ ຄູ່ຮ່ວມງານຈາກພາຍນອກ ລວມທັງ Dan Heldon, Hannah Wurf, ແລະ ສຸລິວັນ ສຸກສະຫັວດ ຈາກລັດຖະບານຂອງອົດສະຕຣາລີ, Painchaud Francois ແລະ ອານຸຊາ ກຸນນະວົງ ຈາກກອງທຶນການເງິນລະຫວ່າງປະເທດ, Tamara Failor ມູນນິທິອາຊີ, Melise Jaud, Konesavang Nghardsaysone, Alexander Kremer, Sebastian Eckardt, Sagita Muco, ຄຳເປົ້າ ນັນທະວົງ, ນິມ ວົງລັດດາ ໂອມະນີ ແລະ ສຸທິດາ ສາລາພັນ ຈາກທະນາຄານໂລກ, ແລະ ອະພິສິດ ແສງສຸລິວົງ, ພັກປະເສີດ ລໍປານກາວ, ຕຸລາຄຳ ພົມແສງສະຫວັນ, ວັນນະແສງ ອຸນາລົມ, ແສງພະນົມຈອນ ອິນທະເສນ, ແສງໄຊ ພູຊົງຮາວ ແລະ ທິບພະພອນ ວົງໄຊ ຈາກກະຊວງ ອຸດສາຫະກຳ ແລະ ການຄ້າ ເຊິ່ງໄດ້ໃຫ້ຄວາມກະຈ່າງແຈ້ງ ແລະ ແນະນຳເຄື່ອງມືຂອງການສຶກສາ.

# ປະຫວັດຜູ້ຂຽນ

**Emma R. Allen** ເປັນນັກເສດຖະສາດອາວຸໂສປະຈຳຫ້ອງການທະນາຄານພັດທະນາອາຊີ ປະຈຳ ສປປ ລາວ, ປະຈຸບັນ ເປັນຫົວໜ້າໜ່ວຍງານຝ່າຍເສດຖະກິດ ຍຸດທະສາດ ແລະ ແຜນງານ ຂອງ ສຳນັກງານເອດີບີປະຈຳ ສປປ ລາວ. ລາວເປັນຜູ້ນຳພາກະກຽມບົດລາຍງານສະພາບເສດຖະກິດຂອງ ສປປ ລາວ ທີ່ເປັນ ບົດລາຍງານທີ່ສຳຄັນ ຂອງທະນາຄານພັດທະນາອາຊີ ແລະ ນຳພາການສ້າງແຜນງານການຮ່ວມມື ລະຫວ່າງ ສປປ ລາວ ແລະ ທະນາຄານພັດທະນາອາຊີ, ລາວຍັງໄດ້ສະໜັບສະໜູນການອອກແບບ ແລະ ການປະຕິບັດການ ເງິນກູ້ຂອງ ADB ແລະ ການຊ່ວຍເຫຼືອດ້ານວິຊາການທີ່ຕິດພັນກັບການບໍລິຫານການເງິນຂອງພາກລັດ, ການປະຕິຮູບລັດວິສາຫະກິດ, ເປົ້າໝາຍຂອງການພັດທະນາຍືນຍົງ, ຄວາມຮູ້ ແລະ ການສະໜັບສະໜູນ ການວິເຄາະ, ແລະ ສະພາບແວດລ້ອມທາງທຸລະກິດ. ກ່ອນທີ່ຈະມາຮ່ວມງານກັບ ADB ໃນປີ 2016, ລາວ ເປັນນັກເສດຖະສາດຕະຫຼາດແຮງງານກັບອົງການແຮງງານສາກົນ, ລາວໄດ້ຮັບປະລິນຍາເອກດ້ານ ເສດຖະສາດ ແລະ ປະລິນຍາຕີດ້ານການສຶກສາ ແລະ ເສດຖະສາດຈາກມະຫາວິທະຍາໄລ Newcasttle, ປະເທດອົດສະຕຣາລີ ປີ 2015 ແລະ 2004 ຕາມລຳດັບ.

**Phantouleth Louangraj** ພະນັກງານເສດຖະສາດອາວຸໂສຂອງ ຫ້ອງການ ທະນາຄານພັດທະນາອາຊີ ປະຈຳ ສປປ ລາວ. ຮັບຜິດຊອບ ວຽກງານພາກເອກະຊົນ, ການຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະ ຜະລິດຕະພັນຄວາມຮູ້, ພາຍໃຕ້ ໜ່ວຍງານຝ່າຍເສດຖະກິດ ຍຸດທະສາດ ແລະ ແຜນງານຂອງຫ້ອງການທະນາຄານພັດທະນາອາຊີປະຈຳ ສປປ ລາວ. ລາວບໍລິຫານໂຄງການ ແລະ ຊ່ວຍເຫຼືອທາງດ້ານວິຊາການ ເພື່ອສະໜັບສະໜູນການພັດທະນາພາກເອກະຊົນ. ກ່ອນຍ້າຍມາ ADB, ລາວໄດ້ເຮັດວຽກກັບອົງການ ເພື່ອການພັດທະນາຂອງອົງການສະຫະປະຊາຊາດ ໃນຖານະເປັນຜູ້ຮັບຜິດຊອບໂຄງການ, ລາວໄປຮັບປະລິນຍາ ໂທການບໍລິຫານທຸລະກິດຈາກມະຫາວິທະຍາໄລ Waseda, ປະເທດຍີ່ປຸ່ນປີ 2004.

**Mai Lin Villaruel** ເປັນເຈົ້າໜ້າທີ່ດ້ານເສດຖະສາດຢູ່ພະແນກຄົ້ນຄວ້າເສດຖະກິດມະຫາພາກ ຢູ່ກົມຄົ້ນຄວ້າເສດຖະກິດ ແລະ ການຮ່ວມມືພາກພື້ນຂອງ ADB, ລາວເປັນສ່ວນໜຶ່ງຂອງທີມງານທີ່ຂຽນບົດລາຍງານເສດຖະກິດ ຂອງທະນາຄານພັດທະນາອາຊີ ແລະ ບົດລາຍງານຕິດຕາມພັນທະບັດ ຂອງທະນາຄານພັດທະນາອາຊີ. ລາວຮຽນຈົບປະລິນຍາໂທສະຖິຕິນຳໃຊ້ ຈາກມະຫາວິທະຍາໄລ Macquarie ຢູ່ຊິດນີ, ປະເທດອົດສະຕຣາລີ.

**Srinivasa Madhur**, ອະດີດຜູ້ອຳນວຍການອາວຸໂສ ADB, ປະຈຸບັນເປັນອາຈານອາວຸໂສຂອງມະຫາ ວິທະຍາໄລ Pannasastra, ພະນົມເປັນ ປະເທດກຳປູເຈຍ ແລະ ເປັນທີ່ປຶກສາບັນນາທິການດ້ານເສດຖະສາດຂອງ ADB ໃນເອກະສານດ້ານເສດຖະກິດ ທີ່ສຳຄັນ ລວມທັງບົດລາຍງານເສດຖະກິດຂອງທະນາຄານພັດທະນາອາຊີ ທີ່ມີການຈັດພິມທຸກປີ.

**Phan Vinh Quang** ແມ່ນເປັນທີ່ປຶກສາເອກະລາດ ດ້ານການພັດທະນາ ແລະ ໄດ້ເຮັດວຽກຫຼາຍໂຄງການ ຂອງ ADB, ອົງການພັດທະນາສາກົນຂອງອາເມລິກາ, ອົງການການເງິນສາກົນ, ໂຄງການພັດທະນາຂອງ ອົງການສະຫະປະຊາຊາດ, ກະຊວງການຕ່າງປະເທດ ແລະ ການຄ້າ (ອົດສະຕຣາລ) ແລະ ອື່ນໆ. ລາວເປັນຜູ້ລິເລີ່ມສ້າງການຮ່ວມມືລະຫວ່າງສະພາການຄ້າ ແລະ ອຸດສາຫະກຳຫວຽດນາມ ແລະ ສະພາ ການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ກ່ຽວກັບການພັດທະນາ ProFIT ໃນຊ່ວງປີ 2017-2019. Quang ໄດ້ເຮັດວຽກຮ່ວມກັບທັງພາກລັດ ແລະ ເອກະຊົນກ່ຽວກັບເຕັກໂນໂລຊີທາງການຄ້າ, ການສົ່ງເສີມວິສາຫະກິດ, ການພັດທະນາຕ່ອງໂສ້ມູນຄ່າເພີ່ມ, ການປະຕິຮູບລະບຽບການ ແລະ ການເປີດເສລີ ທາງດ້ານການຄ້າ. ລາວໄດ້ສ້າງບໍລິສັດທີ່ປຶກສາຂະໜາດນ້ອຍ ໃຫ້ບໍລິການລູກຄ້າຕ່າງປະເທດຢູ່ ສສ ຫວຽດນາມ. Quang ຮຽນຈົບປະລິນຍາໂທບໍລິຫານທຸລະກິດຈາກມະຫາວິທະຍາໄລ Bath, ປະເທດອັງກິດ ແລະ ຈົບປະລິນຍາຕີຢູ່ມະຫາວິທະຍາໄລການຄ້າສາກົນຢູ່ ສສ ຫວຽດນາມ.

**ບຸນເລີດ ວັນນະລາດ** ແມ່ນອາຈານສອນຢູ່ມະຫາວິທະຍາໄລແຫ່ງຊາດລາວ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ. ບຸນເລີດມີປະສົບການເຮັດຄົ້ນຄວ້າກ່ຽວກັບການພັດທະນາວິສາຫະກິດ ແລະ ການຄ້າລະ ຫວ່າງປະເທດໃນ ສປປ ລາວ. ລາວໄດ້ເຮັດວຽກເປັນທີ່ປຶກສາແຫ່ງຊາດ ໃນການປະເມີນດັດສະນີການ ສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງຢູ່ ສປປ ລາວ ໃນປີ 2018, ແລະ ໄດ້ເຮັດວຽກຮ່ວມກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນການປະເມີນຜົນກະທົບຂອງການຈັດ ຕັ້ງປະຕິບັດປະຊາຄົມເສດຖະກິດອາຊຽນຕໍ່ເສດຖະກິດລາວ ພາຍໃຕ້ໂຄງການເຊື່ອມໂຍງເສດຖະກິດພາກພື້ນຂອງ ສປປ ລາວ ເຂົ້າໃນອາຊຽນ ແລະ ການພັດທະນາການປະກອບການ. ລາວໄດ້ຈົບການສຶກສາ ປະລິນຍາເອກດ້ານເສດຖະສາດຈາກມະຫາວິທະຍາໄລໂກເບ, ປະເທດຍີ່ປຸ່ນ ໃນປີ 2012.

# ຄໍາສັບຫຍໍ້

| | | |
|---|---|---|
| ADB | – | ທະນາຄານພັດທະນາອາຊີ |
| APCA | – | ອົງການຄວບຄຸມຂັ້ນຕອນການບໍລິຫານ (ຫວຽດນາມ) |
| ASEAN | – | ສາມະຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ |
| COVID-19 | – | ເຊື້ອພະຍາດໄວຣັດສໂຄໂຣນາ |
| CEO | – | ປະທານຜູ້ບໍລິຫານ |
| ERC | – | ໃບຢັ້ງຢືນທະບຽນວິສາຫະກິດ |
| GCI | – | ດັດຊະນີການແຂ່ງຂັນທົ່ວໂລກ |
| GII | – | ດັດສະນີນະວັດຕະກໍາທົ່ວໂລກ |
| ICT | – | ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ |
| LNCCI | – | ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ |
| MOIC | – | ກະຊວງອຸດສາຫະກໍາ ແລະ ການຄ້າ |
| PMO | – | ຄໍາສັ່ງທ່ານນາຍົກລັດຖະມົນຕີ |
| ProFIT | – | ການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ |
| SOE | – | ລັດວິສາຫະກິດ |
| SDG | – | ເປົ້າໝາຍຂອງການພັດທະນາຍືນຍົງ |
| TAI | – | ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ |
| TIN | – | ຕົວເລກປະຈໍາຕົວອາກອນ |
| VAT | – | ອາກອນມູນຄ່າເພີ່ມ |

# ບົດສະຫຼຸບຫຍໍ້

**ບົດລາຍງານການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ໄດ້ສຳຫຼວດ, ວັດແທກ ແລະ ປະເມີນ ປະສົບການທີ່ຜ່ານມາຂອງວິສາຫະກິດໃນການດຳເນີນທຸລະກິດໃນ ສາທະລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ໃນລະດັບແຂວງ**. ບົດລາຍງານນີ້ ເປັນບົດລາຍງານສະບັບທີ 2 ແລະ ໄດ້ອີງໃສ່ການສຳຫຼວດໃນປີ 2019 ຂອງວິສາຫະກິດ 1,357 ຫົວໜ່ວຍ ໃນ 17 ແຂວງທົ່ວປະເທດ. ບົດລາຍງານນີ້ໄດ້ສຸມໃສ່ 6 ຂົງເຂດຫຼັກຄື: (i) ຄວາມສະດວກໃນການເລີ່ມຕົ້ນດຳເນີນທຸລະກິດ, (ii) ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ, (iii) ພາລະທາງດ້ານລະບຽບການ, (iv) ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ, (v) ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍ, ແລະ (vi) ຄວາມເປັນມິດຂອງຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ.

**ໃນປີ 2018, ລັດຖະບານຂອງ ສປປ ລາວ ໄດ້ຮັບຮອງເອົາຄຳສັ່ງທ່ານນາຍົກລັດຖະມົນຕີ ສະບັບເລກທີ 02 (PMO 02/2018) ເພື່ອແນໃສ່ປັບປຸງສະພາບແວດລ້ອມຂອງການດຳເນີນທຸລະກິດຂອງປະເທດ**. ການປະຕິຮູບຄັ້ງໃຫຍ່ໃນທົ່ວປະເທດນີ້ ໄດ້ປັບປຸງການຈົດທະບຽນວິສາຫະກິດ ໂດຍການອອກເລກປະຈຳຕົວອາກອນ ແລະ ໃບຢັ້ງຢືນທະບຽນວິສາຫະກິດໃນເວລາດຽວກັນ. ຄຳສັ່ງເລກທີ 02/2018 ໄດ້ປັງປຸງ ຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດໃຫ້ງ່າຍຂຶ້ນ. ໜຶ່ງໃນບູລິມະສິດທີ່ສຳຄັນຂອງອົງການປົກທ້ອງຖິ່ນ ແມ່ນການຂະຫຍາຍການປະຮູບຈາກສູນກາງລົງສູ່ຊຸມຊົນທຸລະກິດ. ເພື່ອໃຫ້ເຂົ້າໃຈເຖິງຜົນກະທົບຂອງຄຳສັ່ງເລກທີ 02/2018 ໃນລະດັບແຂວງ, ຜູ້ຕອບແບບສອບຖາມນີ້ ໄດ້ຖືກຂໍໃຫ້ລາຍງານ (i) ຄ່າໃຊ້ຈ່າຍ ແລະ ເວລາທີ່ນຳໃຊ້ໃນການຂໍຂຶ້ນທະບຽນວິສາຫະກິດ, (ii) ຖ້າພວກເຂົາໄດ້ຮັບເລກປະຈຳຕົວອາກອນ ແລະ ໃບຢັ້ງຢືນທະບຽນວິສາຫະກິດໃນເວລາດຽວກັນ. ຖ້າຜູ້ຕອບລາຍງານ ວ່າພວກເຂົາໄດ້ຮັບເລກປະຈຳຕົວອາກອນ ແລະ ໃບຢັ້ງຢືນທະບຽນວິສາຫະກິດໃນເວລາດຽວກັນ, ວິສາຫະກິດດັ່ງກ່າວຖືກພິຈາລະນາວ່າ ໄດ້ປະຕິບັດຕາມການຈົດທະບຽນວິສາຫະກິດພາຍໃຕ້ຄຳສັ່ງເລກທີ 02/ 2018.

**ຜົນໄດ້ຮັບທີ່ສຳຄັນທີ 1: ລະຫວ່າງປີ 2017 ແລະ 2019, ສະພາບແວດລ້ອມໃນການດຳເນີນທຸລະກິດ ໂດຍລວມໃນທົ່ວທຸກແຂວງແມ່ນໄດ້ຮັບການປັບປຸງດີຂຶ້ນ ສະແດງໃຫ້ເຫັນເຖິງການປັບປຸງການຄຸ້ມຄອງ ການດຳເນີນທຸລະກິດຂອງແຕ່ລະອົງການປົກຄອງແຂວງ.**

**ແຂວງສ່ວນໃຫຍ່ມີຄະແນນສູງໃນປີ 2019 ທຽບກັບປີ 2017 ສະແດງໃຫ້ເຫັນເຖິງການປັບປຸງເງື່ອນໄຂ ການດຳເນີນທຸລະກິດຂັ້ນທ້ອງຖິ່ນ**. ຄະແນນສະເລ່ຍຂອງທຸກແຂວງທີ່ສຳຫຼວດໃນປີ 2019 ແມ່ນ 55.4 ຄະແນນ ຈາກຄະແນນເຕັມ 100, ເພີ່ມຂຶ້ນ 6.6 ຄະແນນທຽບກັບຕົວເລກປີ 2017, ແຕ່ກໍຍັງໄກຈາກ 100 ຄະແນນ, ສະແດງ ໃຫ້ເຫັນວ່າຍັງມີຊ່ອງວ່າງ ສຳລັບການປັບປຸງໄດ້ຕື່ມອີກ. ອີງຕາມວິທີການທີ່ໃນກຳນົດໄວ້ ໃນການສຳຫຼວດ ປີ 2017, ຜົນໄດ້ຮັບຂອງບັນດາແຂວງທີ່ເຂົ້າຮ່ວມ ແມ່ນໄດ້ແບ່ງຕາມຂະໜາດຂອງຫົວໜ່ວຍທຸລະກິດໃຫຍ່, ກາງ ແລະ ນ້ອຍ.

**ໃນຈຳນວນ 17 ແຂວງທີ່ໄດ້ປະເມີນໃນບົດລາຍງານສະບັບນີ້, ແຂວງວຽງຈັນໄດ້ຄະແນນສູງສຸດໃນປີ 2019 ໃນຂະນະທີ່ແຂວງຈຳປາສັກແມ່ນໄດ້ຄະແນນຕ່ຳສຸດ**. ແຂວງວຽງຈັນໄດ້ຄະແນນສູງສຸດສຳລັບບົດລາຍງານ ProFIT ຢູ່ທີ່ 62.6 ຄະແນນ ແລະ ໄດ້ຄະແນນດີສຸດກ່ຽວກັບພາລະດ້ານລະບຽບການ ແລະ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ. ການຫຼຸດລົງຂອງເວລາ ແລະ ຄ່າໃຊ້ຈ່າຍ ທີ່ນຳໃຊ້ໃນການຕໍ່ທະບຽນອາກອນ ແລະ ການກວດສອບທຸລະກິດໜ້ອຍລົງ ໄດ້ນຳໄປສູ່ການປັບປຸງໃນແຂວງດັ່ງກ່າວ. ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ຢູ່ແຂວງວຽງຈັນໂດຍສະເລ່ຍມີພຽງ 3.4% ຂອງລາຍຮັບຂອງວິສາຫະກິດ, ເຊິ່ງຕ່ຳກວ່າຄ່າສະເລ່ຍຂອງ ປະເທດແມ່ນ 5.6% ແລະ ການເຈລະຈາຕໍ່ລອງກ່ຽວກັບອາກອນແມ່ນສິ່ງທີ່ບໍ່ປົກກະຕິຢູ່ໃນແຂວງ. ໃນຂະນະທີ່ແຂວງຈຳປາສັກໄດ້ຄະແນນພຽງ 45.8 ຄະແນນ, ເຊິ່ງຊີ້ໃຫ້ເຫັນເຖິງຂອບເຂດການປັບປຸງທີ່ສຳຄັນໃນສະພາບແວດລ້ອມການດຳເນີນທຸລະກິດຂອງຕົນ.

**ແຂວສະຫວັນນະເຂດມີການປັບປຸງທີ່ຫຼາຍທີ່ສຸດ, ຄະແນນ ProFIT ທີ່ສຳຫຼວດໃນປີ 2019 ແມ່ນເພີ່ມຂຶ້ນ 15.8 ຄະແນນ ປຽບກັບກັບຕົວເລກປີ 2017**. ແຂວງດັ່ງກ່າວໄດ້ສະແດງໃຫ້ເຫັນການປັບປຸງໃນທຸກຂົງເຂດສະພາບແວດລ້ອມຂອງການດຳເນີນທຸລະກິດ, ໂດຍສະເພາະແມ່ນກ່ຽວກັບຄວາມສອດຄ່ອງຂອງການ ຈັດຕັ້ງປະຕິບັດນະໂຍບາຍ ແລະ ພາລະທາງດ້ານລະບຽບການ. ທັງນີ້ແມ່ນຍ້ອນບັນດາລະບຽບການ ແລະ ນະໂຍບາຍຂອງແຂວງ

ທີ່ອຳນວຍຄວາມສະດວກ ຈາກການເປັນສູນກາງທາງດ້ານການຄ້າລະຫວ່າງ ສປປ ລາວ, ໄທ ແລະ ຫວຽດນາມ. ແຂວງອັດຕະປືເປັນພຽງແຕ່ແຂວງດຽວທີ່ມີຄະແນນໃນປີ 2019 ຕໍ່າ ກວ່າປີ 2017. ຄະແນນຂອງແຂວງອັດຕະປື ກ່ຽວກັບຄວາມເປັນມິດ ຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ ແລະ ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານຫຼຸດລົງ 12.2 ແລະ 9.9 ຄະແນນ ຕາມລຳດັບ.

**ຜົນໄດ້ຮັບທີ່ສຳຄັນທີ 2: ພາລະດ້ານລະບຽບການຫຼຸດລົງ ເນື່ອງຈາກການລວມຂໍ້ກຳນົດການລົງທະບຽນວິສາຫະກິດ. ເຖິງຢ່າງໃດກໍຕາມ, ຄວາມຄືບໜ້າແມ່ນຍັງຊັກຊ້າໃນແງ່ຂອງ (i) ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ; (ii) ຄວາມເປັນມິດຕໍ່ພາກທຸລະກິດ; ແລະ (iii) ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ.**

**ການປັບປຸງເກີດຂຶ້ນໃນທົ່ວທຸກດັດສະນີຍ່ອຍຂອງ ProFIT, ຍົກເວັ້ນການເຂົ້າເຖິງຂໍ້ມູນຂ່າວສານ.** ນີ້ແມ່ນ ກ່ຽວຂ້ອງກັບປະສິດທິພາບຂອງການເຜີຍແຜ່ລະບຽບການ, ລວມທັງຄຸນນະພາບຂອງໂຄງລ່າງພື້ນຖານ ສຳລັບການສື່ສານ ແລະ ການເຜີຍແຜ່ຂໍ້ມູນຂ່າວສານ. ຜູ້ປະກອບການເກືອບທັງໝົດລາຍງານວ່າ ໄດ້ຈ່າຍເງິນ ຫຼື ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການສຳລັບການເຂົ້າເຖິງເອກະສານຂອງອົງການປົກຄອງແຂວງ ແລະ ການກວດສອບທຸລະກິດ. ວິສາຫະກິດສ່ວນໃຫຍ່ລາຍງານວ່າ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການແມ່ນອົງປະກອບສຳຄັນ ເພື່ອຮັບປະກັນການດຳເນີນທຸລະກິດທີ່ມີປະສິດທິຜົນ. ໃນບັນດາແຂວງຕ່າງໆ, ຄະແນນແຂວງ ອຸດົມໄຊ, ແຂວງວຽງຈັນ ແລະ ແຂວງໄຊຍະບູລີຫຼຸດລົງຫຼາຍ. ແຂວງອຸດົມໄຊ ແລະ ໄຊຍະບູລີ ທັງສອງແຂວງຂະໜາດກາງບໍ່ມີເວັບໄຊຂອງແຂວງກ່ຽວກັບຂັ້ນຕອນການດຳເນີນທຸລະກິດ. ໃນຂະນະທີ່ ແຂວງວຽງຈັນທີ່ໄດ້ ຄະແນນສູງສຸດໃນດັດສະນີລວມ, ການເຂົ້າເຖິງຂໍ້ມູນຂ່າວສານໂດຍສະເພາະແມ່ນ ດ້ານການຈັດຊື້ຈັດຈ້າງ ແລະ ງົບປະມານແຂວງ ຍັງໄດ້ຄະແນນຕ່ຳ. ໜ່ວຍງານຂອງພາກລັດຍັງມີຄວາມ ລັງເລຫຼາຍ ທີ່ຈະນຳໃຊ້ສິ່ງອຳນວຍຄວາມສະດວກທາງດ້ານອິນເຕີເນັດ ເຫັນໄດ້ຈາກການຈອງປີ້ລົດໄຟ ສຳລັບເສັ້ນທາງລົດໄຟລາວ-ຈີນໃໝ່ ເປັນຕົວຢ່າງທີ່ບົ່ງບອກເຖິງຂໍ້ຈຳກັດ ຂອງທ່ານນາຍົກລັດຖະມົນຕີທີ່ມີແນວຄິດປະຕິຮູບປະເທດ. ໄພຄຸກຄາມຢ່າງຕໍ່ເນື່ອງຂອງພະຍາດໂຄວິດ-19 ໄດ້ສ້າງໂອກາດໃຫ້ແກ່ ສປປ ລາວ ເພື່ອຫຼຸດຜ່ອນການຕິດຕໍ່ຈາກຄົນຕໍ່ຄົນໃຫ້ໜ້ອຍທີ່ສຸດ ແລະ ຮັບເອົາເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອໃຫ້ບໍລິການສາທາລະນະໃຫ້ໄດ້ຈຳນວນຫຼາຍ.

**ຜົນໄດ້ຮັບທີ່ສຳຄັນທີ 3: ວິສາຫະກິດຢູ່ໃນ ສປປ ລາວ ຍັງຄົງເສຍປຽບຈາກຂໍ້ກຳນົດກົດລະບຽບທີ່ຫຼາຍເກີນໄປ ແລະ ສືບຕໍ່ການປະຕິບັດທີ່ບໍ່ເປັນທາງການ.**

**ຫຼາຍກວ່າສອງສ່ວນສາມຂອງວິສາຫະກິດໃນປະເທດລາຍງານວ່າ ພວກເຂົາຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການເພື່ອໄດ້ຮັບການລົງທະບຽນ, ໃບອະນຸຍາດ ແລະ ການອະນຸມັດ.** ການເຈລະຈາຕໍ່ລອງການຈ່າຍ ອາກອນລະຫວ່າງວິສາຫະກິດ ແລະ ພະນັກງານລັດ ເຫັນວ່າມີຢ່າງແຜ່ຫຼາຍໃນທົ່ວທຸກແຂວງ. ຜົນໄດ້ຮັບ ຂອງການສຶກສາໄດ້ສະແດງໃຫ້ເຫັນວ່າ ມັນມີຄວາມຊັບຊ້ອນ, ຕົ້ນທຶນສູງ ແລະ ໃຊ້ເວລາຫຼາຍ ເພື່ອໃຫ້ວິສາຫະກິດປະຕິບັດຕາມກົດໝາຍ, ລະບຽບການ ແລະ ຂັ້ນຕອນທີ່ຄວບຄຸມສະພາບແວດລ້ອມການດຳເນີນທຸລະກິດ. ແຂວງຫຼວງພະບາງຜົນການດຳເນີນງານຕ່ຳສຸດ ຍ້ອນຂັ້ນຕອນເອກະສານທີ່ສັບສົນ, ໂດຍສະເພາະແມ່ນຂໍ້ກຳນົດສຳລັບການຂໍໃບອະນຸຍາດດຳເນີນທຸລະກິດ ລວມທັງການບໍ່ເປີດເຜີຍຄ່າທຳນຽມ ແລະ ຄ່າທຳນຽມທີ່ເປັນທາງການ ເຮັດໃຫ້ຜູ້ປະກອບການຫຼາຍຄົນ ຫັນໄປຈ່າຍຄ່າໃຊ້ຈ່າຍຄ່າບໍລິການທີ່ບໍ່ເປັນທາງການ.

**ຜົນໄດ້ຮັບທີ່ສຳຄັນທີ 4: ການປະຕິຮູບສະພາບແວດລ້ອມຂອງການດຳເນີນທຸລະກິດ ໄດ້ຊ່ວຍຫຼຸດຕົ້ນທຶນ, ແຕ່ຍັງບໍ່ສາມາດຍັບຍັ້ງການປະຕິບັດທີ່ບໍ່ເປັນທາງການ, ການປະຕິຮູບທີ່ບໍ່ສົມບູນແບບສົ່ງຜົນກະທົບຕໍ່ການຈັດເກັບລາຍຮັບອາກອນ.**

**ເຖິງວ່າມີການປັບປຸງໂດຍລວມ ທີ່ສັງເກດເຫັນໄດ້ໃນການສຳຫຼວດ 2019, ແຕ່ບໍລິສັດຕ່າງໆຍັງຄົງມີຄ່າໃຊ້ຈ່າຍທີ່ບໍ່ເປັນທາງການຢ່າງແຜ່ຫຼາຍ.** ການສຳຫຼວດຄັ້ງນີ້ ສະແດງໃຫ້ເຫັນວ່າ ການຈັດຕັ້ງປະຕິບັດຄຳສັ່ງເລກທີ 02/2018 ໄດ້ຫຼຸດຕົ້ນທຶນການລົງທະບຽນວິສາຫະກິດ 33.9% ແລະ ຫຼຸດເວລາລົງໄດ້ 37.3%, ແຕ່ລະບຽບການບໍ່ໄດ້ລົບລ້າງ ຫຼື ຫຼຸດຜ່ອນການປະຕິບັດການ ທີ່ວິສາຫະກິດໄດ້ຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ. ການປະຕິບັດທີ່ບໍ່ເປັນທາງການທີ່ມີຢ່າງແຜ່ຫຼາຍໃນສະພາບແວດລ້ອມການດຳເນີນທຸລະກິດ, ລວມທັງການຈ່າຍເງິນໃຫ້ເຈົ້າໜ້າທີ່ ທີ່ບໍ່ແມ່ນສ່ວນໜຶ່ງຂອງຄ່າທຳນຽມທີ່ເປັນທາງການ, ການເຈລະຈາຕໍ່ລອງການຈ່າຍອາກອນ, ການລາຍງານລາຍຮັບຂອງວິສາຫະກິດ ແລະ ຄວາມຫຍຸ້ງຍາກໃນການເຂົ້າເຖິງຂໍ້ມູນຂ່າວສານທາງການ ແມ່ນມີຜົນກະທົບຢ່າງກວ້າງຕໍ່ປະສິດທິພາບຂອງລັດຖະບານ. ສິ່ງດັ່ງກ່າວໄດ້ຂັດຂວາງຂີດຄວາມສາມາດຂອງລັດຖະບານ ໃນການປະຕິບັດນະໂຍບາຍຂອງພາກລັດ ເພື່ອພັດທະນາພາກເອກະຊົນທີ່ມີການແຂ່ງຂັນຫຼາຍຂຶ້ນ ແລະ ສົ່ງເສີມຄວາມໄວ້ວາງໃຈໃນລະບົບອາກອນ

ໃນລະດັບສູງຂຶ້ນ ອີງໃສ່ການປະຕິບັດຕາມຄວາມສະໝັກໃຈ. ລະບຽບການທີ່ຫຍຸ້ງຍາກ ແລະ ຊັບຊ້ອນ ຊີ້ໃຫ້ເຫັນວ່າ ສປປ ລາວ ມີແນວໂນ້ມທີ່ຈະປະຖິ້ມການເກັບລາຍຮັບຢ່າງຫຼວງຫຼາຍ ທີ່ຈຳເປັນເພື່ອຄວາມຍືນຍົງຕໍ່ການໃຊ້ຈ່າຍຂອງພາກລັດ. ດັ່ງນັ້ນ, ມີຄວາມເປັນໄປໄດ້ສູງ ໃນການປະຕິບັດມາດຕະການທາງດ້ານນະໂຍບາຍ ເພື່ອເຮັດໃຫ້ການລົງທະບຽນ ແລະ ການຊຳລະອາກອນງ່າຍ ແລະ ມີປະສິດທິພາບຫຼາຍຂຶ້ນ ໂດຍຜ່ານລະບົບອັດຕະໂນມັດ ແລະ ໃນຂະນະດຽວກັນ ການສຶກສາ ແລະ ການຝຶກອົບຮົມທຸລະກິດ ກ່ຽວກັບວິທີການທີ່ດີສຸດທີ່ຈະນຳໃຊ້ສຳລັບຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດແບບອັດຕະໂນມັດແມ່ນສິ່ງຈຳເປັນ. ມາດຕະການດັ່ງກ່າວ ສາມາດຫຼຸດຜ່ອນຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ແລະ ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ. ຈາກນັ້ນ ສາມາດດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດໃຫ້ເຂົ້າມາ ສປປ ລາວ.

**ຜົນໄດ້ຮັບທີ່ສຳຄັນທີ 5: ການປະຕິຮູບສະພາບແວດລ້ອມ ຂອງການດຳເນີນທຸລະກິດທີ່ມີປະສິດທິພາບ ແລະ ຈິງຈັງ, ແມ່ນສິ່ງທີ່ຈຳເປັນ ເພື່ອສ້າງແຮງຈູງໃຈທາງທຸລະກິດ ແລະ ເພື່ອຊຸກຍູ້ການຟື້ນຕົວຢ່າງແຂງແຮງ ພາຍຫຼັງການແຜ່ລະບາດໂຄວິດ-19.**

**ໂດຍລວມແລ້ວ, ບົດລາຍງານສະບັບນີ້ໄດ້ສັງເກດເຫັນຄວາມຄືບໜ້າໃນຂະບວນການ ແລະ ການຈັດຕັ້ງປະຕິບັດການປະຕິຮູບນະໂຍບາຍ ເພື່ອແນໃສ່ຫຼຸດຜ່ອນອຸປະສັກຕໍ່ການພັດທະນາທຸລະກິດ ແລະ ຄວາມຫຼາກຫຼາຍໃນລະດັບແຂວງໃນປະເທດ. ຍັງມີຫຼາຍຊ່ອງທາງສຳລັບການປັບປຸງໃນຕໍ່ໜ້າ, ດັ່ງທີ່ໄດ້ຮັບຮູ້ຈາກ ລັດຖະບານຊຸດໃໝ່ ໃນແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດສະບັບ 9 ໄລຍະ 2021-2025**. ເສດຖະກິດ ແລະ ຊຸມຊົນທຸລະກິດຂອງ ສປປ ລາວ ໄດ້ຮັບຜົນກະທົບໜັກໜ່ວງຈາກການແຜ່ລະບາດ ພະຍາດໂຄວິດ-19, ການຜ່ານຜ່າສິ່ງທ້າທາຍທີ່ເກີດຈາກໂຄວິດ-19 ມັນຮຽກຮ້ອງໃຫ້ມີການປະຕິຮູບທີ່ສຳຄັນ ເພື່ອຫຼຸດຜ່ອນຕົ້ນທຶນ ແລະ ຄວາມສ່ຽງໃນການດຳເນີນທຸລະກິດ, ດັດສະນີ ProFIT ແລະ ຕົວຊີ້ວັດຍ່ອຍຂອງມັນ ສາມາດນຳໃຊ້ເປັນເຄື່ອງມືເພີ່ມເຕີມ ເພື່ອເສີມຂະຫຍາຍການສົນທະນາລະຫວ່າງພາກລັດ ແລະ ເອກະຊົນ ແລະ ອົງການປົກຄອງທ້ອງຖິ່ນໃນປະເທດ. ຜົນການສຶກສາໃນບົດລາຍງານນີ້ ຍັງສາມາດຊ່ວຍລັດຖະບານທຸກຂັ້ນໃນທົ່ວປະເທດ ໃນການກ້າວໄປສູ່ເປົ້າໝາຍຂອງການພັດທະນາແບບຍືນຍົງ (SDGs), ໂດຍສະເພາະແມ່ນ ມັນສາມາດຊ່ວຍປະເທດໃຫ້ບັນລຸໄດ້ SDG 8 ການມີວຽກເຮັດງານທຳທີ່ມີກຽດ ແລະ ເສດຖະກິດມີການຂະຫຍາຍຕົວ ແລະ SDG 9 ສົ່ງເສີມການຫັນເປັນອຸດສາຫະກຳ, ການປະດິດສ້າງ ແລະ ສ້າງພື້ນຖານໂຄງລ່າງທີ່ເຂັ້ມແຂງ. ຄວາມຄືບໜ້າຂອງ SDG ເຫຼົ່ານີ້ຮຽກຮ້ອງໃຫ້ມີການຈັດຕັ້ງປະຕິບັດຍຸດທະສາດການພັດທະນາ ແລະ ການປະຕິບັດນະໂຍບາຍໃນລະດັບຂັ້ນແຂວງ. ການສະໜັບສະໜູນການພັດທະນາພາກເອກະຊົນຢ່າງຄົບຖ້ວນ ແລະ ເທົ່າທຽມກັນ, ບົດລາຍງານ ProFIT ໄດ້ແຍກຕ່າງຫາກກ່ຽວກັບບົດບາດຍິງ-ຊາຍ ໃນສະພາບແວດລ້ອມການດຳເນີນທຸລະກິດອີກດ້ວຍ.



# ພາກສະເໜີ 1

## ບົດນຳ

ໄດ້ມີການສຶກສາທີ່ສຳຄັນກ່ຽວກັບສະພາບແວດລ້ອມການດຳເນີນທຸລະກິດ ແລະ ບັນຍາກາດການລົງທຶນ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ). ວິເຄາະໂດຍເວທີເສດຖະກິດໂລກ ໃນແງ່ຂອງດັດສະນີການແຂ່ງຂັນທົ່ວໂລກ (GCI) ແລະ ອົງການຊັບສິນທາງປັນຍາໂລກ ໄດ້ນຳໃຊ້ດັດສະນີ ນະວັດຕະກຳໂລກ (GII) ເນັ້ນໃຫ້ເຫັນວ່າ ປະເທດມີຄວາມຄືບໜ້າຢ່າງຫຼວງຫຼາຍ ໃນດ້ານບັນຍາກາດ ການລົງທຶນ ແລະ ສະພາບແວດລ້ອມການດຳເນີນທຸລະກິດ. ໃນຂະນະດຽວກັນ, ບົດລາຍງານເຫຼົ່ານີ້ຊີ້ໃຫ້ ເຫັນວ່າ ຍັງມີຊ່ອງວ່າງສຳຄັນໃນການປະຕິຮູບນະໂຍບາຍໄດ້ຕື່ມ ພ້ອມທັງປະຕິບັດລະບຽບການດຳເນີນທຸລະກິດຂອງປະເທດໃນລະດັບເຂດແຂວງໃຫ້ດີຂຶ້ນຕື່ມ. ສປປ ລາວ ສາມາດຍາດໄດ້ 50.1 ຈາກທັງໝົດ 100 ຄະແນນ, ຢູ່ໃນອັນດັບ 113 ຈາກທັງໝົດ 141 ເສດຖະກິດ ທີ່ກວມເອົາໃນບົດລາຍງານ GCI ປີ 2019. ບົດລາຍງານ GCI ເນັ້ນໜັກວ່າ ຂໍ້ກຳນົດການບໍລິຫານທີ່ຫຍຸ້ງຍາກສຳລັບການເລີ່ມຕົ້ນດຳເນີນທຸລະກິດ ມີຜົນກະທົບທີ່ບໍ່ດີຕໍ່ການຂັບເຄື່ອນທຸລະກິດ (ຕາຕະລາງ 1). ບົດລາຍງານ GII ໃນປີ 2021, ສປປ ລາວໄດ້ 20.2 ຈາກທັງໝົດ 100 ຄະແນນ, ຈັດຢູ່ອັນດັບທີ 113, ເຊິ່ງຄຸນນະພາບຂອງສະຖາບັນມີຜົນກະທົບຕໍ່ສະພາບແວດລ້ອມທຸລະກິດ, ຕົວຊີ້ວັດການຄຸ້ມຄອງລັດທົ່ວໂລກຂອງທະນາຄານໂລກປີ 2020 ຍັງໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງຄຸນນະພາບດ້ານກົດລະບຽບ ຂອງປະເທດ ເພື່ອສະໜັບສະໜູນການພັດທະນາພາກເອກະຊົນ.

**ຕາຕະລາງທີ 1: ປຽບທຽບການປະເມີນຂອງສາກົນ ສຳລັບ ສປປ ລາວ**

| ດັດສະນີການແຂ່ງຂັນທົ່ວໂລກ 4.0 ສະບັບ 2019 (ລະດັບເປີເຊັນ = 0 ຕ່ຳສຸດ, 100 ສູງສຸດ) | | ດັດສະນີນະວັດຕະກຳທົ່ວໂລກ 2021 (ລະດັບເປີເຊັນ = 0 ຕ່ຳສຸດ, 100 ສູງສຸດ) | | ຕົວຊີ້ວັດການຄຸ້ມຄອງລັດທົ່ວໂລກ 2020 (ລະດັບເປີເຊັນ = 0 ຕ່ຳສຸດ, 100 ສູງສຸດ) | |
|---|---|---|---|---|---|
| ໂດຍລວມ | 50.1 | ໂດຍລວມ | 20.2 | ສຽງ ແລະ ຄວາມສັດຊື່ຮັບຜິດຊອບ | 3.4 |
| ສະຖາບັນ | 42.8 | ສະຖາບັນ | 37.9 | ຄວາມໝັ້ນຄົງທາງດ້ານການເມືອງ | 69.3 |
| ໂຄງລ່າງພື້ນຖານ | 59.2 | ທຶນມະນຸດ ແລະ ການຄົ້ນຄວ້າວິໄຈ | 16.3 | ປະສິດທິພາບຂອງລັດຖະບານ | 22.6 |
| ການປັບໃຊ້ ICT | 44.2 | ໂຄງລ່າງພື້ນຖານ | 22.7 | ຄຸນນະພາບລະບຽບການ | 21.2 |
| ສະຖຽນລະພາບເສດຖະກິດມະຫາພາກ | 69.7 | ຄວາມຊັບຊ້ອນຂອງຕະຫຼາດ | 39.5 | ລະບຽບກົດໝາຍ | 20.7 |
| ສຸຂະພາບ | 60.9 | ຄວາມຊັບຊ້ອນທາງທຸລະກິດ | 24.3 | ການຄວບຄຸມການສໍ້ລາດບັງຫຼວງ | 14.9 |
| ທັກສະ | 51.3 | ຄວາມຮູ້ ແລະ ຜົນໄດ້ຮັບດ້ານເຕັກໂນໂລຊີ | 6.8 | | |
| ຕະຫຼາດສິນຄ້າ | 54.1 | ຜົນຜະລິດສ້າງສັນ | 17.6 | | |
| ຕະຫຼາດແຮງງານ | 57.0 | | | | |
| ລະບົບການເງິນ | 55.2 | | | | |
| ຂະໜາດຕະຫຼາດ | 42.1 | | | | |
| ການຂັບເຄື່ອນທຸລະກິດ | 36.8 | | | | |
| ຄວາມອາດສາມາດດ້ານນະວັດຕະກຳ | 28.0 | | | | |

ICT = ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ, Lao PDR = ສປປ ລາວ.
ແຫຼ່ງຂໍ້ມູນ: ເວທີເສດຖະກິດໂລກ; ອົງການຊັບສິນທາງປັນຍາໂລກ ແລະ ທະນາຄານໂລກ.

ໃນຊຸມປີມໍ່ໆນີ້, ກະຊວງອຸດສາຫະກຳ ແລະ ການຄ້າ (ກອຄ) ໃນ ສປປ ລາວ ໄດ້ຂຽນບົດລາຍງານການຄົ້ນຄວ້າວິໄຈໃນຫຼາຍດ້ານກ່ຽວກັບສະພາບແວດລ້ອມການດຳເນີນທຸລະກິດຂອງປະເທດ ແລະ ບັນຍາກາດ ການລົງທຶນ. ບົດລາຍງານເຫຼົ່ານີ້ແມ່ນສຸມໃສ່ການປະຕິຮູບຂັ້ນສູນກາງ, ເຊິ່ງຜົນໄດ້ຮັບທີ່ສຳຄັນຂອງບົດລາຍງານເຫຼົ່ານີ້ ແມ່ນ (i) ການປັບປຸງການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບລະບຽບການ ຜ່ານຊ່ອງທາງຂອງການລົງທະບຽນຂອງການ

ຂໍອະນຸຍາດດຳເນີນທຸລະກິດ; (ii) ການປະຕິຮູບຂໍ້ກຳນົດການກວດກາໃບອະນຸຍາດດຳເນີນທຸລະກິດ; (iii) ການປ່ຽນແປງໄປສູ່ລະບົບການອອກໃບອະນຸຍາດດຳເນີນທຸລະກິດ "ອີງຕາມຄວາມສ່ຽງ"; ແລະ (iv) ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະນຳຂັ້ນກະຊວງ ກ່ຽວກັບການປະຕິຮູບສະພາບແວດລ້ອມການດຳເນີນທຸລະກິດ.

ບົດລາຍງານຂອງສະຖາບັນລະຫວ່າງປະເທດ ໃຫ້ການປຽບທຽບທີ່ເປັນປະໂຫຍດທົ່ວໂລກ, ໃນຂະນະທີ່ບົດລາຍງານຂອງກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຍົກໃຫ້ເຫັນຫຼາຍບັນຫາພາຍໃນ ທັງໃນລະດັບຊາດ ແລະ ເຂດແຂວງ, ລັດຖະບານໃນປະເທດຈະຕ້ອງແກ້ໄຂຢ່າງວ່ອງໄວ ເພື່ອເຮັດໃຫ້ສະພາບບັນຍາກາດ ການລົງທຶນເປັນມິດກັບພາກທຸລະກິດຫຼາຍຂຶ້ນ. ຍົກຕົວຢ່າງ, ບົດລາຍງານ GCI ປີ 2019 ພົບວ່າ ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ແມ່ນມີການແຂ່ງຂັນສູງທີ່ສຸດໃນໂລກ, ແລະ ຍັງເປັນທີ່ຕັ້ງຂອງເສດຖະກິດ ລວມທັງ ສປປ ລາວ ທີ່ຍັງມີຂີດຄວາມສາມາດໃນການແຂ່ງຂັນຕໍ່າ. ບົດລາຍງານນີ້ໄດ້ຍົກໃຫ້ເຫັນ ຄວາມເປັນຫ່ວງອັນໃຫຍ່ຫຼວງກ່ຽວກັບບັນຫາທັງໝົດ-ຂະບວນການແກ້ໄຂຂໍ້ຂັດແຍ່ງທີ່ແກ່ຍາວຂອງປະເທດ ການສໍ້ລາດບັງຫຼວງຢ່າງກວ້າງຂວາງ, ການຄຸ້ມຄອງວິສາຫະກິດທີ່ບໍ່ມີປະສິດທິພາບ, ການນຳໃຊ້ອິນເຕີເນັດຍັງຈຳກັດ, ຄ່າໃຊ້ຈ່າຍຊໍ້າຊ້ອນ ແລະ ເວລາທີ່ຕ້ອງການສຳລັບການເລີ່ມຕົ້ນທຸລະກິດ.

ສະພາບແວດລ້ອມດ້ານລະບຽບການມີຜົນສະທ້ອນທີ່ສຳຄັນ ເພື່ອສ້າງຄວາມຫຼາກຫຼາຍແຫຼ່ງທີ່ມາຂອງການເຕີບໂຕຂອງປະເທດ, ການສ້າງວຽກເຮັດງານທຳທີ່ມີຄຸນນະພາບ ແລະ ການຂະຫຍາຍຕົວຂອງຊົນຊັ້ນກາງ ມັນຍັງສາມາດເຮັດໃຫ້ລາຍຮັບຂອງລັດຖະບານສູງຂຶ້ນ ເຊິ່ງມີຄວາມສຳຄັນຕໍ່ການຈັດຫາເງິນທຶນ ສຳລັບການບໍລິການສາທະລະນະ. ສປປ ລາວ ມີຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍຈຳນວນຫຼາຍ, ແຕ່ມີວິສາຫະກິດຂະໜາດກາງ ແລະ ໃຫຍ່ຈຳນວນໜ້ອຍ, ທຸລະກິດທີ່ບໍ່ເປັນທາງການ ແມ່ນກວມອັດຕາສ່ວນສູງ, 70% ຂອງວິສາຫະກິດລາຍງານວ່າບໍ່ໄດ້ຈົດທະບຽນວິສາຫະກິດ ກິດຈະກຳສ່ວນໃຫຍ່ເກີດຂຶ້ນໃນການບໍລິການທີ່ມີມູນຄ່າຕໍ່າເຊັ່ນ: ການຄ້າຂາຍຍ່ອຍທີ່ບໍ່ເປັນທາງການຂອງອາຫານ ແລະ ເຄື່ອງດື່ມ. ວິສາຫະກິດສ່ວນໃຫຍ່ບໍ່ໄດ້ເຮັດບັນຊີ ຫຼື ບໍ່ໄດ້ນຳໃຊ້ເຄື່ອງມືເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ຫຼື ບໍ່ສາມາດເຂົ້າເຖິງແຫຼ່ງທຶນໄດ້. ແຮງຈູງໃຈສຳລັບການເຕີບໂຕຂອງ ວິສາຫະກິດທີ່ເຂັ້ມແຂງແມ່ນຍັງບໍ່ພຽງພໍ, ໂດຍເຈົ້າຂອງວິສາຫະກິດລາຍງານວ່າສະພາບແວດລ້ອມການດຳເນີນທຸລະກິດແມ່ນໜຶ່ງໃນບັນຫາໃຫຍ່ທີ່ສຸດທີ່ພວກເຂົາປະເຊີນ.

ຜົນຂອງການປຽບທຽບລະຫວ່າງປະເທດພົບວ່າ ພາລະທາງດ້ານລະບຽບການແມ່ນສູງ, ການບໍ່ປະຕິບັດຕາມລະບຽບການ ແລະ ມາດຕະຖານຈຶ່ງເປັນເລື້ອງປົກກະຕິ. ວິສາຫະກິດຫຼາຍແຫ່ງໄດ້ປັບຍຸດທະສາດ ເພື່ອຫຼີກລ້ຽງຄວາມສົນໃຈຈາກລັດຖະບານ, ເຊິ່ງໄດ້ດຳເນີນການລົງທຶນໃນນະວັດຕະກຳ ທີ່ມີຄວາມຈຳເປັນ ສຳລັບການເຕີບໂຕຂອງທຸລະກິດ ແລະ ໄດ້ນຳພາພາກເອກະຊົນຢ່າງຕັ້ງໜ້າ. ໂດຍລວມ, ນະໂຍບາຍທີ່ບໍ່ມີ ປະສິດທິພາບກ່ຽວກັບສະພາບແວດລ້ອມທາງທຸລະກິດ ແລະ ກຸ່ມສະຖາບັນທີ່ອ່ອນແອ ໄດ້ປະກອບສ່ວນ ເຂົ້າໃນໂຄງສ້າງຂອງວິສາຫະກິດທີ່ບໍ່ເປັນທາງການສ່ວນໃຫຍ່ ເຊິ່ງມີຜະລິດຕິພາບຂອງຕົ້ນທຶນ ແລະ ແຮງງານທີ່ຕໍ່າ. ນະໂຍບາຍສົ່ງເສີມການແຂ່ງຂັນແມ່ນມີຄວາມຈຳເປັນ ເພື່ອປັບປຸງສະພາບແວດລ້ອມຂອງການ ດຳເນີນທຸລະກິດ ແລະ ຊຸກຍູ້ໃຫ້ວິສາຫະກິດໃນການສ້າງນະວັດຕະກຳ ແລະ ເຕີບໂຕ. ນີ້ແມ່ນລວມທັງການຫຼຸດຜ່ອນຂໍ້ຈຳກັດດ້ານລະບຽບການ ເພື່ອກະຕຸ້ນການຂະຫຍາຍຕົວຂອງວິສາຫະກິດ, ສ້າງຄວາມງ່າຍດາຍ ໃນການຂຶ້ນທະບຽນວິສາຫະກິດ, ສ້າງການປະສານງານຂອງສະຖາບັນໃຫ້ເຂັ້ມແຂງ ເພື່ອຫຼຸດການສໍ້ລາດບັງຫຼວງ ມາດຕະການເຫຼົ່ານີ້ຈະສ້າງຂີດຄວາມສາມາດໃນການແຂ່ງຂັນທີ່ຄາດຄະເນໄດ້ສຳລັບວິສາຫະກິດໃນແຕ່ລະແຂວງ.

ນອກນັ້ນ, ທີ່ຕັ້ງພູມສັນຖານຂອງ ສປປ ລາວ ຍັງຕິດກັບປະເທດກຳປູເຈຍ, ໄທ ແລະ ຫວຽດນາມ. ຫຼາຍ ວິສາຫະກິດສາມາດເລືອກປະເທດເພື່ອນບ້ານເຫຼົ່ານີ້ໄດ້ເຊັ່ນດຽວກັນ. ນັ້ນແມ່ນອີກເຫດຜົນໜຶ່ງຂອງປະເທດ ໂດຍລວມ ໂດຍສະເພາະແມ່ນບັນດາແຂວງເຫຼົ່ານີ້ທີ່ຢູ່ຕິດກັບ ສປປ ລາວ, ເພື່ອພັດທະນາສະພາບແວດລ້ອມທາງດ້ານທຸລະກິດທີ່ມີການແຂ່ງຂັນຫຼາຍຂຶ້ນ.

ຈາກບັນຫາດັ່ງກ່າວ, ໃນຊຸມປີມໍ່ໆນີ້, ລັດຖະບານໄດ້ອອກນະໂຍບາຍໃນການປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ເພື່ອເຮັດໃຫ້ການເຕີບໂຕຂອງວິສາຫະກິດມີປະສິດທິພາບ. ແຕ່ປີ 2018, ລັດຖະບານ ສປປ ລາວ ໄດ້ນຳສະເໜີການປະຕິຮູບລະບຽບທີ່ສຳຄັນ 4 ສະບັບ ເພື່ອສ້າງສະພາບແວດລ້ອມທາງທຸລະກິດທີ່ເອື້ອອຳນວຍພາຍໃນປະເທດ. ການປະຕິຮູບເຫຼົ່ານີ້ ພະຍາຍາມປັບປຸງຂັ້ນຕອນການດຳເນີນທຸລະກິດເພື່ອຫຼຸດຄ່າໃຊ້ຈ່າຍ ແລະ ເວລາໃຫ້ໄວຂຶ້ນ, ສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ໂປ່ງໃສ ແລະ ມີປະສິດທິພາບ (ຕາຕະລາງ 2). ການກໍ່ສ້າງຂໍ້ລິເລີ່ມເຫຼົ່ານີ້ ໄດ້ສ້າງໂອກາດອັນດີໃຫ້ລັດຖະບານສາມາດລົງເລິກການປະຕິຮູບ ແລະ ໝູນໃຊ້ພາກເອກະຊົນ ເພື່ອດຶງດູດການລົງທຶນໃນຂະແໜງທີ່ຕ້ອງການ ທັງຈາກພາຍໃນ ແລະ ຕ່າງປະເທດ. ໂຄງການທາງ

ລົດໄຟ ຊ່ວມລາວ-ຈີນ ເປີດດຳເນີນການໃນເດືອນທັນວາ, 2021 ໄດ້ສ້າງໂອກາດອັນໃຫຍ່ຫຼວງ ເພື່ອຊຸກຍູ້ກາລະໂອກາດທາງເສດຖະກິດໃໝ່. ປະຈຸບັນ ແມ່ນເວລາສຳຄັນທີ່ລັດຖະບານທຸກຂັ້ນຕ້ອງເພີ່ມທະວີການຄຸ້ມຄອງບໍລິຫານ ແລະ ເຮັດໃຫ້ການຟື້ນຕົວຂອງເສດຖະກິດທີ່ນຳພາໂດຍພາກເອກະຊົນ, ໃນຂະນະດຽວກັນ ຕ້ອງສ້າງຄວາມສະດວກຕື່ມ ເພື່ອເຮັດໃຫ້ຂັ້ນຕອນການດຳເນີນທຸລະກິດງ່າຍຂຶ້ນ.

**ຕາລະລາງທີ 2: ການປະຕິຮູບທຸລະກິດໃນຊ່ວງປີ 2018–2020**

| ການປະຕິຮູບ | ວັນທີ | ມາດຕະການທີ່ສຳຄັນ |
|---|---|---|
| ຄຳສັ່ງທ່ານນາຍົກລັດຖະມົນຕີ ເລກທີ 02/ນຍ | 1 ກຸມພາ 2018 | **ການປັບປຸງລະບຽບການ ແລະ ກົນໄກການປະສານງານກ່ຽວກັບການດຳເນີນທຸລະກິດຢູ່ ສປປ ລາວ**<br>• ປັງປຸງການດຳເນີນທຸລະກິດໃນ ສປປ ລາວ ໂດຍການປັບປຸງຂັ້ນຕອນ, ຫຼຸດເວລາ ແລະ ຄ່າໃຊ້ ຈ່າຍທີ່ຕ້ອງການ:<br>» ອອກໃບທະບຽນວິສາຫະກິດ ແລະ ເລກປະຈຳຕົວຜູ້ເສຍອາກອນ ໃນເວລາດຽວກັນ.<br>» ຍົກເລີກໃບສະໝັກຂໍອະນຸຍາດຕິດຕັ້ງປ້າຍວິສາຫະກິດ.<br>» ຫຼຸດຂັ້ນຕອນການອະນຸມັດການນຳເຂົ້າ ແລະ ສົ່ງອອກໃຫ້ໄດ້ຢ່າງໜ້ອຍ 50% ໃນປີ 2019; ແລະ<br>» ມີແບບຟອມສະໝັກຂໍອະນຸຍາດກໍ່ສ້າງ ລວມທັງລະບຽບການທີ່ກ່ຽວຂ້ອງ ຢູ່ໃນເວັບໄຊຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ.<br>• ການຈັດຕັ້ງປະຕິບັດກົນໄກການບໍລິການ ການລົງທຶນປະຕູດຽວ.<br>• ການປັບປຸງ ແລະ ປະກາດໃຊ້ນິຕິກຳ ແລະ ນະໂຍບາຍກ່ຽວກັບການດຳເນີນທຸລະກິດ ແລະ ການບໍລິການ.<br>• ສ້າງຄວາມກົມກຽວ ແລະ ການປະສານງານລະຫວ່າງອົງກອນຂອງລັດຖະບານ. |
| ດຳລັດທ່ານນາຍົກລັດຖະມົນຕີ ເລກທີ 03/2019 | 10 ມັງກອນ 2019 | **ການຮັບຮອງດຳເນີນທຸລະກິດພາຍໃຕ້ບັນຊີທຸລະກິດຄວບຄຸມ ແລະ ບັນຊີສຳປະທານຂອງ ສປປ ລາວ**<br>• ນິຍາມບັນຊີລາຍການທຸລະກິດຄວບຄຸມ ແລະ ບັນຊີສຳປະທານໃນ ສປປ ລາວທີ່ຕ້ອງການຂໍໃບອະນຸຍາດການລົງທຶນ:<br>» ບັນຊີທຸລະກິດຄວບຄຸມ - ແມ່ນລາຍການດຳເນີນທຸລະກິດທີ່ກະທົບເຖິງຄວາມໝັ້ນຄົງແຫ່ງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ, ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນການເຕີບໂຕຢ່າງໝັ້ນຄົງຂອງການພັດທະນາເສດຖະກິດ-ສັງຄົມ.<br>» ບັນຊີສຳປະທານ - ບັນຊີການເຄື່ອນໄຫວຂອງທຸລະກິດຂອງນັກລົງທຶນທີ່ໄດ້ຮັບການອະນຸມັດ ຈາກລັດຖະບານຕົ້ນຕໍ, ການສຳປະທານທີ່ດິນ, ການພັດທະນາເຂດເສດຖະກິດພິເສດ, ການພັດທະນາແຫຼ່ງພະລັງງານ ແລະ ໂທລະຄົມ.<br>• ກຳນົດແນວທາງ ແລະ ຂັ້ນຕອນການຍື່ນໃບສະໝັກ ໂດຍອີງຕາມກິດຈະກຳທາງທຸລະກິດ. |
| ຄຳສັ່ງທ່ານນາຍົກລັດຖະມົນຕີ ເລກທີ 12/ນຍ | 16 ຕຸລາ 2019 | **ການອຳນວຍຄວາມສະດວກໃນການນຳເຂົ້າ ແລະ ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຂົນສົ່ງ ແລະ ການເຄື່ອນຍ້າຍສິນຄ້າໃນ ສປປ ລາວ**<br>• ປັບປຸງຂັ້ນຕອນການແຈ້ງ ພາສີ-ອາກອນ ໂດຍການຫຼຸດຜ່ອນເວລາ ແລະ ຂັ້ນຕອນການນຳເຂົ້າ ແລະ ສົ່ງອອກສິນຄ້າໃຫ້ໜ້ອຍສຸດ.<br>• ການຈັດຕັ້ງປະຕິບັດການປະຕິຮູບລະບຽບການທາງດ້ານການຄ້າ ໂດຍການແກ້ໄຂບັນດາມາດຕະການທີ່ບໍ່ແມ່ນພາສີ ແລະ ອຸປະສັກຂັ້ນຕອນ/ເອກະສານ ທີ່ພາກເອກະຊົນປະເຊີນ.<br>• ຮັບປະກັນການປະຕິບັດການອຳນວຍຄວາມສະດວກທາງດ້ານການຄ້າ ຕາມກອບສັນຍາການອຳນວຍຄວາມສະດວກທາງດ້ານການຄ້າຂອງອົງການ ການຄ້າໂລກ. |
| ຄຳສັ່ງທ່ານນາຍົກລັດຖະມົນຕີ ເລກທີ 03/ນຍ | 21 ມັງກອນ 2020 | **ການປັບປຸງການບໍລິການທີ່ກ່ຽວຂ້ອງກັບການອອກໃບອະນຸຍາດລົງທຶນ ແລະ ທຸລະກິດ**<br>• ການປັບປຸງຮູບແບບ, ໄລຍະເວລາ ແລະ ອຸປະສັກໃນການອອກໃບອະນຸຍາດການລົງທຶນ ແລະ ທຸລະກິດ.<br>• ສ້າງຖານຂໍ້ມູນອອນລາຍອັນດຽວຂອງໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດລົງທຶນ, ໃບຢັ້ງຢືນທະບຽນອາກອນ ແລະ ໃບອະນຸຍາດປະກອບກິດຈະການ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ. |

Lao PDR = ສປປ ລາວ.
ແຫຼ່ງຂໍ້ມູນ: ສັງລວມໂດຍພະນັກງານຂອງທະນາຄານພັດທະນາອາຊີໄດ້ຈາກ Gazette, ກະຊວງຍຸດຕິທຳ.

ເຖິງຢ່າງໃດກໍຕາມ, ການເລີ່ມຕົ້ນຂອງການແຜ່ລະບາດຂອງພະຍາດໂຄວິດ-19 ໃນປີ 2019 ແລະ ໄດ້ສືບຕໍ່ໃນປີ 2020, 2021 ແລະ 2022 ໄດ້ປ່ຽນຮູບແບບຂອງການດຳເນີນທຸລະກິດ. ເຊັ່ນດຽວກັບປະເທດຕ່າງໆທົ່ວໂລກ, ລັດຖະບານ ສປປ ລາວ ໄດ້ຕອບໂຕ້ການແຜ່ລະບາດຂອງພະຍາດດັ່ງກ່າວ ດ້ວຍການຈຳກັດການເຄື່ອນຍ້າຍ ເຊິ່ງມັນໄດ້ຂັດຂວາງກິດຈະກຳຂອງການຜະລິດ ແລະ ບໍລິການ, ສິ່ງດັ່ງກ່າວ ໄດ້ສົ່ງຜົນກະທົບໃນທາງລົບຕໍ່ການເຕີບໂຕຂອງເສດຖະກິດ ແລະ ການເງິນພາກລັດ.

ເພື່ອຮັບມືກັບບັນຫາດັ່ງກ່າວ, ວາລະແຫ່ງຊາດເພື່ອແກ້ໄຂຄວາມຫຍຸ້ງຍາກທາງເສດຖະກິດ ແລະ ການເງິນ ຂອງປະເທດໄດ້ຖືກປະກາດໃນເດືອນສິງຫາ 2021. ເຖິງຢ່າງໃດກໍຕາມ, ການເຕີບໂຕຂອງເສດຖະກິດ ຍັງບໍ່ມີທ່າທີຈະຟື້ນຕົວຂຶ້ນສູ່ລະດັບກ່ອນການແຜ່ລະບາດຂອງຍາດໃນໄລຍະໃກ້ໆນີ້, ໂດຍການຄາດຄະເນ ການເຕີບໂຕຂອງລວມຍອດຜະລິດຕະພັນມວນລວມພາຍໃນປະເທດທີ່ແທ້ຈິງ ຄາດວ່າຈະບໍ່ເກີນ 4.5% ໃນປີ 2022 ແລະ 2023. ຄວາມຄາດຫວັງຂອງການຟື້ນຄືນ ແມ່ນເຊື່ອມໂຍງໂດຍກົງກັບການປັບປຸງຂີດຄວາມສາມາດຂອງລະບົບສຸຂະພາບຂອງປະເທດ ໃນການບໍລິຫານຈັດການປ້ອງກັນ ແລະ ຮັກສາໄວຣັດທີ່ສະໜອງລະດັບຄວາມຈຳເປັນຂອງຄວາມປອດໄພດ້ານສຸຂະພາບໃນປະເທດ ເຊັ່ນດຽວກັບນະໂຍບາຍ ປັບປຸງຄວາມເຊື່ອໝັ້ນຂອງນັກລົງທຶນເພື່ອການຟື້ນຕົວຂອງເສດຖະກິດ. ການຟື້ນຕົວຢ່າງໄວວາຈາກໂລກ ລະບາດດັ່ງກ່າວ ຂຶ້ນກັບນະໂຍບາຍທີ່ສະໜັບສະໜູນພາກທຸລະກິດ ແລະ ຄົວເຮືອນ ເພື່ອປັບຕົວເຂົ້າກັບ ຍຸກ “ປົກກະຕິແບບໃໝ່”. ສິ່ງດັ່ງກ່າວ ໄດ້ເນັ້ນໜັກເຖິງຄວາມຈຳເປັນໃນການປັບປຸງບັນຍາກາດຂອງການລົງທຶນ ແລະ ສະພາບແວດທາງທາງທຸລະກິດຂອງປະເທດ.

ລັດຖະບານໄດ້ກຳນົດ 5 ບັນຫາຫຼັກທີ່ສຸມໃສ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການເງິນ ໃນປີ 2021-2023. ບັນດານະໂຍບາຍດັ່ງກ່າວປະກອບມີ: (1) ດຶງດູດການຄ້າ ແລະ ການລົງທຶນ ເພື່ອສົ່ງເສີມການເຕີບໂຕຂອງເສດຖະກິດ; (2) ເພີ່ມທະວີການເກັບລາຍຮັບ ແລະ ການປະຕິບັດງົບປະມານ; (3) ປັບປຸງຜົນຕອບແທນທາງເສດຖະກິດຂອງການລົງທຶນຈາກຕ່າງປະເທດ; (4) ຄຸ້ມຄອງໜີ້ສາທາລະນະ; ແລະ (5) ແກ້ໄຂຄວາມສ່ຽງຂອງອັດຕາແລກປ່ຽນ ແລະ ເງິນກູ້ທີ່ບໍ່ເກີດດອກອອກຜົນໃນລະບົບການເງິນ. ຕິດພັນກັບສະພາບແວດລ້ອມຂອງການດຳເນີນທຸລະກິດ, ລັດຖະບານວາງແຜນກຳຈັດບັນດາສິ່ງກີດຂວາງ ທາງດ້ານລະບຽບການທີ່ວິສາຫະກິດປະເຊີນ ລວມທັງການລົບລ້າງຄວາມຊ້ຳຊ້ອນໃນຂັ້ນຕອນການອະນຸມັດການລົງທຶນ ແລະ ການປັບປຸງການບັງຄັບໃຊ້ ແລະ ການປະຕິບັດການປະຕິຮູບທຸລະກິດໃນມໍ່ໆນີ້. ຂະແໜງທຸລະກິດ ແລະ ພາກເອກະຊົນສ່ວນຫຼາຍ ຄາດຫວັງວ່າລັດຖະບານທຸກຂັ້ນ ຈະຫຼຸດຜ່ອນອຸປະສັກ ໃນການດຳເນີນທຸລະກິດທີ່ເຂົາເຈົ້າປະເຊີນຢ່າງເຂັ້ມຂຸ້ນ.

ເພື່ອເສີມຂະຫຍາຍການສຶກສາສະພາບແວດລ້ອມການດຳເນີນທຸລະກິດທີ່ມີຢູ່ໃນ ສປປ ລາວ, ບົດລາຍ ງານນີ້ພະຍາຍາມ (i) ສະໜອງຂໍ້ມູນເພີ່ມເຕີມ ແລະ ວິເຄາະກ່ຽວກັບສະພາບແວດລ້ອມການດຳເນີນທຸລະກິດ, ແຕ່ໄດ້ເອົາໃຈໃສ່ເປັນພິເສດ ເຖິງການຈັດຕັ້ງປະຕິບັດມາດຕະການປະຕິຮູບທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງລັດຖະບານຂັ້ນແຂວງ (ii) ສ້າງຄວາມເຂັ້ມແຂງໃຫ້ແກ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs); ແລະ (iii) ສະເໜີຂໍ້ແນະນຳກ່ຽວກັບລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນ ສາມາດຊ່ວຍຫຼຸດຜ່ອນຂໍ້ຈຳກັດຕໍ່ທຸລະກິດໃນປະເທດໄດ້ແນວໃດ. ພວກເຮົາຄວາດວ່າ ຜົນການປະເມີນຂອງບົດລາຍງານສະບັບນີ້ ຈະຊ່ວຍຊຸກຍູ້ການພັດທະນາພາກເອກະຊົນ ໂດຍການປັບປຸງສະພາບແວດລ້ອມການດຳເນີນທຸລະກິດຢູ່ໃນຂັ້ນທ້ອງຖິ່ນ.

ໂດຍສະເພາະ, ບົດລາຍງານນີ້ຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ກັບສຽງຂອງຈຸນລະວິສາຫະກິດ, ວິສະຫາກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ ກ່ຽວກັບອຸປະສັກທີ່ເຂົາເຈົ້າປະເຊີນ ຢູ່ໃນອົງການປົກຄອງຂັ້ນແຂວງ. ບົດລາຍງານດັ່ງກ່າວບໍ່ໄດ້ວັດແທກວ່າ ສະພາບແວດລ້ອມການດຳເນີນທຸລະກິດຂອງແຂວງ ຖືກຈຳກັດໂດຍປັດໄຈໂຄງລ່າງພື້ນຖານ, ຄຸນນະພາບຂອງກຳລັງແຮງງານ ຫຼື ອຸປະສັກຕໍ່ທຸລະກິດທີ່ເກີດ ຈາກການອຳນວຍຄວາມສະດວກທາງດ້ານການຄ້າລະຫວ່າງປະເທດທີ່ບໍ່ພຽງພໍ, ເຊິ່ງບັນຫາດັ່ງກ່າວບໍ່ຢູ່ພາຍໃຕ້ ການຄວບຄຸມຂອງອົງການປົກຄອງຂັ້ນແຂວງ.

ບົດລາຍງານນີ້ນຳໃຊ້ດັດສະນີ ProFIT ທີ່ໄດ້ຈາກການສຳຫຼວດເພື່ອ:

(i) ຈັດອັນດັບບັນດາແຂວງໃນ ສປປ ລາວ ຕາມການດຳເນີນງານ ແລະ ການສົ່ງເສີມວິສາຫະກິດພາກເອກະຊົນ;
(ii) ວິເຄາະຕົວຊີ້ວັດສະເພາະ ເພື່ອໃຫ້ເຂົ້າໃຈດີຂຶ້ນກ່ຽວກັບຈຸດແຂງ ແລະ ຈຸດອ່ອນຂອງແຕ່ລະແຂວງ ເພື່ອຊ່ວຍສົ່ງເສີມພັດທະນາທຸລະກິດເອກະຊົນ ແລະ ອົງການປົກຄອງແຂວງ ດຳເນີນການແກ້ໄຂຢ່າງທັນເວລາ;
(iii) ປະເມີນການຈັດຕັ້ງປະຕິບັດການປະຕິຮູບຂອງອົງການປົກຄອງທ້ອງຖິ່ນ, ແລະ ຕິດຕາມວ່າ ພວກເຂົາສາມາດ

ບັນລຸຕາມເປົ້າໝາຍທີ່ໄດ້ກໍານົດໄວ້ ໃນການປັບປຸງການຄຸ້ມຄອງທຸລະກິດ, ສະພາບແວດລ້ອມການດໍາເນີນທຸລະກິດ ແລະ ເສດຖະກິດຂອງແຂວງ; ແລະ

(iv) ເຮັດໃຫ້ບັນດາແຂວງມີການແຂ່ງຂັນກັນເພື່ອດຶງດູດການລົງທຶນ ໂດຍການປະຕິຮູບອົງການປົກຄອງທ້ອງຖິ່ນ, ນະໂຍບາຍ ແລະ ການຈັດຕັ້ງປະຕິບັດນະໂຍບາຍໃນການພັດທະນາເສດຖະກິດທ້ອງຖິ່ນ.



# ພາກສະເໜີ 2

## ວິທີການສຶກສາ ແລະ ລັກສະນະຂອງ ຜູ້ຕອບແບບສອບຖາມ

## A. ວິທີການສຶກສາ

ບົດລາຍງານນີ້ ແລະ ຜົນຂອງການປະເມີນດັ່ງກ່າວ ແມ່ນອີງໃສ່ການສໍາຫຼວດວິສາຫະກິດຈໍານວນ 1,357 ຫົວໜ່ວຍ ໃນ 17 ແຂວງທົ່ວໄປເທດ. ການສໍາຫຼວດຄັ້ງນີ້ ໄດ້ນໍາໃຊ້ການສຸ່ມຕົວຢ່າງແບບບັງເອີນໃນແຕ່ລະແຂວງ. ວິສາຫະກິດທີ່ຖືກຄັດເລືອກ ແມ່ນໄດ້ຕອບແບບສອບຖາມການປະເມີນອີງຕາມປະສົບການ ແລະ ຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ກັບອົງການປົກຄອງທ້ອງຖິ່ນ ອີງຕາມ 6 ຕົວຊີ້ວັດທີ່ສໍາຄັນ: (i) ຄວາມສະດວກໃນການສ້າງຕັ້ງທຸລະກິດ; (ii) ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ; (iii) ພາລະທາງ ດ້ານລະບຽບການ; (iv) ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ; (v) ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດກົດໝາຍ; ແລະ (vi) ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງທ້ອງຂັ້ນແຂວງ (ຮູບທີ 1).

**ຮູບທີ 1: ອົງປະກອບຂອງດັດສະນີ ProFIT**




ProFIT = ສິ່ງອໍານວຍຄວາມສະດວກການຄ້າ ແລະ ການລົງທຶນ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

ດ້ວຍຂໍ້ມູນກ່ຽວກັບປະສົບການ ແລະ ຄວາມຮັບຮູ້ຂອງ 1,357 ວິສາຫະກິດ, ການສໍາຫຼວດ ProFIT 2019 ແມ່ນໜຶ່ງໃນການສໍາຫຼວດທີ່ຄົບຖ້ວນ ແລະ ຄວບຄຸມຫຼາຍທີ່ສຸດໃນ ສປປ ລາວ ກ່ຽວກັບສະພາບແວດລ້ອມ ການດໍາເນີນທຸລະກິດພາຍໃນປະເທດ ແລະ ການຄຸ້ມຄອງເສດຖະກິດທ້ອງຖິ່ນ. ຜົນການປະເມີນຂອງບົດລາຍງານນີ້ຈະຊ່ວຍໃຫ້ອົງການປົກຄອງທ້ອງຖິ່ນ ສ້າງຄວາມເຂັ້ມແຂງໃນການປະຕິບັດນະໂຍບາຍພັດທະນາທຸລະກິດ.

ການສໍາຫຼວດໃນປີ 2019 ໄດ້ດໍາເນີນການແຕ່ເດືອນກັນຍາ ຫາ ເດືອນທັນວາ 2019 ໃນ 17 ແຂວງທົ່ວປະເທດ. ແຂວງໄຊສົມບູນ ທີ່ໄດ້ຖືກສ້າງຕັ້ງເປັນແຂວງໃໝ່ໃນປີ 2013 ບໍ່ໄດ້ລວມຢູ່ໃນການສໍາຫຼວດ ເນື່ອງຈາກສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ສອຄຊ) ບໍ່ໄດ້ສ້າງຕັ້ງສໍານັກງານຕົວແທນ ຢູ່ແຂວງດັ່ງກ່າວ. ການສໍາຫຼວດນີ້ໄດ້ລວມເອົາວິສາຫະກິດທີ່ເປັນສາມະຊິກຂອງ ສຄອຊ ຫຼື ບັນດາຫົວໜ່ວຍວິສາຫະກິດທີ່ສ້າງຕັ້ງໃໝ່ ທີ່ຂຶ້ນທະບຽນກັບກົມທະບຽນວິສາຫະກິດ, ກະຊວງອຸດສາຫະກໍາ ແລະ ການຄ້າ. ໃນແຕ່ລະແຂວງ, ໄດ້ນໍາໃຊ້ການສຸ່ມຕົວຢ່າງແບບບັງເອີນ, ໂດຍທີມຄົ້ນຄວ້າໄດ້ເຮັດວຽກຮ່ວມກັບ ສຄອຊ ຂັ້ນແຂວງ ເພື່ອຄັດເລືອກວິສາຫະກິດ.

ທີມງານຄົ້ນຄວ້າຂອງບົດລາຍງານນີ້ ຕ້ອງຮັບປະກັນວ່າຢ່າງໜ້ອຍ 60 ວິສາຫະກິດ ເຂົ້າຮ່ວມການປະເມີນ ໃນແຕ່ລະແຂວງ. ໂດຍສະເລ່ຍປະມານ 60% ຂອງວິສາຫະກິດທີ່ໄດ້ເຂົ້າຮ່ວມກອງປະຊຸມສໍາຫຼວດ ProFIT 2019

ທີ່ໄດ້ດຳເນີນແຕ່ວັນທີ 1 ຕຸລາ ຫາ 6 ພະຈິກ 2019. ໃນກອງປະຊຸມ ProFIT ຜູ້ບໍລິຫານວິສາຫະກິດທີ່ຖືກເລືອກ, ຫຼັງຈາກຕອບແບບສອບຖາມ ແລະ ໄດ້ຖືກເຊີນໃຫ້ປະກອບຄຳຄິດເຫັນກ່ຽວກັບສິ່ງທ້າທາຍ ແລະ ໂອກາດ ໃນສະພາບແວດລ້ອມການດຳເນີນທຸລະກິດໃນທ້ອງຖິ່ນຂອງພວກເຂົາ. ສຄອຊ ຍັງໄດ້ສົ່ງແບບສອບຖາມແບບອອນໄລໃຫ້ກັບວິສາຫະກິດ ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໄດ້. ວິສາຫະກິດທີ່ເຂົ້າຮ່ວມການສຳຫຼວດ ProFIT 2019 ກວມອັດຕາສ່ວນ 1% ຂອງວິສາຫະກິດທັງໝົດໃນປີ 2020, ແຕ່ລະແຂວງມີອັດຕາສ່ວນແຕກຕ່າງກັນຈາກ 0.5% ຢູ່ແຂວງຫຼວງພະບາງ ແລະ 4% ຢູ່ແຂວງເຊກອງ (ຕາຕະລາງທີ 3).

**ຕາຕະລາງທີ 3: ຂະໜາດຂອງກຸ່ມຕົວຢ່າງແບບຕາມແຂວງ**

| ແຂວງ | ຈຳນວນຜູ້ຕອບທີ່ໄດ້ຮັບໃນປີ 2017 | ຈຳນວນບັດເຊີນທີ່ສົ່ງ 2019 | ຈຳນວນຜູ້ຕອບທີ່ໄດ້ຮັບໃນປີ 2019 | ອັດຕາສ່ວນຜູ້ຕອບທີ່ໄດ້ຮັບ 2019 (%) | % ວິສາຫະກິດທີ່ຈົດທະບຽນ | % ວິສາຫະກິດທັງໝົດ |
|---|---|---|---|---|---|---|
| ນະຄອນຫຼວງວຽງຈັນ | 314 | 350 | 306 | 87.4 | 0.7 | 22.5 |
| ຜົ້ງສາລີ | 50 | 100 | 60 | 60.0 | 3.3 | 4.4 |
| ຫຼວງນໍ້າທາ | 50 | 100 | 61 | 61.0 | 2.3 | 4.5 |
| ອຸດົມໄຊ | 50 | 100 | 60 | 60.0 | 1.3 | 4.4 |
| ບໍ່ແກ້ວ | 50 | 100 | 60 | 60.0 | 1.3 | 4.4 |
| ຫຼວງພະບາງ | 75 | 120 | 70 | 58.3 | 0.5 | 5.2 |
| ຫົວພັນ | 64 | 100 | 60 | 60.0 | 1.2 | 4.5 |
| ໄຊຍະບູລີ | 57 | 100 | 64 | 64.0 | 0.8 | 4.8 |
| ຊຽງຂວາງ | 68 | 100 | 66 | 66.0 | 0.8 | 4.9 |
| ວຽງຈັນ | 78 | 120 | 81 | 67.5 | 0.7 | 6 |
| ບໍລິຄຳໄຊ | 61 | 100 | 66 | 66.0 | 1.3 | 4.8 |
| ຄຳມ່ວນ | 55 | 100 | 62 | 62.0 | 1.1 | 4.6 |
| ສະຫວັນນະເຂດ | 80 | 120 | 80 | 66.7 | 0.9 | 5.9 |
| ສາລາວັນ | 50 | 100 | 61 | 61.0 | 1.2 | 4.5 |
| ເຊກອງ | 55 | 100 | 60 | 60.0 | 4 | 4.4 |
| ຈຳປາສັກ | 74 | 120 | 80 | 66.7 | 0.7 | 5.9 |
| ອັດຕະປື | 50 | 100 | 60 | 60.0 | 3 | 4.4 |
| **ລວມ** | **1,281** | **2,030** | **1,357** | **66.8** | **1** | **100** |

ແຫຼ່ງຂໍ້ມູນ: ຜູ້ຂຽນ.

ແບບສອບຖາມ ProFIT 2019 ປະກອບດ້ວຍພາກສະເໜີ ຕໍ່ມາແມ່ນຄຳຖາມຂອງແຕ່ລະຫົວກັດສະນີຍ່ອຍ. ຢູ່ໃນພາກສະເໜີແມ່ນໄດ້ຖາມຜູ້ຕອບສະໜອງຂໍ້ມູນທົ່ວໄປກ່ຽວກັບທຸລະກິດຂອງເຂົາເຈົ້າ, ລວມທັງປະເພດ ແລະ ຂະໜາດຂອງທຸລະກິດ, ເພດຂອງຜູ້ບໍລິຫານ, ປະເພດທຸລະກິດ ແລະ ຂໍ້ມູນພື້ນຖານອື່ນໆ. ແບບສອບຖາມປີ 2019 ແມ່ນໄດ້ປັບປຸງຈາກສະບັບປີ 2017 ເພື່ອເກັບກຳຂໍ້ມູນລະອຽດຕາມກ່ຽວກັບເພດ ແລະ ໄລຍະເວລາທີ່ນຳໃຊ້ໃນການປະກອບເອກະສານທັງໝົດຈົນໄດ້ຮັບອະນຸຍາດໃນການດຳເນີນທຸລະກິດ. ແທນທີ່ຈະຂໍໃຫ້ຜູ້ຕອບເລືອກຈາກຫຼາຍຄຳຕອບເປັນວ່າງໆ, ການສຳຫຼວດປີ 2019 ຮຽກຮ້ອງໃຫ້ຜູ້ຕອບແບບສອບຖາມຂຽນຄຳຕອບເປັນຕົວເລກກ່ຽວກັບຄ່າໃຊ້ຈ່າຍ ແລະ ເວລາ ໃນການປະກອບເອກະສານທັງໝົດ ແລະ ຕົວຊີ້ວັດອື່ນໆ (ເບິ່ງເອະສານຊ້ອນທ້າຍ).

ບົດລາຍງານນີ້ ໄດ້ປຽບທຽບຄະແນນ ແລະ ຈັດອັນດັບຂອງແຕ່ລະແຂວງໃນທົ່ວທຸກແຂວງ ລວມທັງໄດ້ປຽບທຽບກັບຜົນການສໍາຫຼວດ ProFIT ປີ 2017. ການສໍາຫຼວດປີ 2017 ໄດ້ກວມເອົາທັງໝົດ 17 ແຂວງ, ແຕ່ຈໍານວນວິສາຫະກິດທີ່ເຂົ້າຮ່ວມໜ້ອຍກວ່າ ເຊິ່ງກຸ່ມຕົວຢ່າງທັງໝົດແມ່ນ 1,281 ຫົວໜ່ວຍ. ຫົວໜ່ວຍວິສາຫະກິດທີ່ສໍາຫຼວດໃນປີ 2019 ແມ່ນບໍ່ຄືກັນກັບຫົວໜ່ວຍວິສາຫະກິດທີ່ໄດ້ສໍາຫຼວດໃນປີ 2017, ເຖິງວ່າ ການສໍາຫຼວດທັງສອງອາດປະກອບມີຫົວໜ່ວຍວິສາຫະກິດທີ່ເຂົ້າຮ່ວມທັງສອງການສໍາຫຼວດ. ດັ່ງນັ້ນ, ຂໍ້ມູນ ແລະ ການປຽບທຽບຜົນໄດ້ຮັບລະຫວ່າງສອງການສໍາຫຼວດແມ່ນບໍ່ໄດ້ມາຈາກຊຸດຂໍ້ມູນອານຸກົມເວລາແບບຕັດຂວາງ. ດັ່ງນັ້ນ, ການປຽບທຽບບາງຄັ້ງແມ່ນຍັງມີຂໍ້ຈໍາກັດບາງປະການ. ເຖິງຢ່າງໃດກໍຕາມ, ມັນໄດ້ໃຫ້ແນວຄິດພື້ນຖານຂອງການປ່ຽນແປງສະພາບແວດລ້ອມການດໍາເນີນທຸລະກິດລະຫວ່າງປີ 2017 ແລະ 2019.

ຄໍາຖາມການສໍາຫຼວດປີ 2019 ໄດ້ມີການປ່ຽນແປງເລັກນ້ອຍຈາກສະບັບປີ 2017, ໂດຍໄດ້ມີການເກັບກໍາຂໍ້ມູນເພີ່ມເຕີມກ່ຽວກັບການເລີ່ມສ້າງຕັ້ງທຸລະກິດ ແລະ ຄວາມເປັນມິດຕໍ່ພາກທຸລະກິດ. ຄໍາຖາມໃນປີ 2017, ຄະແນນຂອງການເລີ່ມຕົ້ນສ້າງຕັ້ງທຸລະກິດ ແມ່ນອີງໃສ່ພຽງແຕ່ຄ່າໃຊ້ຈ່າຍ ແລະ ເວລາ ທີ່ຕ້ອງ ການ ເພື່ອໃຫ້ສໍາເລັດການຂຶ້ນທະບຽນວິສາຫະກິດ. ວິທີການໃຫ້ຄະແນນປີ 2019 ແມ່ນຍັງຮັກສາວິທີການນີ້ ໄວ້ເພື່ອໃຊ້ໃນການປຽບທຽບ. ເຖິງຢ່າງໃດກໍຕາມ, ຄໍາຖາມເພີ່ມຕື່ມກ່ຽວກັບຄ່າໃຊ້ຈ່າຍ ແລະ ເວລາທີ່ຕ້ອງການ ເພື່ອຂໍໃບອະນຸຍາດປະກອບກິດຈະການ ຫຼັງຈາກໄດ້ຮັບທະບຽນວິສາຫະກິດ ແມ່ນໄດ້ຖືກເພີ່ມເຂົ້າໃນແບບສອບຖາມການສໍາຫຼວດ,[1] ຜົນໄດ້ຮັບດັ່ງກ່າວແມ່ນໄດ້ຖືກນໍາສະເໜີໃນບົດລາຍງານນີ້.

ສຸດທ້າຍ, ການພິມເຜີຍແຜ່ບົດລາຍງານນີ້ໄດ້ຖືກຊັກຊ້າ ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19, ຂໍ້ມູນທີ່ເກັບກໍາໃນບົດລາຍງານ ໄດ້ສະແດງພາບລວມຂອງປະສົບຂອງທຸລະກິດຕ່າງໆ ໃນການຈັດຕັ້ງ ປະຕິບັດຄໍາສັ່ງຂອງທ່ານນາຍົກລັດຖະມົນຕີເລກທີ 02/2018 ໃນທ້າຍປີ 2019. ເມື່ອເວລາຜ່ານໄປ ການຈັດຕັ້ງປະຕິບັດການປະຕິຮູບຄວນຈະລວບລວມແຮງຜັກດັນຢ່າງຕັ້ງໜ້າ ແລະ ມີການປະຕິຮູບນະໂຍບາຍເພີ່ມຕື່ມ ອາດຊ່ວຍເຮັດໃຫ້ວາລະດັ່ງກ່າວມີຄວາມກ້າວໜ້າ. ໃນຂະນະດຽວກັນ, ມັນອາດນະມີຂໍ້ຈໍາກັດທີ່ກ່ຽວຂ້ອງກັບໂລກລະບາດທີ່ອາດເຮັດໃຫ້ການດໍາເນີນການປະຕິຮູບໃນຂັ້ນແຂວງຢຸດສະງັກ. ຕົວຢ່າງໃນປີ 2019, 11 ຂອງຈໍານວນທັງໝົດ 17 ແຂວງມີເວັບໄຊຂອງແຂວງ, ໃນປີ 2022 ໄດ້ຫຼຸດລົງເຫຼືອພຽງ 7 ແຂວງ. ເຊິ່ງບັນຫາດັ່ງກ່າວ, ມັນອາດຈະໃຊ້ເວລາຕື່ມ ໃນການເກັບກໍາຂໍ້ມູນໃນຮອບທີ 3 ໃຫ້ສໍາເລັດ.

## B. ວິທີການກໍານົດຄະແນນ ProFIT

ດັດສະນີ ProFIT ຖືກກໍານົດຈາກ 6 ດັດສະນີຍ່ອຍ, ແຕ່ລະດັດສະນີຍ່ອຍແມ່ນກໍານົດນໍ້າໜັກເທົ່າກັນ 16.7% ຂອງຄະແນນທັງໝົດ. ແຕ່ລະດັດສະນີຍ່ອຍຖືກຄໍານວນໂດຍອີງໃສ່ຄໍາຕອບຈາກແບບສອບຖາມ, ຄໍາຕອບແຕ່ລະຄໍາຖາມໃນການສໍາຫຼວດແມ່ນໃຫ້ຄະແນນຈາກ 0 ຫາ 100 ຄະແນນ, ເຊິ່ງ 0 ໝາຍເຖິງ ຕໍ່າສຸດ ແລະ 100 ແມ່ນສູງສຸດ ຫຼື ດີສຸດ. ຜົນໄດ້ຮັບຂອງແຂວງຖືກວັດແທກ ໂດຍປຽບທຽບກັບຄະແນນ ທີ່ດີສຸດທີ່ແຕ່ລະແຂວງໄດ້ຮັບ “ໄລຍະຫ່າງຈາກເສັ້ນຄາດປະມານ”. ຂໍ້ມູນທີ່ແຕກຕ່າງຈາກກຸ່ມຕົວຢ່າງ (outliers) ຖືກຕັດອອກ ກ່ອນທີ່ຜົນການສໍາຫຼວດຖືກຄໍານວນ.

ໂດຍຕາມຜົນການສໍາຫຼວດ, ແຕ່ລະແຂວງຖືກຈັດອັນດັບໂດຍອີງໃສ່ 6 ດັດສະນີຍ່ອຍ: (i) ການເລີ່ມຕົ້ນສ້າງທຸລະກິດ; (ii) ຄວາມໂປ່ງໃສ ແລະ ສາມາດເຂົ້າເຖິງຂໍ້ມູນຂ່າວສານ; (iii) ພາລະທາງດ້ານລະບຽບການ; (iv) ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ; (v) ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດກົດໝາຍ; ແລະ (vi) ຄວາມເປັນມິດຕໍ່ກັບພາກທຸລະກິດຂອງອົງການປົກຄອງແຂວງ (ຕາຕະລາງ 4). ດັດສະນີດັ່ງກ່າວຖືກ ເລືອກຍ້ອນອົງການປົກຄອງແຂວງມີອໍານາດໃນການບັງຄັບໃຊ້ກົດລະບຽບທີ່ຄວບຄຸມດ້ານສະພາບແວດລ້ອມການດໍາເນີນທຸລະກິດເຫຼົ່ານີ້. ບັນຫາທີ່ຕິດພັນກັບການອໍານວຍຄວາມສະດວກທາງດ້ານ ການຄ້າລະຫວ່າງປະເທດ, ອົງປະກອບທີ່ສໍາຄັນຂອງສະພາບແວດລ້ອມການດໍາເນີນທຸລະກິດໂດຍລວມ ຂອງປະເທດແມ່ນບໍ່ໄດ້ລວມຢູ່ໃນບົດລາຍງານນີ້, ເນື່ອງຈາກວ່າສ່ວນໃຫຍ່ແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງລັດຖະບານຈາກສູນກາງ.

1 ຕົວຢ່າງ, ຫຼວງພະບາງແມ່ນມີທຸລະກິດທ່ອງທ່ຽວຫຼາຍ ທີ່ຕ້ອງການຂໍໃບອະນຸຍາດດໍາເນີນທຸລະກິດທ່ອງທ່ຽວ, ໃນຂະນະທີ່ແຂວງເຊກອງແມ່ນມີທຸລະກິດກ່ຽວກັບສວນຄົວຫຼາຍທີ່ຕ້ອງການຂໍໃບອະນຸຍາດການດໍາເນີນທຸລະກິດດ້ານກະສິກໍາ.

**ຕາຕະລາງທີ 4: ອົງປະກອບຂອງການສຳຫຼວດ ProFIT 2019 ແລະ ດັດສະນີຍ່ອຍ**

| ດັບສະນີຍ່ອຍ | % | ຕົວຊີ້ວັດ | % |
|---|---|---|---|
| **1. ການເລີ່ມຕົ້ນສ້າງທຸລະກິດ** | 100 | ເວລາທີ່ນຳໃຊ້ໃນການຂໍໃບທະບຽນວິສາຫະກິດ | 50 |
| | | ຄ່າໃຊ້ຈ່າຍທີ່ນຳໃນການຂໍໃບທະບຽນວິສາຫະກິດ | 50 |
| **2. ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ** | 100 | ການເຂົ້າເຖິງເອກະສານທາງການຂອງແຂວງ | 60 |
| | | ເວັບໄຊທາງການຂອງແຂວງ | 20 |
| | | ໂອກາດໃນການປະກອບຄຳເຫັນກ່ຽວກັບຮ່າງລະບຽບຂອງແຂວງ | 20 |
| **3. ພາລະທາງດ້ານລະບຽບການ** | 100 | ການກວດສອບຂອງເຈົ້າໜ້າທີ່ກ່ຽວຂ້ອງ | 30 |
| | | ເວລາທີ່ນຳໃຊ້ໃນການຕໍ່ໃບທະບຽນອາກອນໃໝ່ | 35 |
| | | ຄ່າໃຊ້ຈ່າຍທີ່ນຳໃຊ້ໃນການຕໍ່ໃບທະບຽນອາກອນໃໝ່ | 35 |
| **4. ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ** | 100 | ອັດຕາສ່ວນຂອງຄ່າໃຊ້ຈ່າຍທີ່ບໍ່ເປັນທາງການຕໍ່ລາຍຮັບທັງໝົດ | 40 |
| | | ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການສາມາດຮັບໄດ້ | 15 |
| | | ການເຈລະຈາຕໍ່ລອງການຈ່າຍອາກອນ | 15 |
| | | ການໃຊ້ຈ່າຍທີ່ບໍ່ເປັນທາງການແມ່ນຈຳເປັນ | 15 |
| | | ການເປີດເຜີຍຂໍ້ມູນການໃຊ້ຈ່າຍທາງການ | 15 |
| **5. ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດ ກົດໝາຍ** | 100 | ຄວາມໄດ້ປຽບຂອງການມີສາຍພົວພັນໃກ້ຊິດກັບພາກລັດ | 20 |
| | | ການໃຫ້ບູລິມະສິດວິສາຫະກິດຂອງລັດ | 20 |
| | | ຄວາມສອດຄ່ອງກັບນະໂຍບາຍຈາກສູນກາງ | 20 |
| | | ການຮ່ວມມືພາຍໃນເພື່ອສະໜັບສະໜູນພາກທຸລະກິດ | 20 |
| | | ລະບຽບຂອງແຂວງແຕກຕ່າງຈາກສູນກາງ | 20 |
| **6. ຄວາມເປັນມິດຕໍ່ພາກທຸລະກິດ** | 100 | ທັດສະນະຄະຕິຂອງອົງການປົກຄອງຂັ້ນແຂວງ | 25 |
| | | ການສະໜັບສະໜູນຂອງອົງການປົກຄອງແຂວງ | 25 |
| | | ການນຳໃຊ້ວິທີການໃໝ່ໃນການແກ້ໄຂບັນຫາ | 25 |
| | | ຄວາມຮັບຮູ້ຄຳສັ່ງເລກທີ 02/2018 | 25 |

PMO = ຄຳສັ່ງນາຍົກລັດຖະມົນຕີ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

## C. ການຈັດກຸ່ມແຂວງເພື່ອການວິເຄາະ

ສິ່ງທ້າທາຍ ແລະ ໂອກາດ ສຳລັບວິສາຫະກິດໃນປະເທດ ແມ່ນແຕກຕ່າງກັນໄປໃນແຕ່ລະແຂວງ, ແຂວງຂະໜາດໃຫຍ່ ບັນດາວິສາຫະກິດຕ້ອງຈັດການກັບລະບົບບໍລິຫານລັດ ທີ່ເປັນພາລະໃຫ້ພວກເຂົາຍ້ອນການສະໝັກຂອງທຸລະກິດຈຳນວນຫຼາຍ, ໃນຂະນະທີ່ແຂວງຂະໜາດນ້ອຍ, ພະນັກງານທ້ອງຖິ່ນເອງ ອາດຈະບໍ່ຄຸ້ນເຄີຍກັບລະບຽບການ. ອີງຕາມການປຶກສາຫາລືຢ່າງເປີດກວ້າງໃນຕອນຕົ້ນກັບ ສຄອຊ ແລະ ໄດ້ມີສ່ວນຮ່ວມໃນການສຶກສາ, ທີມງານຄົ້ນຄວ້າໄດ້ແບ່ງແຂວງອອກເປັນ 3 ຂະໜາດຄື: (i) ແຂວງຂະໜາດນ້ອຍມີປະຊາກອນ 100,000-200,000 ຄົນ; (ii) ແຂວງຂະໜາດກາງມີປະຊາກອນລະຫວ່າງ 200,000-400,000 ຄົນ; ແລະ (iii) ແຂວງຂະໜາດໃຫຍ່ມີປະຊາກອນຫຼາຍກວ່າ 400,000 ຄົນ (ຕາຕະລາງ 5).

**ຕາຕະລາງທີ 5: ແຂວງແບ່ງຕາມຂະໜາດປະຊາກອນ**

| ແຂວງຂະໜາດໃຫຍ່ | ປະຊາກອນ >400,000 |
|---|---|
| ສະຫວັນນະເຂດ | 969,697 |
| ນະຄອນຫຼວງວຽງຈັນ | 820,940 |
| ຈໍາປາສັກ | 694,023 |
| ຫຼວງພະບາງ | 431,889 |
| ວຽງຈັນ | 419,090 |
| **ແຂວງຂະໜາດກາງ** | **ປະຊາກອນ 200,000–400,000** |
| ສາລະວັນ | 396,697 |
| ຄໍາມ່ວນ | 392,052 |
| ໄຊຍະບູລີ | 381,376 |
| ອຸດົມໄຊ | 307,622 |
| ຫົວພັນ | 289,393 |
| ບໍລິຄໍາໄຊ | 273,691 |
| ຊຽງຂວາງ | 244,684 |
| **ແຂວງຂະໜາດນ້ອຍ** | **ປະຊາກອນ <200,000** |
| ບໍ່ແກ້ວ | 179,243 |
| ຜົ້ງສາລີ | 177,989 |
| ຫຼວງນໍ້າທາ | 175,753 |
| ອັດຕະປື | 139,628 |
| ເຊກອງ | 113,048 |

ແຫຼ່ງຂໍ້ມູນ: ການສໍາຫຼວດຄົວເຮືອນ ແລະ ປະຊາກອນ, 2014.

## D. ລັກສະນະຂອງຜູ້ຕອບແບບສອບຖາມ

ໃນການສໍາຫຼວດ ProFIT 2019 ມີວິສາຫະກິດເຂົ້າຮ່ວມ 1,357 ຫົວໜ່ວຍ ຈາກ 17 ແຂວງໃນທົ່ວປະເທດ, ແຕ່ລະແຂວງອັດຕາການຕອບແບບສອບຖາມຢ່າງໜ້ອຍແມ່ນ 60%, ຍົກເວັ້ນແຂວງຫຼວງພະບາງ ທີ່ມີອັດຕາການຕອບແບບສອບຖາມ 58.3%. ຜົນຂອງການສໍາຫຼວດໄດ້ນໍາສະເໜີເປັນຮູບສະແດງ ໂດຍແຍກຕາມຂະແໜງການ, ອາຍຸ, ເພດ ຂອງຜູ້ບໍລິຫານ ແລະ ຂະໜາດຂອງວິສາຫະກິດ (ຮູບທີ 2). ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ກວມອັດຕາສ່ວນເຖິງ 93.5% ຂອງຈໍານວນວິສາຫະກິດທີ່ເຂົ້າຮ່ວມທັງໝົດ, ໃນຂະນະທີ່ 6.5% ຂອງຜູ້ຕອບແບບສອບຖາມແມ່ນວິສາຫະກິດຂະໜາດໃຫຍ່. ຖ້າແບ່ງຕາມຂະແໜງການ, 80.6% ແມ່ນວິສາຫະກິດຂະແໜງອຸດສາຫະກໍາ, ບໍລິການ ແລະ ການຄ້າ. ປະມານ 34% ຂອງວິສາຫະກິດທັງໝົດແມ່ນ ສ້າງຕັ້ງລະຫວ່າງປີ 2015-2019. ອີງຕາມການສໍາຫຼວດເສດຖະກິດຄັ້ງທີ 3 ໃນປີ 2020, ວິສາຫະກິດຂະໜາດກາງທີ່ມີກໍາລັງແຮງງານແຕ່ 51-99 ຄົນ ກວມອັດຕາສ່ວນພຽງ 0.7% ຂອງວິສາຫະກິດໃນ ສປປ ລາວ, ໃນຂະນະທີ່ວິສາຫະກິດຂະໜາດໃຫຍ່ (ກໍາລັງແຮງງານຫຼາຍກວ່າ 100 ຄົນ) ກວມອັດຕາສ່ວນພຽງ 0.2% ຂອງວິສາຫະກິດທັງໝົດ. ນີ້ໝາຍຄວາມວ່າຂໍ້ມູນຂອງ ProFIT ອາດມີຄວາມລໍາອຽງເລັກນ້ອຍຕໍ່ວິສາຫະກິດຂະໜາດໃຫຍ່, ຍ້ອນວ່າກຸ່ມຕົວຢ່າງການສໍາຫຼວດໄດ້ເກັບກໍາອັດຕາສ່ວນຂອງວິສາຫະກິດເຫຼົ່ານີ້ຂ້ອນຂ້າງຫຼາຍ.

**ຮູບທີ 2: ລັກສະນະຂອງວິສາຫະກິດ**
(% ຂອງວິສາຫະກິດ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ແບບສອບຖາມການສໍາຫຼວດໄດ້ຖືກປັບປຸງ ໂດຍລວມເອົາຄໍາຖາມກ່ຽວກັບເພດຂອງຜູ້ບໍລິຫານ ແລະ ຖ້າຜູ້ຖືຮຸ້ນແມ່ນເພດຍິງເປັນເຈົ້າຂອງ 30% ຫຼື ຫຼາຍກວ່ານັ້ນຂອງຈໍານວນຮຸ້ນວິສາຫະກິດທັງໝົດ. ປະມານ 36% ຂອງຜູ້ຕອບແບບສອບຖາມທັງໝົດກ່າວວ່າ ຜູ້ບໍລິຫານຂອງເຂົາເຈົ້າແມ່ນເພດຍິງ. ຜົນການສຶກສາ ແມ່ນຄ້າຍຄືກັບການສໍາຫຼວດເສດຖະກິດຄັ້ງທີ 3 ປີ 2020 ທີ່ພົບວ່າ 43.8% ຂອງການສໍາຫຼວດວິສາຫະກິດແມ່ນມີຜູ້ຈັດການ ຫຼື ຜູ້ບໍລິຫານເປັນເພດຍິງ.[2]

[2] ບົດລາຍງານອີກສະບັບໜຶ່ງຈະຕີພິມ ລວມເອົາການວິເຄາະທຸລະກິດ, ບົດບາດຍິງຊາຍ ສິ່ງອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ. ບົດລາຍງານສະບັບນີ້ ແມ່ນຕັ້ງໃຈນໍາໃຊ້ບັນດາຂໍ້ມູນເຫຼົ່ານີ້ ວິເຄາະຜົນກະທົບທີ່ກະທົບໃສ່ພາກທຸລະກິດຍິງໃນສະພາບເສດຖະກິດທ້ອງຖິ່ນ ແລະ ແວດລ້ອມການດໍາເນີນທຸລະກິດ.



# ພາກສະເໜີ 3

## ຜົນຂອງການສຳຫຼວດ ແລະ ດັດສະນີ ProFIT 2019

## A. ການຈັດອັນດັບ ແລະ ຄະແນນ ProFIT ສໍາລັບແຂວງຂະໜາດໃຫຍ່, ກາງ ແລະ ນ້ອຍ

ຄະແນນສະເລ່ຍຂອງທຸກແຂວງໃນການສໍາຫຼວດ ProFIT 2019 ແມ່ນ 55.4, ເຊິ່ງ 6.6% ສູງກວ່າຄະແນນສະເລ່ຍໃນປີ 2017, ຊີ້ໃຫ້ເຫັນເຖິງມີການປັບປຸງສະພາບແວດລ້ອມການດໍາເນີນທຸລະກິດໃນປະເທດ. ຍົກເວັ້ນແຂວງອັດຕະປື, ທຸກແຂວງໄດ້ຄະແນນ ProFIT ປີ 2019 ສູງກວ່າ ປີ 2017 (ຕາຕະລາງ 6).

**ຕາຕະລາງທີ 6: ດັດສະນີ ProFIT 2017 ແລະ 2019**

| ແຂວງ | ຄະແນນ ProFIT 2019 | ຄະແນນ ProFIT 2017 | ຄະແນນ ProFIT ການປ່ຽນແປງ |
|---|---|---|---|
| **ຂະໜາດໃຫຍ່** | **53.7** | **44.1** | **9.6** |
| ຫຼວງພະບາງ | 49.2 | 38.6 | 10.6 |
| ວຽງຈັນ | 62.6 | 53.8 | 8.8 |
| ນະຄອນຫຼວງວຽງຈັນ | 52.4 | 46.2 | 6.2 |
| ສະຫວັນນະເຂດ | 58.8 | 43.0 | 15.8 |
| ຈໍາປາສັກ | 45.8 | 39.1 | 6.7 |
| **ຂະໜາດກາງ** | **57.8** | **51.4** | **6.5** |
| ອຸດົມໄຊ | 56.6 | 55.1 | 1.5 |
| ຫົວພັນ | 59.9 | 54.4 | 5.5 |
| ໄຊຍະບູລີ | 59.4 | 50.5 | 8.9 |
| ຊຽງຂວາງ | 59.0 | 55.7 | 3.3 |
| ບໍລິຄໍາໄຊ | 54.5 | 49.9 | 4.6 |
| ຄໍາມ່ວນ | 54.9 | 45.0 | 9.9 |
| ສາລະວັນ | 60.5 | 48.9 | 11.6 |
| **ຂະໜາດນ້ອຍ** | **53.6** | **49.9** | **3.7** |
| ຜົ້ງສາລີ | 57.4 | 51.6 | 5.8 |
| ຫຼວງນໍ້າທາ | 54.5 | 43.8 | 10.7 |
| ບໍ່ແກ້ວ | 52.9 | 51.4 | 1.5 |
| ເຊກອງ | 55.2 | 48.9 | 6.3 |
| ອັດຕະປື | 47.9 | 53.7 | -5.8 |
| **ລວມ** | **55.4** | **48.8** | **6.6** |

ProFIT = ສິ່ງອໍານວຍຄວາມສະດວກການຄ້າ ແລະ ການລົງທຶນ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

ບັນດາແຂວງຂະໜາດໃຫຍ່ມີທ່າອຽງທີ່ມີການປ່ຽນແປງຫຼາຍທີ່ສຸດໃນຄະແນນຂອງພວກເຂົາ, ໂດຍມີທັງຄະແນນຕໍ່າສຸດ ແລະ ສູງສຸດ (ຮູບທີ 3).

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນມີຄະແນນສູງສຸດ 62.6 ຄະແນນ, ຮອງລົງມາແມ່ນແຂວງ ສະຫວັນນະເຂດ ໄດ້ 58.8 ຄະແນນ, ໃນຂະນະທີ່ແຂວງຈຳປາສັກໄດ້ຄະແນນຕ່ຳສຸດ ໂດຍໄດ້ຕ່ຳກວ່າ 50 ຄະແນນ.
- **ແຂວງຂະໜາດກາງ**, ແຂວງສາລາວັນໄດ້ຄະແນນສູງສຸດ 60.5 ຄະແນນ, ແຂວງບໍລິຄຳໄຊມີຄະແນນໜ້ອຍສຸດໄດ້ 54.5 ຄະແນນ.

**ຮູບທີ 3: ຄະແນນ ProFIT, 2019**
(100 ຄະແນນ)




ProFIT = ສິ່ງອຳນວຍຄວາມສະດວກການຄ້າ ແລະ ການລົງທຶນ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

- **ແຂວງຂະໜາດນ້ອຍ**, ແຂວງຜົ້ງສາລີແມ່ນໄດ້ຄະແນນສູງສຸດ 57.4 ຄະແນນ, ຕໍ່ມາແມ່ນແຂວງ ເຊກອງ, ຫຼວງນ້ຳທາ ແລະ ບໍ່ແກ້ວ. ແຂວງອັດຕະປືໄດ້ໜ້ອຍກວ່າ 50 ຄະແນນ, ເຖິງວ່າຈະໄດ້ ອັນດັບທີ 1 ໃນບັນດາແຂວງຂະໜາດນ້ອຍໃນດັດສະນີ ProFIT ປີ 2017.

ຄວາມຄິດເຫັນຂອງພາກເອກະຊົນຕໍ່ສະພາບແວດລ້ອມການດຳເນີນທຸລະກິດຂອງແຂວງອັດຕະປື ແມ່ນຫຼຸດລົງລະຫວ່າງປີ 2017 ແລະ 2019 ໃນທຸກຂົງເຂດທີ່ຄອບຄຸມໃນບົດລາຍງານນີ້, ດັດສະນີຍ່ອຍທີ່ຫຼຸດລົງ ຫຼາຍທີ່ສຸດແມ່ນ ຄວາມຄິດເຫັນກ່ຽວກັບຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ, 60% ຂອງຜູ້ຕອບແບບສອບຖາມຈາກແຂວງເຫັນວ່າ ອົງການປົກຄອງແຂວງປະຕິບັດໄດ້ຕ່ຳກວ່າຄວາມຄາດຫວັງຂອງເຂົາເຈົ້າ ໃນດ້ານການອຳນວຍຄວາມສະດວກໃນການພັດທະນາພາກເອກະຊົນ.

ເຖິງຢ່າງໃດກໍຕາມ, ຍົກເວັ້ນແຂວງອັດຕະປື ທຸກແຂວງໄດ້ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ໃນປີ 2019 ທຽບກັບປີ 2017 (ຮູບທີ 4). ການດຳເນີນງານຂອງແຂວງອັດຕາປືຫຼຸດລົງ ຍ້ອນການແກ່ຍາວເວລາ ແລະ ຄ່າໃຊ້ຈ່າຍສູງໃນການຈົດທະບຽນວິສາຫະກິດ, ປະກອບການການກວດສອບຈາກໜ່ວຍງານຕ່າງໆຫຼາຍຄັ້ງ ເມື່ອທຽບກັບແຂວງອື່ນໆ.

- **ແຂວງຂະໜາດໃຫຍ່**, ຄວາມຄິດເຫັນຂອງວິສາຫະກິດ ກ່ຽວກັບສະພາບແວດລ້ອມດ້ານນະໂຍບາຍຂອງອົງການປົກຄອງທ້ອງຖິ່ນ ແມ່ນມີການປັບປຸງດີຂຶ້ນຫຼາຍ, ເຊິ່ງແຂວງສະຫວັນນະເຂດມີການປັບປຸງຫຼາຍສຸດ ແລະ ນະຄອນຫຼວງວຽງຈັນມີການປັບປຸງໜ້ອຍສຸດ.
- **ແຂວງຂະໜາດກາງ**, ບັນດາແຂວງເຫຼົ່ານີ້ໄດ້ຄະແນນສະເລ່ຍເພີ່ມຂຶ້ນ 6.5 ຄະແນນ ລະຫວ່າງປີ 2017 ແລະ

2019. ແຂວງສາລະວັນມີການປັບປຸງຫຼາຍສຸດ ແລະ ແຂວງອຸດົມໄຊແມ່ນມີການປັບປຸງໜ້ອຍສຸດ.

- **ແຂວງຂະໜາດນ້ອຍ**, ແຂວງເຫຼົ່ານີ້ເຫັນວ່າມີການປັບປຸງ ເຊິ່ງໃນນັ້ນແຂວງຫຼວງນໍ້າທາມີການປັບປຸງຫຼາຍສຸດ, ຕໍ່ມາແມ່ນແຂວງເຊກອງ, ຜົ້ງສາລີ ແລະ ບໍ່ແກ້ວ.

**ຮູບທີ 4: ປຽບທຽບຄະແນນ ProFIT ປີ 2017 ແລະ 2019**
(ຄະແນນ)




ProFIT = ສິ່ງອຳນວຍຄວາມສະດວກການຄ້າ ແລະ ການລົງທຶນ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

ຄຳສັ່ງທ່ານນາຍົກລັດຖະມົນຕີ ເລກທີ 02 ກຸມພາ, 2018 (PMO 02/2018) ໄດ້ອອກມາເພື່ອຫຼຸດຜ່ອນພາລະດ້ານລະບຽບການໃຫ້ແກ່ວິສາຫະກິດ ໂດຍການເອົາບາງຂໍ້ກຳນົດເອກະສານທີ່ບໍ່ຈຳເປັນອອກ, ການປ່ຽນແປງທີ່ສຳຄັນຍັງຄົງແມ່ນມາດຕະຖານໃນທົ່ວທຸກແຂວງ ໂດຍອີງຕາມຄະແນນ ProFIT. ຄວາມຄືບໜ້າຍັງບໍ່ໄດ້ຮັບຜົນເທົ່າທີ່ຄວນ ໂດຍສະເພາະແມ່ນກ່ຽວກັບຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວ ສານ (ຮູບທີ 5). ນີ້ຍັງສືບຕໍ່ເປັນຫົວຂໍ້ທີ່ເກີດຂຶ້ນເລື້ອຍໆ ໃນທົ່ວວິສາຫະກິດ 1,357 ຫົວໜ່ວຍ. ສ່ວນໃຫຍ່ທີ່ໄດ້ສຳຫຼວດສຳລັບການສຶກສານີ້.

- **ແຂວງຂະໜາດໃຫຍ່**, ສາມາດສັງເກດເຫັນໄດ້ມີການປັບປຸງກ່ຽວກັບການຜ່ອນຄາຍພາລະທາງດ້ານລະບຽບການຂອງທຸລະກິດ, ຕໍ່ມາແມ່ນຄວາມສອດຄ່ອງຂອງການຈັດຕັ້ງທາງດ້ານນະໂຍບາຍ. ໃນຂະນະທີ່ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ ແລະ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການມີການປັບປຸງໜ້ອຍ. ໃນບັນດາຫົກດັດສະນີຍ່ອຍ, ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານຫຼຸດລົງລະຫວ່າງປີ 2017 ແລະ 2019.
- **ແຂວງຂະໜາດກາງ**, ສາມາດເຫັນໄດ້ເຖິງຜົນໄດ້ຮັບໃນທຸກດ້ານຂອງການປັບປຸງສະພາບແວດລ້ອມການດຳເນີນທຸລະກິດຍົກເວັ້ນຄວາມໂປ່ງໃສ ແລະ ເຂົ້າເຖິງຂໍ້ມູນຂ່າວສານ. ດັດສະນີທີ່ມີການປັບປຸງຫຼາຍສຸດແມ່ນຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດກົດໝາຍ, ທີ່ເພີ່ມຂຶ້ນ 16.8%, ຕໍ່ມາແມ່ນພາລະດ້ານລະບຽບການເພີ່ມຂຶ້ນ 14.4% ຈາກປີ 2017 ຫາປີ 2019. ກົງກັນຂ້າມ, ແຂວງຂະໜາດກາງແມ່ນມີການປັບປຸງໜ້ອຍກ່ຽວກັບຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວ ສານ.
- **ແຂວງຂະໜາດນ້ອຍ**, ໄດ້ມີການປັບປຸງຄະແນນກ່ຽວກັບຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດກົດໝາຍ, ພາລະທາງດ້ານລະບຽບການ ແລະ ການເລີ່ມຕົ້ນສ້າງຕັ້ງທຸລະກິດ, ແຕ່ຄວາມຄິດເຫັນຂອງວິສາຫະກິດກ່ຽວກັບຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງທ້ອງຖິ່ນ, ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການແມ່ນມີແນວໂນ້ມຫຼຸດລົງ.

**ຮູບທີ 5: ປຽບທຽບແນນດັດນະນີຍ່ອຍ ProFIT ຕາມຂະໜາດແຂວງປີ 2017 ແລະ 2019**




ProFIT = ສິ່ງອຳນວຍຄວາມສະດວກການຄ້າ ແລະ ການລົງທຶນ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

ການເຂົ້າເຖິງເອກະສານຂອງແຂວງຍັງບໍ່ທົ່ວເຖິງ ເຊັ່ນ: ແຜນພັດທະນາເສດຖະກິດ ແລະ ການຈັດຊື້ຈັດຈ້າງ ແລະ ການຂາດຄວາມໂປ່ງໃສ ຍັງສືບຕໍ່ເປັນອຸປະສັກສໍາລັບຜູ້ປະກອບການໃນການດໍາເນີນທຸລະກິດ, ເຖິງວ່າ 11 ຈາກ ທັງໝົດ 17 ແຂວງ ໄດ້ສ້າງເວັບໄຊທາງການເພື່ອເຜີຍແຜ່ຂໍ້ມູນທາງທຸລະກິດ (ຕາຕະລາງທີ 7), ຮອດປີ 2022 ຈໍານວນແຂວງທີ່ມີເວັບໄຊສາມາດປະຕິບັດງານໄດ້ແມ່ນຫຼຸດລົງເຫຼືອພຽງ 7 ແຂວງ.

**ຕາຕະລາງທີ 7: ແຂວງທີ່ມີເວັບໄຊທາງການ, 2019 ແລະ 2022**

| ຂະໜາດ | ແຂວງ | 2019 | 2022 |
|---|---|---|---|
| **ໃຫຍ່** | | | |
| | ຫຼວງນໍ້າທາ | ບໍ່ມີ | ບໍ່ມີ |
| | ວຽງຈັນ | ມີ | ມີ: https://vtpv.gov.la/ |
| | ນະຄອນຫຼວງວຽງຈັນ | ມີ | ມີ: http://vientianecity.gov.la/ |
| | ສະຫວັນນະເຂດ | ມີ | ນໍາໃຊ້ບໍ່ໄດ້ |
| | ຈໍາປາສັກ | ບໍ່ມີ | ບໍ່ມີ |
| **ກາງ** | | | |
| | ອຸດົມໄຊ | ບໍ່ມີ | ມີ: https://www.Oudomxai.gov.la/ |
| | ຫົວພັນ | ມີ | ມີ: http://Houaphan.gov.la/ |
| | ໄຊຍະບູລີ | ບໍ່ມີ | ບໍ່ມີ |
| | ຊຽງຂວາງ | ບໍ່ມີ | ບໍ່ມີ |
| | ບໍລິຄໍາໄຊ | ມີ | ມີ: http://bolikhamxay.gov.la/ |
| | ຄໍາມ່ວນ | ມີ | ນໍາໃຊ້ບໍ່ໄດ້ |
| | ສາລະວັນ | ມີ | ນໍາໃຊ້ບໍ່ໄດ້ |
| **ນ້ອຍ** | | | |
| | ຜົ້ງສາລີ | ມີ | ນໍາໃຊ້ບໍ່ໄດ້ |
| | ຫຼວງນໍ້າທາ | ບໍ່ມີ | ບໍ່ມີ |
| | ບໍ່ແກ້ວ | ມີ | ນໍາໃຊ້ບໍ່ໄດ້ |
| | ເຊກອງ | ມີ | ມີ: http://Xekong.gov.la/ |
| | ອັດຕະປື | ມີ | ມີ: http://Attapu.gov.la/ |

ແຫຼ່ງທີ່ມາ: ສໍານັກງານນາຍົກລັດຖະມົນຕີ, ສປປ ລາວ. http://www.laogov.gov.la.

## B. ວິເຄາະຄະແນນຂອງແຕ່ລະດັດສະນີຍ່ອຍ

### 1. ການເລີ່ມຕົ້ນສ້າງທຸລະກິດ

ດັດສະນີຍ່ອຍການເລີ່ມຕົ້ນສ້າງທຸລະກິດວັດແທກຈາກ ເວລາ ແລະ ຄ່າໃຊ້ຈ່າຍໃນການປະກອບເອກະສານເພື່ອຂໍທະບຽນວິສາຫະກິດ, ບໍ່ໄດ້ລວມເອົາເວລາທີ່ນໍາໃຊ້ເພື່ອເລີ່ມດໍາເນີນທຸລະກິດຕົວຈິງ ຫຼື ປະຕິບັດຂໍ້ກໍານົດທັງໝົດ

ເຊັ່ນ: ການຂຶ້ນທະບຽນປະກັນສັງຄົມ (ຮູບທີ 6).

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນໄດ້ຄະແນນສູງສຸດໃນການເລີ່ມສ້າງທຸລະກິດແມ່ນ 74.6, ຮອງລົງມາແມ່ນແຂວງສະຫວັນນະເຂດໄດ້ 68.1 ຄະແນນ. ກົງກັນຂ້າມ, ນະຄອນຫຼວງວຽງຈັນ ຢູ່ໃນອັນດັບຕໍ່າສຸດໄດ້ 55.8 ຄະແນນ.
- **ແຂວງຂະໜາດກາງ**, ແຂວງສາລະວັນ, ໄຊຍະບູລີ, ຊຽງຂວາງ ແລະ ອຸດົມໄຊ ທັງໝົດແມ່ນໄດ້ຫຼາຍກວ່າ 70 ຂອງທັງໝົດ 100 ຄະແນນ. ໃນຂະນະທີ່ແຂວງຄຳມ່ວນ ແລະ ແຂວງບໍລິຄຳໄຊໄດ້ຄະແນນໜ້ອຍສຸດ ເຊິ່ງໄດ້ 59.2 ແລະ 60 ຄະແນນຕາມລຳດັບ.
- **ແຂວງຂະໜາດນ້ອຍ**, ຫຼວງນ້ຳທາໄດ້ຄະແນນສູງສຸດເຖິງ 82 ຄະແນນ, ໃນຂະນະທີ່ແຂວງອັດຕະປືໄດ້ຄະແນນໜ້ອຍສຸດ 60.9 ຄະແນນ.

**ຮູບທີ 6: ການເລີ່ມຕົ້ນສ້າງທຸລະກິດ, 2019**
(100 ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ວິສາຫະກິດລາຍງານວ່າ ເວລາ ແລະ ຄ່າໃຊ້ຈ່າຍໃນການຂໍທະບຽນວິສາຫະກິດແມ່ນຫຼຸດລົງໃນປີ 2019 ທຽບກັບປີ 2017 (ຮູບທີ 7). ນີ້ເປັນສັນຍາທາງບວກສຳລັບທຸລະກິດ ເຊິ່ງອາດສະໜັບສະໜູນໃຫ້ທຸລະກິດຈຳນວນຫຼາຍມາຂຶ້ນທະບຽນວິສາຫະກິດຂອງເຂົາຢ່າງເປັນທາງການ. ຄ່າທຳນຽມທາງການໃນການຂໍຂຶ້ນທະບຽນວິສາຫະກິດສະເລ່ຍ 590,000 ກີບ ໃນປີ 2017 ແລະ 2019, ບໍ່ໄດ້ມີການເກັບຄ່າບໍລິການສຳລັບການຂໍເລກປະຈຳຕົວຜູ້ເສຍອາກອນ (TIN). ເຖິງຢ່າງໃດກໍຕາມ, ຫຼາຍໆວິສາຫະກິດ ຍັງຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ, ເຊິ່ງອາດສູງເຖິງສອງ ຫຼື ສາມເທົ່າຂອງຄ່າທຳນຽມທາງການ ເພື່ອເລັ່ງລັດການອອກເອກະສານ ໃນສອດຄ່ອງຕາມກົດໝາຍໃນທົ່ວປະເທດ.

- **ແຂວງຂະໜາດໃຫຍ່**, ປະມານ 22% ຂອງວິສາຫະກິດທີ່ໄດ້ລົງທະບຽນວິສາຫະກິດໃນປີ 2019 ລາຍງານວ່າ ພວກເຂົາສາມາດສຳເລັດການຂໍທະບຽນວິສາຫະກິດໃຊ້ເວລາຕໍ່າກວ່າ 10 ວັນ, ໄດ້ມີການປັບປຸງເພີ່ມຂຶ້ນ 6.7% ທຽບກັບປີ 2017. ວິສາຫະກິດສອງສ່ວນສາມໃນແຂວງຂະໜາດໃຫຍ່ທີ່ຂຶ້ນທະບຽນວິສາຫະກິດໃນປີ 2019 ໄດ້ຈ່າຍເງິນ 2 ລ້ານກີບ ຫຼື ຕໍ່າກວ່າ ສຳລັບການຂໍທະບຽນວິສາຫະກິດ.
- **ແຂວງຂະໜາດກາງ**, ຜູ້ຕອບແບບສອບຖາມເຄິ່ງໜຶ່ງລາຍງານວ່າ ພວກເຂົາສາມາດສຳເລັດການຂໍທະບຽນວິສາຫະກິດ ໂດຍໃຊ້ເວລາຕໍ່າກວ່າ 10 ວັນ ໃນປີ 2019, ເຊິ່ງເພີ່ມຂຶ້ນສອງເທົ່າຕົວທຽບກັບປີ 2017 ມີພຽງ

25%. 90% ຂອງວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດໃນປີ 2019 ໄດ້ຈ່າຍເງິນ 2 ລ້ານກີບ ຫຼື ຕໍ່າກວ່າ ສໍາລັບການຂໍທະບຽນວິສາຫະກິດ.

- **ແຂວງຂະໜາດນ້ອຍ**, 40% ຂອງວິສາຫະກິດຂະໜາດນ້ອຍລາຍງານວ່າ ພວກເຂົາສາມາດສໍາເລັດການຂໍທະບຽນວິສາຫະກິດໂດຍໃຊ້ເວລາໜ້ອຍກວ່າ 10 ວັນ ໃນປີ 2019, ປະມານສອງສ່ວນສາມຂອງວິສາຫະກິດຂະໜາດນ້ອຍຈ່າຍເງິນ 2 ລ້ານກີບ ຫຼື ຕໍ່າກວ່າ ສໍາລັບການຂໍທະບຽນວິສາຫະກິດໃນປີ 2019, ເຊິ່ງຕໍ່າກວ່າປີ 2017 ຫຼາຍ.

**ຮູບທີ 7: ຄ່າໃຊ້ຈ່າຍ ແລະ ເວລາທີ່ຕ້ອງການສໍາລັບການຂໍທະບຽນວິສາຫະກິດປີ 2017 ແລະ 2019**
(% ຂອງວິສາຫະກິດ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

## 2. ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ

ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າງສານ (TAI) ຖືກວັດແທກຈາກ 3 ຕົວຊີ້ວັດ: (i) ການເຂົ້າເຖິງເອກະສານທາງການຂອງແຂວງ, (ii) ໂອກາດໃນການປະກອບຄໍາເຫັນໃນຮ່າງລະບຽບຂອງແຂວງ, ແລະ (iii) ຄວາມພ້ອມໃຊ້ງານຂອງເວັບໄຊແຂວງໃນເວລາເໝາະສົມ. ທຸກແຂວງແມ່ນໄດ້ຄະແນນຕໍ່າສໍາລັບດັດສະນີດັ່ງກ່າວ (ຮູບທີ 8). ຄະແນນທີ່ຕໍ່າສ່ວນໃຫຍ່ ສະແດງໃຫ້ເຫັນເຖິງການຂາດເວັບໄຊທາງການຂອງແຂວງເຫຼົ່ານີ້ ໄດ້ຂີດຂວາງວິສາຫະກິດເຂົ້າເຖິງຂໍ້ມູນທາງການກ່ຽວກັບການວາງແຜນເສດຖະກິດ, ໂອກາດໃນການຈັດຊື້ຈັດຈ້າງ, ແລະ ລະບຽບທຸລະກິດອື່ນໆ. ນອກນັ້ນ, ຍັງສະທ້ອນໃຫ້ເຫັນເຖິງການຂາດການເຊື່ອມໂຍງກັບການບໍລິການປະຕູດຽວແຫ່ງຊາດ ເພື່ອໃຫ້ບັນດາວິສາຫະກິດສາມາດສະໝັກການຂໍທະບຽນ, ການອະນຸຍາດ ແລະ ຂໍໃບອະນຸຍາດຕ່າງໆໄດ້ຢ່າງສະດວກ ແລະ ມີປະສິດທິພາບໃນທົ່ວທຸກແຂວງ. ຄວາມບໍ່ສົມດຸນຂອງການເຂົ້າເຖິງຂໍ້ມູນຂ່າວສານ ໄດ້ກໍານົດຕົ້ນທຶນການດໍາເນີນທຸລະກິດທີ່ສໍາຄັນ ສໍາລັບພາກເອກະຊົນໃນການເລີ່ມຕົ້ນສ້າງທຸລະກິດ.

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນໄດ້ຄະແນນສູງສຸດ, ໃນຂະນະທີ່ແຂວງຈໍາປາສັກ ແລະ ຫຼວງພະບາງ ແມ່ນໄດ້ຄະແນນໜ້ອຍສຸດ ເຊິ່ງມັນສະທ້ອນເຖິງການຂາດເວັບໄຊທາງການຂອງແຂວງ.
- **ແຂວງຂະໜາດກາງ**, ແຂວງຫົວພັນໄດ້ຄະແນນສູງສຸດ 38.9, ຮອງລົງມາແມ່ນແຂວງຄໍາມ່ວນ, ໄດ້ 35.8 ຄະແນນ. ໃນຂະນະທີ່ແຂວງຊຽງຂວາງ, ອຸດົມໄຊ ແລະ ສາລະວັນ ໄດ້ຄະແນນຕໍ່າສຸດ, ເຊິ່ງທັງສາມແຂວງໄດ້ຕໍ່າກວ່າ 25 ຄະແນນ.

- **ແຂວງຂະໜາດນ້ອຍ**, ແຂວງຜົ້ງສາລີແມ່ນໄດ້ຄະແນນສູງສຸດ 32.7 ຄະແນນ. ສໍາລັບແຂວງຫຼວງນໍ້າທາໄດ້ຄະແນນໃນດັດສະນີດັ່ງກ່າວໜ້ອຍສຸດພຽງ 21.6 ຄະແນນ, ເນື່ອງຈາກສ່ວນຫຼາຍແມ່ນບໍ່ມີເວັບໄຊທາງການ.

ບັນດາແຂວງທີ່ໄດ້ສ້າງເວັບໄຊທີ່ໃຊ້ງານ ໄດ້ແຈ້ງການປັບປຸງການເຂົ້າເຖິງຂໍ້ມູນຂ່າວສານລະຫວ່າງປີ 2017 ແລະ 2019. ໃນຄວາມເປັນຈິງຫຼາຍແຂວງຍັງບໍ່ໄດ້ສ້າງເວັບໄຊທີ່ໃຊ້ງານໄດ້ ເຊິ່ງສະແດງໃຫ້ເຫັນເຖິງຍັງມີຊ່ອງວ່າງຫຼາຍໃນການປັບປຸງສະພາບແວດລ້ອມການດໍາເນີນທຸລະກິດໃນຫຼາຍແຂວງທົ່ວໃນທົ່ວປະເທດ.

**ຮູບທີ 8: ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານຂອງແຂວງ, 2019**
(100 ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ການສຶກສາຄັ້ງນີ້, ໄດ້ກໍານົດ 8 ເອກະສານທາງການ ເຊິ່ງຖືວ່າມີຄວາມສໍາຄັນຕໍ່ວິສາຫະກິດໃນການເຂົ້າເຖິງຂໍ້ມູນຂ່າວສານຂັ້ນແຂວງ: (i) ງົບປະມານແຂວງ; (ii) ແຜນພັດທະນາເສດຖະກິດສັງຄົມ; (iii) ລະບຽບ ແລະ ຂໍ້ແນະນໍາຕ່າງໆ; (iv) ງົບປະມານການລົງທຶນໃນການພັດທະນາໂຄງລ່າງພື້ນຖານ; (v) ແຜນຍຸດທະສາດການນໍາໃຊ້ທີ່ດິນ; (vi) ນະໂຍບາຍສົ່ງເສີມການລົງທຶນ; (vii) ຂັ້ນຕອນປະກອບເອກະສານ ແລະ ແບບຟອມຕ່າງໆ; ແລະ (viii) ໂອກາດໃນການຈັດຊື້ຈັດຈ້າງຂອງພາກລັດ. ວິສາຫະກິດສ່ວນຫຼາຍຍັງຂາດການເຂົ້າເຖິງເອກະສານທາງການ 8 ສະບັບທີ່ມີຄວາມສໍາຄັນຕໍ່ການດໍາເນີນທຸລະກິດ (ຮູບທີ 9).

- **ແຂວງຂະໜາດໃຫຍ່**, ນະຄອນຫຼວງວຽງຈັນແມ່ນຈັດຕັ້ງປະຕິບັດໄດ້ດີທີ່ສຸດໃນການເຂົ້າເຖິງຂໍ້ມູນຂ່າວສານ, ແລະ ແຂວງສະຫວັນນະເຂດກໍເຊັ່ນດຽວກັນ ຈໍານວນຜູ້ປະກອບການທີ່ເຂົ້າເຖິງເອກະສານທາງການຂອງແຂວງເພີ່ມຂຶ້ນ.
- **ແຂວງຂະໜາດກາງ**, ປະມານ 39.2% ຂອງວິສາຫະກິດທັງໝົດຢູ່ແຂວງຫົວພັນລາຍງານວ່າ ພວກເຂົາສາມາດເຂົ້າເຖິງເອກະສານເຫຼົ່ານີ້ ແລະ ຕົວເລກດັ່ງກ່າວແມ່ນຕໍ່າກວ່າ 25% ຢູ່ແຂວງສາລະວັນ ແລະ ບໍລິຄໍາໄຊ.
- **ແຂວງຂະໜາດນ້ອຍ**, ປະມານ 29.4% ຂອງຜູ້ຕອບແບບສອບຖາມທັງໝົດຢູ່ແຂວງຫຼວງນໍ້າທາ ໄດ້ຕອບວ່າພວກເຂົາສາມາດເຂົ້າເຖິງເອກະສານຂັ້ນແຂວງ, ໃນຂະນະທີ່ຜູ້ປະກອບການຢູ່ແຂວງອັດຕະປືພຽງເຄິ່ງໜຶ່ງທີ່ໄດ້ຕອບຄ້າຍຄືກັນ.

ມັນຍັງຄົງເປັນເລື້ອງຍາກສໍາລັບອົງການປົກຄອງທ້ອງຖິ່ນ ທີ່ຈະເຜີຍແຜ່ຂໍ້ມູນທາງການໃຫ້ທຸລະກິດພາກເອກະຊົນໂດຍບໍ່ມີການສ້າງ ແລະ ປັບປຸງເວັບໄຊຢ່າງເປັນປົກກະຕິ. ການເຊື່ອມໂຍງການບໍລິການປະຕູດຽວແຫ່ງຊາດທີ່ໄດ້

ສັງລວມລະບຽບການຂັ້ນແຂວງ ອາດສະເໜີໃຫ້ເປັນການແກ້ໄຂທີ່ດີທີ່ສຸດ ໃນການເຂົ້າເຖິງຂໍ້ມູນຂ່າວສານຢ່າງມີປະສິດທິພາບຂອງວິສາຫະກິດໃນທົ່ວແຂວງ, ຖ້າມີຂໍ້ມູນຄົບຖ້ວນ, ມັນອາດຈະຫຼຸດຜ່ອນຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ແລະ ສົ່ງເສີມການແຂ່ງຂັນລະຫວ່າງວິສາຫະກິດ, ເຊິ່ງອາດເປັນປະໂຫຍດຕໍ່ສັງຄົມ ໃນການຜັກດັນການເຕີບໂຕຂອງເສດຖະກິດໃຫ້ສູງຂຶ້ນ ແລະ ການພັດທະນາທີ່ດີຂຶ້ນ.

**ຮູບທີ 9: ການເຂົ້າເຖິງເອກະສານທາງການໃນແຂວງ, 2019**
(% ຂອງວິສາຫະກິດ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

## 3. ພາລະທາງດ້ານລະບຽບການ

ພາລະດ້ານລະບຽບການສໍາລັບວິສາຫະກິດຖືກວັດແທກໂດຍ 3 ຕົວຊີ້ວັດ: ຄວາມຖີ່ຂອງການກວດກາຂອງເຈົ້າໜ້າທີ່ກ່ຽວຂ້ອງ; ເວລາທີ່ນໍາໃຊ້ໃນການຂໍຕໍ່ທະບຽນອາກອນຂອງວິສາຫະກິດ, ຄ່າໃຊ້ຈ່າຍທີ່ນໍາໃຊ້ໃນການຂໍຕໍ່ທະບຽນວິສາຫະກິດ (ຮູບທີ 10). ສິ່ງເຫຼົ່ານີ້ ບໍ່ແມ່ນພາລະທາງດ້ານລະບຽບການສໍາລັບທຸລະກິດໃນ ສປປ ລາວ, ການໄດ້ຄະແນນສູງ ໃນດັດສະນີຍ່ອຍຂອງພາລະທາງດ້ານລະບຽບການບໍ່ໄດ້ຊີ້ໃຫ້ເຫັນວ່າ ທຸລະກິດຕ່າງໆພິຈາລະນາວ່າພາລະທາງດ້ານລະບຽບການນັ້ນເບົາບາງສະເໝີໄປ, ມັນເປັນພຽງການຈັດອັນດັບທີ່ພົວພັນກັນລະຫວ່າງ ແຂວງຕາມຕົວຊີ້ວັດຂອງສາມດັດສະນີຍ່ອຍ.

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນແມ່ນມີພາລະທາງດ້ານລະບຽບການໜ້ອຍສຸດ, ໃນຂະນະທີ່ແຂວງຈໍາປາສັກ ແມ່ນມີພາລະດ້ານລະບຽບການຫຼາຍສຸດ.
- **ແຂວງຂະໜາດກາງ,** ແຂວງຫົວພັນແມ່ນໄດ້ຄະແນນສູງສຸດ, ໃນຂະນະທີ່ແຂວງອຸດົມໄຊແມ່ນໄດ້ຄະແນນໜ້ອຍສຸດ.
- **ແຂວງຂະໜາດນ້ອຍ**, ທຸກແຂວງຂະໜາດນ້ອຍແມ່ນໄດ້ຄະແນນສູງສໍາລັບດັດສະນີຍ່ອຍດັ່ງກ່າວ, ໃນນັ້ນແຂວງເຊກອງໄດ້ຄະແນນສູງສຸດ 78.9, ຮອງລົງມາແມ່ນແຂວງຫຼວງນໍ້າທາ ແລະ ແຂວງບໍ່ແກ້ວ. ສໍາລັບແຂວງອັດຕະປືແມ່ນໄດ້ຄະແນນຕໍ່າສຸດ, ເຊິ່ງໄດ້ 60.8 ຄະແນນ.

ພາລະດ້ານລະບຽບການສໍາລັບວິສາຫະກິດຈໍານວນໜຶ່ງໄດ້ຮັບການປັບປຸງຈາກປີ 2017 ຫາປີ 2019 (ຮູບ ທີ 11). ວິສາຫະກິດທ້ອງຖິ່ນໄດ້ລາຍງານວ່າ ການກວດກາທີ່ໜ້ອຍລົງ, ການຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍສໍາລັບການຕໍ່ທະບຽນອາກອນເປັນສາເຫດສໍາຄັນເຮັດໃຫ້ຄະແນນໃນດັດສະນີດັ່ງກ່າວເພີ່ມຂຶ້ນ.

- **ແຂວງຂະໜາດໃຫຍ່**, ແຂວງຫຼວງພະບາງໄດ້ສະແດງໃຫ້ເຫັນເຖິງການປັບປຸງທີ່ສໍາຄັນ, ໂດຍມີຄະແນນເພີ່ມຂຶ້ນ 31%, ຮອງລົງມາແມ່ນແຂວງສະຫວັນນະເຂດ, ໄດ້ປັບປຸງເພີ່ມຂຶ້ນ 26.9%.

- **ແຂວງຂະໜາດກາງ**, ແຂວງຄຳມ່ວນເພີ່ມຂຶ້ນ 26.4%. ການປັບປຸງນີ້ ເປັນຜົນມາຈາກການຫຼຸດຜ່ອນຄວາມຖີ່ຂອງການກວດກາ, ເວລາ ແລະ ຄ່າໃຊ້ຈ່າຍທີ່ເຈົ້າຂອງທຸລະກິດໄດ້ກ່າວວ່າ ຈຳເປັນຕ້ອງຕໍ່ເລກປະຈຳຕົວອາກອນ.

**ຮູບທີ 10: ພາລະທາງດ້ານລະບຽບການໃນແຂວງ, 2019**
(100 ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

**ຮູບທີ 11: ການປ່ຽນແປງຄະແນນພາລະທາງດ້ານລະບຽບການໃນແຂວງຈາກປີ 2017 ຫາປີ 2019**
(ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

- **ແຂວງຂະໜາດນ້ອຍ**, ແຂວງຫຼວງນ້ຳທາ ແມ່ນມີການປັບປຸງຫຼາຍສຸດ ໃນແງ່ຂອງພາລະທາງດ້ານລະບຽບການ, ໄດ້ເຮັດໃຫ້ຄະແນນແຂວງດັ່ງກ່າວເພີ່ມຂຶ້ນ 29.1% ຈາກປີ 2017 ຫາປີ 2019. ສິ່ງຜົນໃຫ້ຄ່າໃຊ້ຈ່າຍ ແລະ ເວລາທີ່ຕ້ອງໃຊ້ໃນການຕໍ່ເລກປະຈຳຕົວອາກອນຫຼຸດລົງໄປພ້ອມໆກັບ ການຫຼຸດຄວາມຖີ່ຂອງການກວດກາ. ຍົກເວັ້ນແຂວງອັດຕະປື, ທີ່ໄດ້ຄະແນນຫຼຸດລົງ ໃນການຜ່ອນຄາຍພາລະດ້ານລະບຽບການໃນປີ 2019 ເມື່ອປຽບທຽບປີ 2017.

ໜຶ່ງໃນເຫດຜົນສຳຄັນທີ່ເຮັດໃຫ້ການປັບປຸງຊ້າແມ່ນຍ້ອນຄວາມຖີ່ຂອງການກວດກາຂອງລັດຖະບານ (ຮູບທີ 12). ການກວດກາໄດ້ສ້າງພາລະໜັກໜ່ວງດ້ານເວລາ ແລະ ຊັບພະຍາກອນໃຫ້ແກ່ວິສາຫະກິດ, ມັນຍາດເວລາຂອງຜູ້ປະກອບການ ໃນການບໍລິຫານທຸລະກິດ ແລະ ນຳໄປສູ່ການສວຍໃຊ້ໂອກາດໃນການສະແຫວງຫາຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງ.

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນ 75% ຂອງວິສາຫະກິດທັງໝົດແມ່ນຖືກກວດກາພຽງແຕ່ 1 ຫຼື 2 ຄັ້ງ ໃນປີ 2018. ກົງກັນຂ້າມ, 62.7% ຂອງວິສາຫະກິດຢູ່ແຂວງຈຳປາສັກລາຍງານວ່າ ຖືກກວດກາຢ່າງໜ້ອຍ 3 ຄັ້ງຕໍ່ປີ.
- **ແຂວງຂະໜາດກາງ**, ແຂວງຄຳມ່ວນ ຫຼາຍກວ່າ 60% ຂອງວິສາຫະກິດທັງໝົດລາຍງານວ່າ ຖືກກວດກາຫຼາຍກວ່າ 2 ຄັ້ງໃນປີ 2018, ໃນຂະນະທີ່ 77.4% ຂອງວິສາຫະກິດຢູ່ແຂວງຫົວພັນຖືກກວດກາພຽງແຕ່ 1 ຫຼື 2 ຄັ້ງໃນປີ 2018.
- **ແຂວງຂະໜາດນ້ອຍ**, ຫຼາຍກວ່າ 80% ຂອງວິສາຫະກິດຢູ່ແຂວງອັດຕະປືລາຍງານວ່າ ພວກເຂົາຖືກກວດສອບຢ່າງໜ້ອຍ 3 ຄັ້ງ ໃນປີ 2018, ເຊັ່ນດຽວກັບວິສາຫະກິດເກືອບສອງສ່ວນສາມຢູ່ ແຂວງຜົ້ງສາລີ.

**ຮູບທີ 12: ຄວາມຖີ່ຂອງການກວດກາໃນແຂວງ, 2019**
(% ຂອງວິສາຫະກິດ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ວິສາຫະກິດຍັງມີຄວາມຈຳເປັນຕ້ອງໄດ້ຕໍ່ເລກປະຈຳຕົວອາກອນໃນທຸກໆປີ, ເຊິ່ງເຮັດໃຫ້ຕ້ອງໃຊ້ເວລາ ແລະ ມີຄ່າໃຊ້ຈ່າຍຈຳນວນຫຼາຍສຳລັບທຸລະກິດ. ຄ່າໃຊ້ຈ່າຍ ແລະ ເວລາທີ່ນຳໃຊ້ສຳລັບຂະບວນການ ໃນການຕໍ່ເລກປະຈຳຕົວອາກອນຂອງວິສາຫະກິດແມ່ນຫຼຸດລົງ, ແຕ່ວິສາຫະກິດຍັງລາຍງານວ່າ ການດຳເນີນການຕ້ອງໃຊ້ເວລາປະມານ 1 ເດືອນຈຶ່ງສຳເລັດ (ຮູບທີ 13). ເວລາທີ່ນຳໃຊ້ສະເລ່ຍໃນການຕໍ່ເລກປະຈຳຕົວອາກອນແມ່ນ 16 ວັນ, ແລະ ມີຄ່າໃຊ້ຈ່າຍສະເລ່ຍ 2 ລ້ານກີບ, ເຖິງວ່າໜຶ່ງໃນສີ່ວິສາຫະກິດລາຍງານວ່າ ໄດ້ຈ່າຍເງິນຫຼາຍກວ່າ 3 ລ້ານກີບສຳລັບການຕໍ່ເລກປະຈຳຕົວອາກອນ. ດັ່ງນັ້ນ, ຈຶ່ງເປັນປະໂຫຍດຢ່າງໃຫຍ່ຫຼວງ ໃນການຍົກເລີກຂໍ້ກຳນົດຂອງການຕໍ່ເລກປະຈຳຕົວອາກອນປະຈຳປີ.

**ຮູບທີ 13: ຄ່າໃຊ້ຈ່າຍ ແລະ ເວລາທີ່ນຳໃຊ້ໃນການຕໍ່ເລກປະຈຳຕົວອາກອນໃນແຂວງ, ປີ 2017 ແລະ 2019**
(% ຂອງວິສາຫະກິດ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

- **ແຂວງຂະໜາດໃຫຍ່**, ປະມານ 60% ຂອງວິສາຫະກິດທັງໝົດລາຍງານວ່າ ໃຊ້ເວລາຕໍ່າກວ່າ 1 ເດືອນໃນການຕໍ່ເລກປະຈຳຕົວອາກອນຂອງພວກເຂົາໃນປີ 2019, ຫຼຸດລົງຈາກ 69% ທຽບກັບການຫຼວດ ProFIT 2017. ເຊັ່ນດຽວກັນກັບຈຳນວນວິສາຫະກິດທີ່ຕ້ອງຈ່າຍເງິນຫຼາຍກວ່າ 3 ລ້ານກີບໃນການຕໍ່ເລກປະຈຳຕົວອາກອນຂອງພວກເຂົາໃນຊ່ວງປີ 2017 ແລະ 2019.
- **ແຂວງຂະໜາດກາງ**, 83.3% ຂອງວິສາຫະກິດທັງໝົດລາຍງານວ່າໃຊ້ເວລານ້ອຍກວ່າ 1 ເດືອນ ໃນການຕໍ່ເລກປະຈຳຕົວອາກອນ, ເຊິ່ງຫຼຸດລົງເລັກນ້ອຍທຽບການສຳຫຼວດ ProFIT 2017.
- **ແຂວງຂະໜາດນ້ອຍ**, ຄ່າໃຊ້ຈ່າຍ ແລະ ເວລາທີ່ຕ້ອງການນຳໃຊ້ໃນການຕໍ່ເລກປະຈຳຕົວອາກອນ ໄດ້ຫຼຸດລົງສຳລັບແຂວງຂະໜາດນ້ອຍລະຫວ່າງປີ 2017 ແລະ 2019, 82.1% ຂອງວິສາຫະກິດທັງໝົດລາຍງານວ່າການຕໍ່ເລກປະຈຳຕົວອາກອນໃຊ້ເວລາໜ້ອຍກວ່າ 1 ເດືອນ, ເຊິ່ງຕໍ່າກວ່າຕົວເລກ 85% ໃນປີ 2017 ເລັກນ້ອຍ.

## 4. ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ

ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການຍັງຄົງເປັນອຸປະສັກອັນສຳຄັນທີ່ກຳນົດໂດຍອົງການປົກຄອງທ້ອງຖິ່ນສຳລັບວິສາຫະກິດ ໃນການສ້າງຕັ້ງທຸລະກິດ ແລະ ການດຳເນີນທຸລະກິດຢ່າງສະດວກ (ຮູບທີ 14). ດັດສະນີດັ່ງກ່າວໄດ້ລວມເອົາອັດຕາສ່ວນຂອງຄ່າໃຊ້ຈ່າຍ ທີ່ບໍ່ເປັນທາງການຕໍ່ກັບລາຍຮັບທັງໝົດ, ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການສາມາດຍອມຮັບໄດ້, ການເຈລະຈາຕໍ່ລອງການຈ່າຍອາກອນ, ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການແມ່ນຈຳເປັນ ແລະ ການເປີດເຜີຍຂໍ້ມູນການໃຊ້ຈ່າຍເປັນທາງການ.

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນໄດ້ຄະແນນສູງສຸດ 66.4 ຄະແນນ, ໃນຂະນະທີ່ແຂວງຫຼວງພະບາງໄດ້ພຽງ 38.5 ຄະແນນ, ທັງນີ້ແມ່ນຍ້ອນຂັ້ນຕອນເອກະສານທີ່ສັບຊ້ອນ ໂດຍສະເພາະແມ່ນຂໍ້ກຳນົດສຳລັບການຂໍໃບອະນຸຍາດປະກອບກິດຈະການ, ເຊິ່ງໄດ້ຊັກຈູງໃຫ້ວິສາຫະກິດຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ.
- **ແຂວງຂະໜາດກາງ**, ແຂວງສາລະວັນ ແລະ ຊຽງຂວາງແມ່ນມີການດຳເນີນງານທີ່ສຸດ, ເຊິ່ງໄດ້ເກີນ 60 ຄະແນນເລັກນ້ອຍ, ຮອງລົງມາແມ່ນແຂວງບໍລິຄຳໄຊ ແລະ ຫົວພັນໄດ້ 55 ຄະແນນ. ແຂວງຄຳມ່ວນ, ອຸດົມໄຊ ແລະ ໄຊຍະບູລີ ແມ່ນໄດ້ຕໍ່າກວ່າ 50 ຄະແນນ.
- **ແຂວງຂະໜາດນ້ອຍ**, ຄະແນນສ່ວນຫຼາຍແມ່ນຕໍ່າກວ່າ 50 ຄະແນນ, ຍົກເວັ້ນແຂວງຜົ້ງສາລີ, ເຊິ່ງໄດ້ສະແດງ

**ຮູບທີ 14: ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃນແຂວງ, 2019**
(100 ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ໃຫ້ເຫັນວ່າ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການແມ່ນເປັນເລື້ອງປົກກະຕິໃນແຂວງຂະໜາດນ້ອຍ.

ເຖິງຢ່າງໃດກໍຕາມ, ຄວາມຄືບໜ້າຂອງການຫຼຸດຜ່ອນກ່ຽວກັບຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ແມ່ນສາມາດເຫັນໄດ້ລະຫວ່າງປີ 2017 ແລະ 2019, ການປະຕິບັດການດັ່ງກ່າວຍັງມີຢູ່ (ຮູບທີ 15). ການປະຕິບັດທີ່ບໍ່ເປັນທາງການໃນການດໍາເນີນທຸລະກິດ ຍັງພົບເຫັນຢ່າງແຜ່ຫຼາຍໃນທົ່ວທຸກແຂວງ ແລະ ຮັບຮູ້ວ່າເປັນສ່ວນໜຶ່ງຂອງການດໍາເນີນການປົກກະຕິ, ລວມທັງການຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ແລະ ການເຈລະຈາຕໍ່ລອງການຈ່າຍອາກອນ (ຫ້ອງຂໍ້ມູນ 1).

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນມີການປັບປຸງຫຼາຍທີ່ສຸດໃນດ້ານຄ່າໃຊ້ຈ່າຍທີ່ບໍ່ເປັນທາງການທີ່ຖືກຈ່າຍໂດຍວິສາຫະກິດ, ດັດສະນີດັ່ງກ່າວເພີ່ມຂຶ້ນ 16.6% ລະຫວ່າງປີ 2017 ແລະ 2019. ນະຄອນຫຼວງວຽງຈັນ ແລະ ແຂວງແຫຼວງພະບາງມີການປັບປຸງເລັກນ້ອຍ, ຄະແນນເພີ່ມຂຶ້ນພຽງ 1.3% ແລະ 0.7%. ໃນຂະນະທີ່ແຂວງຈໍາປາສັກປັບປຸງເພີ່ມຂຶ້ນ 5.2% ແລະ ແຂວງສະຫວັນນະເຂດເພີ່ມຂຶ້ນ 6%.
- **ແຂວງນະໜາດກາງ**, ແຂວງສາລະວັນໄດ້ປັບປຸງຄະແນນດ້ານການໃຊ້ຈ່າຍບໍ່ເປັນທາງການເພີ່ມຂຶ້ນ 27.5%, ເປັນຄະແນນທີ່ສູງສຸດໃນທຸກແຂວງ. ກົງກັນຂ້າມ, ແຂວງອຸດົມໄຊແມ່ນໄດ້ຄະແນນໜ້ອຍສຸດໃນດັດສະນີດັ່ງກ່າວ.
- **ແຂວງຂະໜາດນ້ອຍ**, 4 ໃນ 5 ແຂວງຂະໜາດນ້ອຍຖືກພົບວ່າ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການຫຼຸດລົງ ເມື່ອທຽບໃສ່ປີ 2017, ມີພຽງແຕ່ແຂວງຜົ້ງສາລີທີ່ປັບປຸງເພີ່ມຂຶ້ນ 3.2%.

**ຮູບທີ 15: ການປ່ຽນແປງຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃນແຂວງຈາກປີ 2017 ຫາ 2019**
(ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

### ຫ້ອງຂໍ້ມູນ 1: ການປະຕິບັດທີ່ບໍ່ເປັນທາງການໃນການດໍາເນີນທຸລະກິດໃນ ສປປ ລາວ

ທຸກວິສາຫະກິດ ຈໍາເປັນຕ້ອງໄດ້ລາຍງານກິດຈະກໍາທາງເສດຖະກິດຂອງເຂົາຕໍ່ເຈົ້າໜ້າທີ່ຊ່ວຍສາອາກອນ, ແຕ່ວິສາຫະກິດ ຈໍານວນຫຼາຍບໍ່ໄດ້ລາຍງານກິດຈະກໍາຂອງພວກເຂົາຢ່າງເຕັມສ່ວນເພື່ອຫຼີກລ້ຽງອາກອນ. ການລາຍງານດັ່ງກ່າວບໍ່ພຽງແຕ່ຫຼຸດຜ່ອນການເກັບອາກອນເທົ່ານັ້ນ ແຕ່ຍັງທໍາລາຍຄວາມໄວ້ເນື້ອເຊື່ອໃຈໃນລະບົບອາກອນ ແລະ ບິດເບືອນການແຂ່ງຂັນລະຫວ່າງວິສາຫະກິດ. ການປະຕິບັດທີ່ບໍ່ເປັນທາງການ ໃນການດໍາເນີນທຸລະກິດປະກອບມີການບໍ່ໄດ້ຈົດທະບຽນການດໍາເນີນງານ, ການລາຍງານລາຍຮັບວິສາຫະກິດຕໍ່າກວ່າຄວາມເປັນຈິງ, ການຈ່າຍເງິນໃຫ້ເຈົ້າໜ້າທີ່ ທີ່ບໍ່ໄດ້ເປັນສ່ວນໜຶ່ງຂອງຄ່າທໍານຽມທີ່ເປັນທາງການ ແລະ ການເຈລະຈາຕໍ່ລອງການຈ່າຍອາກອນເປັນຕົ້ນ.

ການສໍາຫຼວດ ProFIT 2019 ພົບວ່າ ຜູ້ຕອບແບບສອບຖາມເກືອບ 70% ໄດ້ຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ສໍາລັບການຈົດທະບຽນວິສາຫະກິດ, ໃບອານຸຍາດ ແລະ ການຂໍອະນຸຍາດຕ່າງໆ. ວິສາຫະກິດຍັງລາຍງານວ່າ ຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ເພື່ອເຂົ້າເຖິງເອກະສານຂອງລັດຖະບານລວມທັງເຈົ້າໜ້າທີ່ດໍາເນີນການກວດກາທຸລະກິດ. ສໍາລັບຜູ້ຕອບແບບສອບຖາມທີ່ໄດ້ຍື່ນຄໍາຮ້ອງຕໍ່ອົງການປົກຄອງແຂວງ ເພື່ອຂໍເອກະສານທີ່ບໍ່ໄດ້ເປີດເຜີຍຕໍ່ສາທະລະນະ, ລວມທັງລະບຽບການ, ຄໍາແນະນໍາ ແລະ ຂໍ້ຕົກລົງຂອງແຂວງ, 45% ໄດ້ຈ່າຍສໍາລັບຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ເພື່ອໃຫ້ໄດ້ເອກະສານດັ່ງກ່າວ. ໃນຂະນະທີ່ 35% ໄດ້ຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃຫ້ເຈົ້າໜ້າທີ່ລັດສໍາລັບການກວດກາ.

ດັດສະນີຍ່ອຍຂອງ ProFIT ສໍາລັບຄ່າໃຊ້ຈ່າຍທີ່ບໍ່ເປັນທາງການແມ່ນນໍາໃຊ້ 5 ຕົວຊີ້ວັດ: (i) ອັດຕາສ່ວນຂອງຄ່າໃຊ້ຈ່າຍ ທີ່ບໍ່ເປັນທາງການຕໍ່ກັບລາຍຮັບທັງໝົດ; ແລະ 4 ຕົວຊີ້ວັດ ແມ່ນແທນໃຫ້ກັບຄວາມຈໍາເປັນ, ລັກສະນະທົ່ວໄປ ແລະ ການຍອມຮັບຕໍ່ກັບຄ່າໃຊ້ຈ່າຍບໍ່ເປັນທາງການ ແລະ ການເປີດເຜີຍຂໍ້ມູນການໃຊ້ຈ່າຍເປັນທາງການ (ຕາຕະລາງລຸ່ມ). ຜົນໄດ້ຮັບຂອງການສໍາຫຼວດ ProFIT ຊີ້ໃຫ້ເຫັນວ່າ ການປະຕິບັດການທີ່ບໍ່ເປັນທາງການໃນການດໍາເນີນທຸລະກິດແມ່ນເປັນເລື່ອງທົ່ວໄປ ແລະ ຖືກຮັບຮູ້ວ່າເປັນສ່ວນໜຶ່ງຂອງການດໍາເນີນງານປົກກະຕິ, ລວມທັງຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ. ວິສາຫະກິດ 2 ສ່ວນ 3 ທີ່ໄດ້ສໍາຫຼວດໃນບົດລາຍງານສະບັບນີ້ໄດ້ເປີດເຜີຍວ່າ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການເປັນສິ່ງຈໍາເປັນເພື່ອຮັບປະກັນການດໍາເນີນງານທີ່ສະດວກຂອງພວກເຂົາ.

**ຕົວຊີ້ວັດການໃຊ້ຈ່າຍທີ່ບໍ່ເປັນທາງການ**

| ດັດສະນີຍ່ອຍ | % | ຕົວຊີ້ວັດ | ນໍ້າໜັກ (%) |
|---|---|---|---|
| **ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ** | 100 | ອັດຕາສ່ວນຄ່າໃຊ້ຈ່າຍບໍ່ເປັນທາງການຕໍ່ກັບລາຍຮັບທັງໝົດ | 40 |
| | | ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການສາມາດຍອມຮັບໄດ້ | 15 |
| | | ການເຈລະຈາຕໍ່ລອງການຈ່າຍອາກອນ | 15 |

*ສືບຕໍ່ໃນໜ້າຕໍ່ໄປ*

ຫ້ອງຂໍ້ມູນ 1 *ສືບຕໍ່*

| | |
|---|---|
| ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການແມ່ນຈຳເປັນ | 15 |
| ການເປີດເຜີຍຂໍ້ມູນການໃຊ້ຈ່າຍເປັນທາງການ | 15 |

ການເຈລະຈາຕໍ່ລອງການຈ່າຍອາກອນໄດ້ຖືກພົບເຫັນຢ່າງແຜ່ຫຼາຍໃນທົ່ວທຸກແຂວງ, ເກືອບ 70% ຂອງວິສາຫະກິດທັງໝົດ ໄດ້ລາຍງານວ່າມັນເປັນເລື່ອງປົກກະຕິໃນການເຈລະຈາຕໍ່ລອງການຈ່າຍອາກອນ. ການເຈລະຈາຕໍ່ລອງການຈ່າຍອາກອນ ໝາຍເຖິງການປະຕິບັດຂອງເຈົ້າໜ້າທີ່ອາກອນແລະເຈົ້າຂອງວິສາຫະກິດທີ່ໄດ້ເຂົ້າມາເຈລະຈາກ່ຽວກັບຈຳນວນອາກອນທີ່ຕ້ອງຈ່າຍແທນທີ່ຈະອີງໃສ່ການປະເມີນອາກອນຕາມຄຳແນະນຳທີ່ໂປ່ງໃສ ແລະ ຄູ່ມືວິທີການຈັດຕັ້ງປະຕິບັດທີ່ກຳນົດໄວ້. ເຊິ່ງມີລາຍເຫດຜົນທີ່ສຳຄັນ:

(i) ກົດໝາຍວ່າດ້ວຍຊ່ວຍສາອາກອນໃນປະເທດ ໃຫ້ພື້ນທີ່ໃນການຕີຄວາມໝາຍອັນກວ້າງຂວາງຂອງກົດລະບຽບ ແລະ ຂັ້ນຕອນການເກັບອາກອນ ເຮັດໃຫ້ເກີດໂອກາດໃນການຕັດສິນໃຈຕາມດຸນພິນິດ.
(ii) ລະດັບການສຶກສາຂອງຜູ້ຈ່າຍອາກອນ ແລະ ການເຂົ້າເຖິງຂໍ້ມູນຂ່າວສານແມ່ນຈຳກັດ.
(iii) ພະນັກງານອາກອນເອງ ມີວຸດທິຈຳກັດ ຫຼື ໃບຢັ້ງຢືນໃນສາຂາກ່ຽວຂ້ອງ ເພື່ອໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກແກ່ຜູ້ປະກອບການໃນການປະຕິບັດຕາມລະບຽບອາກອນ.
(iv) ຫ້ອງການອາກອນໃນລະດັບແຂວງ ແມ່ນມີໜ້າທີ່ໃນການໃຫ້ຂໍ້ມູນ ແລະ ຊ່ວຍເຫຼືອຜູ້ເສຍອາກອນໃນທ້ອງຖິ່ນທີ່ໃກ້ທີ່ສຸດ, ແຕ່ອາດຈະບໍ່ຈັດໃຫ້ມີກິດຈະກຳທີ່ເປັນລະບົບ ແລະ ປະສານງານກັນ; ແລະ.
(v) ໃນບາງກໍລະນີ, ການເຈລະຈາຕໍ່ລອງການຈ່າຍອາກອນຖືວ່າມີຄວາມຈຳເປັນ ເນື່ອງຈາກການຂາດລະບົບການເກັບບັນຊີສອງສົ້ນຂອງວິສາຫະກິດ.

ຜົນໄດ້ຮັບຂອງການປະເມີນໄດ້ຊີ້ໃຫ້ເຫັນວ່າ ມັນມີຄວາມສັບຊ້ອນ, ມີຄ່າໃຊ້ຈ່າຍ ແລະ ໃຊ້ເວລາຫຼາຍສຳລັບວິສາຫະກິດ ທີ່ຈະປະຕິບັດຕາມກົດໝາຍ, ລະບຽບການ ແລະ ຂັ້ນຕອນໃນ ສປປ ລາວ. ດັ່ງນັ້ນ, ມັນເປັນສິ່ງຈຳເປັນສຳລັບລັດຖະບານ ໃນການປະຕິບັດມາດຕະການ ທີ່ເຮັດໃຫ້ການລົງທະບຽນ ແລະ ການຊຳລະອາກອນງ່າຍຂຶ້ນ ແລະ ມີປະສິດທິພາບ ເຊັ່ນ: ຜ່ານລະບົບອັດຕະໂນມັດ ແລະ ລວມເອົາການລົງທະບຽນກັບການບໍລິການຂອງພາກລັດອື່ນໆ, ລວມທັງການສຶກສາອົບຮົມວິສາຫະກິດ ກ່ຽວກັບຜົນສະທ້ອນຂອງການປະຕິບັດທີ່ບໍ່ເປັນທາງການ ສຳລັບການສະໜອງທຶນຂອງການບໍລິການສາທາລະນະ.

ຍ້ອນບັນຫາທີ່ເກີດຂຶ້ນໃນການຄາດຄະເນຜົນກຳໄລຢ່າງຖືກຕ້ອງຂອງວິສາຫະກິດຂະໜາດນ້ອຍໃນປະເທດ, ຈຶ່ງສະເໜີໃຫ້ທົດແທນອາກອນທີ່ອີງໃສ່ຜົນກຳໄລດ້ວຍອາກອນລາຍໄດ້ ຄວນພິຈາລະນາຢ່າງຈິງຈັງໂດຍຜູ້ວາງນະໂຍບາຍ. ລັດຖະບານ ຊຸດໃໝ່ທີ່ນຳໂດຍພະນາທ່ານນາຍົກລັດຖະມົນຕີ ມີແນວໂນ້ມຫຼາຍທີ່ຈະໃຫ້ພາກເອກະຊົນມີສ່ວນຮ່ວມໃນການກຳນົດນະໂຍບາຍ ເຊິ່ງຖືເປັນໂອກາດອັນດີໃຫ້ແກ່ປະເທດໃນການປັບປຸງແປງນະໂຍບາຍຈັດເກັບອາກອນ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ, 2021. ດັດສະນີການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ, ມະນີລາ; ທະນາຄານ ໂລກ, 2019. *ການປະເມີນການໃຊ້ຈ່າຍສາທາລະນະ ແລະ ຄວາມຮັບຜິດຊອບທາງດ້ານການເງິນຂອງ ສປປ ລາວ.* ວຽງຈັນ, ສູນສະຖິຕິແຫ່ງຊາດລາວ, 2020. ການສຳຫຼວດເສດຖະກິດ.

## 5. ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍ

ດັດສະນີຍ່ອຍນີ້ແມ່ນອີງໃສ່ຄວາມຕອບຂອງເຈົ້າຂອງວິສາຫະກິດຈາກຄຳຖາມ 5 ຂໍ້: (i) ຄວາມໄດ້ປຽບ ໃນການມີສາຍພົວພັນໃກ້ຊິດກັບພາກລັດ; (ii) ຄວາມຄິດເຫັນຂອງພວກເຂົາກ່ຽວກັບການໃຫ້ບູລິມະສິດວິສາຫະກິດຂອງພາກລັດ; (iii) ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດລະບຽບແຫ່ງຊາດຂອງອົງການປົກຄອງແຂວງ; (iv) ຄວາມສອດຄ່ອງລະຫວ່າງລະບຽບໃນຂັ້ນແຂວງ ແລະລະບຽບການລະດັບຊາດ; ແລະ (v) ການປະສານສົມທົບພາຍໃນແຂວງເພື່ອສະໜັບສະໜູນພາກທຸລະກິດ ແລະ ລະບຽບການຂອງແຂວງ. ຈາກການສົນທະນາກັບວິສາຫະກິດສະແດງໃຫ້ເຫັນເຖິງສາເຫດຕົ້ນຕໍຂອງຄວາມບໍ່ສອດຄ່ອງຂອງລະບຽບການທ້ອງຖິ່ນ ທີ່ມັກຈະບໍ່ສອດຄ່ອງລະບຽບທີ່ອອກໂດຍສູນກາງ (ຮູບທີ 16).

- **ແຂວງຂະໜາດໃຫຍ່**, ແຂວງວຽງຈັນໄດ້ຄະແນນສູງສຸດເຖິງ 61.1, ໃນຂະນະທີ່ ແຂວງຈຳປາສັກ ແມ່ນໄດ້ຄະແນນໜ້ອຍສຸດພຽງ 43.2 ຄະແນນ.
- **ແຂວງຂະໜາດກາງ**, ແຂວງສາລະວັນໄດ້ຄະແນນສູງສຸດເຖິງ 64.9, ໃນຂະນະທີ່ ແຂວງບໍລິຄຳໄຊ ໄດ້ຄະແນນຕໍ່າສຸດ, ເຊິ່ງໄດ້ຕໍ່າກວ່າ 50 ຄະແນນ.
- **ແຂວງຂະໜາດນ້ອຍ**, ແຂວງເຊກອງ ແລະ ຜົ້ງສາລີ ໄດ້ຄະແນນສູງກວ່າແຂວງອື່ນໆເລັກນ້ອຍ ໃນດັດສະນີດັ່ງກ່າວ, ແຕ່ຍັງມີຄະແນນຕໍ່າຢູ່. ອັດຕະປືໄດ້ຄະແນນຕໍ່າສຸດ ໄດ້ພຽງ 40.7 ຄະແນນ.

**ຮູບທີ 16: ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍໃນແຂວງ, 2019**
(100 ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ການຈັດຕັ້ງປະຕິບັດນະໂຍບາຍ ແມ່ນໄດ້ຖືກປັບປຸງທຸກແຂວງ, ຍົກເວັ້ນແຂວງອັດຕະປື (ຮູບທີ 17).

**ຮູບທີ 17: ການປ່ຽນແປງດັດສະນີຄວາມສອດຄ່ອງຂອງການຈັດຕັ້ງ ປະຕິບັດນະໂຍບາຍແຕ່ 2017 ຫາ 2019**
(ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ອົງການປົກຄອງແຂວງມີແນວໂນ້ມສະໜັບສະໜູນລັດວິສາຫະກິດຫຼາຍກວ່າທຸລະກິດພາກເອກະຊົນ (ຮູບທີ 18). ໃນປະເທດມີລັດວິສາຫະກິດທັງໝົດ 183 ຫົວໜ່ວຍ, ວິສາຫະກິດສ່ວນຫຼາຍແມ່ນຕັ້ງຢູ່ເຂດເສດຖະກິດພິເສດ ແລະ ກ່ຽວຂ້ອງກັບຂະແໜງໄຫລະຄົມ, ພະລັງງານ, ການເງິນ, ແຮ່ທາດ, ການຂົນສົ່ງ ແລະ ການບໍລິການຂອງພາກລັດ. ລັດຖະບານໄດ້ເລີ່ມປັບປຸງໂຄງສ້າງ ແລະ ຫັນລັດວິສາຫະກິດມາເປັນເອກະຊົນ ລວມທັງການເພີ່ມສິດເປັນເຈົ້າຂອງເອກະຊົນໃນລັດວິສາຫະກິດ ໂດຍຜ່ານການຈົດທະບຽນໃນຕະຫຼາດຫຼັບຊັບລາວ, ອົງການປົກຄອງແຂວງຄວນພິຈາລະນາການປະຕິຮູບເຫຼົ່ານີ້ ເພື່ອຊຸກຍູ້ການເຕີບໂຕທາງດ້ານເສດຖະກິດໃນຂອບເຂດອໍານາດຂອງຕົນເອງ ແລະ ເພື່ອສ້າງຄວາມສະດວກໃຫ້ມີລະດັບການ ແຂ່ງຂັນທີ່ມີເປັນທໍາ.

- **ແຂວງຂະໜາດໃຫຍ່**, ແຂວງສະຫວັນນະເຂດ 61.5% ຂອງຜູ້ຕອບແບບສອບຖາມເຫັນວ່າ ອົງການປົກຄອງແຂວງສະໜັບສະໜູນລັດວິສາຫະກິດຫຼາຍກວ່າທຸລະກິດພາກເອກະຊົນ, ຫຼາຍກວ່າ 50% ຂອງຜູ້ຕອບແບບສອບຖາມຢູ່ນະຄອນຫຼວງວຽງຈັນ, ແຂວງຈໍາປາສັກ ແລະ ແຂວງວຽງຈັນ ແມ່ນສະໜັບສະໜູນຄວາມຄິດເຫັນດັ່ງກ່າວ.
- **ແຂວງຂະໜາດກາງ**, ແຂວງໄຊຍະບູລີ 73.3% ຂອງຜູ້ຕອບແບບສອບຖາມທັງໝົດລາຍງານວ່າ ອົງການປົກຄອງແຂວງສະໜັບສະໜູນລັດວິສາຫະກິດຫຼາຍກວ່າທຸລະກິດພາກເອກະຊົນ. ຈາກນັ້ນ, 72.7% ຂອງຜູ້ຕອບແບບສອບຖາມຢູ່ແຂວງຊຽງຂວາງເຫັນດີກັບຄວາມຄິດເຫັນດັ່ງກ່າວ.
- **ແຂວງຂະໜາດນ້ອຍ**, ເກືອບສອງສ່ວນສາມຂອງຜູ້ຕອບແບບສອບຖາມຢູ່ແຂວງເຊກອງລາຍງານ ວ່າອົງການປົກຄອງແຂວງສະໜັບສະໜູນລັດວິສາຫະກິດຫຼາຍກວ່າທຸລະກິດພາກເອກະຊົນ, ຕໍ່ມາ ແມ່ນແຂວງຜົ້ງສາລີ (56.7%) ແລະ ແຂວງບໍ່ແກ້ວ (52.5%). ແຂວງຫຼວງນໍ້າທາ ແລະ ແຂວງ ອັດຕະປື ເປັນພຽງແຕ່ສອງແຂວງທີ່ຜູ້ເຫັນດີກັບຄວາມຄິດເຫັນດັ່ງກ່າວໜ້ອຍກວ່າເຄິ່ງໜຶ່ງ.

**ຮູບທີ 18: ການໃຫ້ບູລິມະສິດລັດວິສາຫະກິດໃນແຂວງ, 2019**
(% ຂອງວິສາຫະກິດ)




SOE = ລັດວິສາຫະກິດ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

ວິສາຫະກິດທີ່ມີສາຍພົວພັນໃກ້ຊິດກັບອົງການປົກຄອງທ້ອງຖິ່ນ ຈະໄດ້ຮັບປະໂຫຍດຫຼາຍຂຶ້ນໃນແງ່ຂອງ ສັນຍາ, ທີ່ດິນ, ຊັບພະຍາກອນ ແລະ ອື່ນໆ (ຮູບທີ 19). ເພື່ອຫຼຸດຜ່ອນຄວາມລໍາອຽງ ລັດຖະບານແຫ່ງຊາດ ແລະ ອົງການປົກຄອງແຂວງຕ້ອງຮ່ວມກັນແກ້ໄຂສິ່ງທ້າທາຍນີ້ ໂດຍການເຜີຍແຜ່ຂໍ້ມູນຢ່າງເປັນທາງ ການຜ່ານທາງອອນລາຍ ແລະ ສ້າງເວທີການແຂ່ງຂັນສໍາລັບທົ່ວທຸກວິສາຫະກິດ ໂດຍບໍ່ຄໍານຶງເຖິງຄວາມ ສໍາພັນສ່ວນບຸກຄົນກັບພະນັກງານລັດ.

**ຮູບທີ 19: ຄວາມໄດ້ປຽບຂອງການມີສາຍພົວພັນໃກ້ຊິດໃນແຂວງ, 2019**
(% ຂອງຜູ້ຕອບແບບສອບຖາມທີ່ລາຍງານວ່າໄດ້ປຽບ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

- **ແຂວງຂະໜາດໃຫຍ່**, ແຂວງຫຼວງພະບາງເກືອບ 75% ຂອງຜູ້ຕອບແບບສອບຖາມທັງໝົດລາຍງານວ່າ ພວກເຂົາໄດ້ດໍາເນີນທຸລະກິດໂດຍຜ່ານການມີສາຍພົວພັນທີ່ໃກ້ສິດກັບພະນັກງານລັດ, ໃນຂະນະທີ່ຕົວເລກດັ່ງກ່າວຫຼຸບໃສ່ແຂວງອື່ນໆຢູ່ໃນລະຫວ່າງ 50% ຫາ 60%.
- **ແຂວງຂະໜາດກາງ**, ແຂວງຊຽງຂວາງມີອັດຕາສ່ວນຜູ້ຕອບສູງສຸດ 72.7% ທີ່ລາຍງານວ່າ ພວກເຂົາຕ້ອງໃຊ້ຄວາມສໍາພັນທີ່ໃກ້ຊິດກັບພາກລັດ ເພື່ອສ້າງຕັ້ງ ແລະ ດໍາເນີນທຸລະກິດຂອງພວກເຂົາ, ໃນຂະນະທີ່ອັດຕາສ່ວນຂອງແຂວງອື່ນໆແມ່ນຢູ່ລະຫວ່າງ 30% ຫາ 70%.
- **ແຂວງຂະໜາດນ້ອຍ**, ໃນສາມແຂວງ, 71.7% ຂອງຜູ້ຕອບແບບສອບຖາມ ແມ່ນໄດ້ນໍາໃຊ້ຄວາມສໍາພັນທີ່ໃກ້ຊິດກັບພາກລັດ ເພື່ອດໍາເນີນທຸລະກິດຂອງພວກເຂົາ, ເຖິງວ່າຈະອີງໃສ່ຄ່າສະເລ່ຍ ແຕ່ຍັງມີຄວາມແຕກຕ່າງກັນຫຼາຍລະຫວ່າງວິສາຫະກິດ.

ຜົນຂອງການປະເມີນຂ້ອນຂ້າງແຕກຕ່າງກັນຫຼາຍອີງຕາມຂະໜາດແຂວງ ກ່ຽວກັບຄວາມຄິດເຫັນຄວາມສອດຄ່ອງຂອງການຈັດຈັ້ງຕັ້ງປະຕິບັດນະໂຍບາຍ ແລະ ລະບຽບການລະຫວ່າງສູນກາງ ແລະ ລະດັບ ແຂວງ (ຮູບທີ 20).

- **ແຂວງຂະໜາດໃຫຍ່**, ຫຼາຍກວ່າ 85% ຂອງວິສາຫະກິດຢູ່ແຂວງສະຫວັນນະເຂດ ແລະ ແຂວງ ວຽງຈັນລາຍງານວ່າ ການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດຢູ່ແຂວງຂອງພວກເຂົາແມ່ນສອດຄ່ອງກັນ.
- **ແຂວງຂະໜາດກາງ**, ຜູ້ຕອບແບບສອບຖາມຈາກແຂວງເຫຼົ່ານີ້ແມ່ນມີຄວາມຄິດເຫັນໃນທາງບວກ ກ່ຽວກັບຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍລະຫວ່າງຂັ້ນສູນກາງ ແລະ ລະດັບ ແຂວງ.
- **ແຂວງຂະໜາດນ້ອຍ**, ບັນດາແຂວງເຫຼົ່ານີ້ເຫັນວ່າ ການຈັດຕັ້ງປະຕິບັດນະໂຍບາຍລະຫວ່າງຂັ້ນ ສູນກາງ ແລະ ລະດັບແຂວງຍັງມີຄວາມສອດຄ່ອງໜ້ອຍກວ່າ.

ການຮັບປະກັນຄວາມສອດຄ່ອງຂອງລະບຽບການໃນລະດັບສູນກາງ ແລະ ລະດັບ ແຂວງ ແມ່ນສິ່ງທີ່ສໍາຄັນໃນການປັບປຸງສະພາບແວດລ້ອມການດໍາເນີນທຸລະກິດ. ຄວາມແຕກຕ່າງຂອງລະບຽບການຍັງຖືກພົບເຫັນໃນແຕ່ລະແຂວງກ່ຽວກັບສະພາບແວດລ້ອມການດໍາເນີນທຸລະກິດ (ຮູບທີ 21).

**ຮູບທີ 20: ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດລະບຽບແຫ່ງຊາດໃນແຂວງ, 2019**
(% ຂອງຜູ້ຕອບ "ສອດຄ່ອງ")




ແຫຼ່ງຂໍ້ມູນ: ຜູ້ຂຽນ.

**ຮູບທີ 21: ແຂວງໄດ້ອອກລະບຽບເພີ່ມເຕີມທີ່ແຕກຕ່າງຈາກຂັ້ນສູນກາງ ຫຼື ບໍ່**
(% ຂອງຜູ້ຕອບ "ແມ່ນ")




ແຫຼ່ງຂໍ້ມູນ: ຜູ້ຂຽນ.

- **ແຂວງຂະໜາດໃຫຍ່**, ຫຼາຍກວ່າສອງສ່ວນສາມຂອງວິສາຫະກິດຢູ່ແຂວງຈຳປາສັກເຊື່ອວ່າ ແຂວງ ໄດ້ອອກລະບຽບເພີ່ມເຕີມ ທີ່ບໍ່ສອດຄ່ອງກັບລະບຽບທີ່ກຳນົດໂດຍລັດຖະບານຈາກສູນກາງ.
- **ແຂວງຂະໜາດກາງ**, ວິສາຫະກິດຢູ່ແຂວງຫົວພັນສ່ວນຫຼາຍເຫັນວ່າ ລະບຽບທີ່ປະຕິບັດຢູ່ພາຍໃນ ແຂວງແມ່ນສອດຄ່ອງກັບລະບຽບທີ່ກຳນົດໂດຍລັດຖະບານຈາກສູນກາງ.
- **ແຂວງຂະໜາດນ້ອຍ**, ຫຼາຍກວ່າເຄິ່ງໜຶ່ງຂອງວິສາຫະກິດທັງໝົດຢູ່ໃນແຂວງຂະໜາດນ້ອຍ ມີແນວໂນ້ມເຫັນວ່າ ລະບຽບທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນແມ່ນແຕກຕ່າງຈາກລະບຽບທີ່ກຳນົດໂດຍ ລັດຖະບານຈາກສູນກາງ.

## 6. ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ

ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງແມ່ນຖືກວັດແທກໂດຍ 4 ຕົວຊີ້ວັດ: (i) ທັດສະນະຄະຕິຂອງອົງການປົກຄອງຂັ້ນແຂວງຕໍ່ກັບທຸລະກິດພາກເອກະຊົນ; (ii) ການສະໜັບສະໜູນຂອງອົງການປົກຄອງແຂວງ ຕໍ່ກັບທຸລະກິດພາກເອກະຊົນທີ່ຢູ່ໃນພື້ນທີ່; (iii) ການນຳໃຊ້ວິທີການໃໝ່ໃນການແກ້ໄຂບັນຫາ; ແລະ (iv) ຄວາມຮັບຮູ້ຂອງພາກເອກະຊົນກ່ຽວກັບຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018 (ຮູບທີ 22).

- **ແຂວງຂະໜາດໃຫຍ່**, ຄະແນນຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງສຳລັບ ແຂວງຂະໜາດໃຫຍ່ແມ່ນຢູ່ລະຫ່ວາງຫຼາຍກວ່າ 50 ຄະແນນເລັກນ້ອຍຢູ່ແຂວງວຽງຈັນ ຫາ 68.8 ຄະແນນຢູ່ແຂວງສະຫວັນນະເຂດ.
- **ແຂວງຂະໜາດກາງ**, ແຕ່ລະແຂວງເຫັນວ່າມີຄະແນນແຕກຕ່າງກັນເລັກນ້ອຍ, ຈາກ 58.4 ຢູ່ ແຂວງບໍລິຄຳໄຊ ຫາ 67.7 ຄະແນນ ຢູ່ແຂວງໄຊຍະບູລີ.
- **ແຂວງຂະໜາດນ້ອຍ**, ແຂວງອັດຕະປື, ສາມາດຍາດໄດ້ 62.9 ຄະແນນ ສຳລັບຄວາມເປັນມິດ ຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ,ເຊິ່ງຖືເປັນຄະແນນສູງສຸດໃນບັນດາແຂວງຂະໜາດນ້ອຍ,ໃນຂະນະທີ່ແຂວງຫຼວງນ້ຳທາໄດ້ຄະແນນໜ້ອຍສຸດ.

**ຮູບທີ 22: ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ, 2019**
(100 ຄະແນນ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ອັດຕາສ່ວນຂອງວິສາຫະກິດທີ່ລາຍງານວ່າ ອົງການປົກຄອງແຂວງໄດ້ໃຫ້ການຊ່ວຍເຫຼືອໃນການພັດທະນາວິສາຫະກິດເອກະຊົນແມ່ນຍັງຂ້ອນຂ້າງສູງ (ຮູບທີ 23).

- **ແຂວງຂະໜາດໃຫຍ່**, 87.5% ຂອງວິສາຫະກິດຢູ່ແຂວງສະຫວັນນະເຂດເຫັນວ່າ ອົງການປົກຄອງ ແຂວງພວກເຂົາມີທັດສະນະຄະຕິທາງບວກຕໍ່ກັບທຸລະກິດພາກເອກະຊົນ, ໃນຂະນະທີ່ແຂວງຈໍາປາສັກແມ່ນໄດ້ຄະແນນຕໍ່າສຸດພຽງ 55.1%.
- **ແຂວງຂະໜາດກາງ**, ຫຼາຍກວ່າ 70% ຂອງຜູ້ຕອບແບບສອບຖາມ ໃນແຂວງ ຜົ້ງສາລີ, ເຊກອງ, ຫຼວງນໍ້າທາ, ແລະ ອັດຕະປື ເຫັນວ່າ ອົງການປົກຄອງ ແຂວງມີທັດສະນະຄະຕິທາງບວກຕໍ່ກັບທຸລະກິດພາກເອກະຊົນ ແລະ ຈະນໍາໃຊ້ວິທີການໃໝ່ໆ ເພື່ອຊ່ວຍແກ້ໄຂບັນຫາທີ່ເກີດຂຶ້ນກັບພາກທຸລະກິດ.
- **ແຂວງຂະໜາດນ້ອຍ**, ຫຼາຍກວ່າ 70% ຂອງຜູ້ຕອບແບບສອບຖາມຢູ່ແຂວງຜົ້ງສາລີ, ເຊກອງ, ຫຼວງນໍ້າທາ ແລະ ອັດຕະປື ເຫັນວ່າອົງການປົກຄອງແຂວງພວກເຂົາມີທັດສະນະຄະຕິທາງບວກຕໍ່ ກັບທຸລະກິດພາກເອກະຊົນ ແລະ ໄດ້ນໍາໃຊ້ວິທີການໃໝ່ໆເພື່ອແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ຜູ້ປະກອບການປະເຊີນ, ໃນຂະນະທີ່ຕໍ່າກວ່າ 60% ຂອງຜູ້ຕອບແບບສອບຖາມທັງໝົດຢູ່ແຂວງບໍ່ ແກ້ວເຫັນດີກັບຄວາມຄິດເຫັນດັ່ງກ່າວ.

**ຮູບທີ 23: ຄວາມຄິດເຫັນຕໍ່ອົງການປົກຄອງແຂວງ, 2019**
(% ຂອງຜູ້ຕອບ "ແມ່ນ")




ແຫຼ່ງຂໍ້ມູນ: ຜູ້ຂຽນ.



# ພາກສະເໜີ 4

## ການເລືອກເອົາບາງບັນຫາ ທາງດ້ານນະໂຍບາຍ

## A. ໂຄງສ້າງຂອງວິສາຫະກິດໃນ ສປປ ລາວ

ສູນສະຖິຕິແຫ່ງຊາດຂອງ ສປປ ລາວ ໄດ້ດຳເນີນການສຳຫຼວດເສດຖະກິດ 3 ຄັ້ງໃນໄລຍະເວລາ 15 ປີ, ໃນປີ 2006, 2013 ແລະ 2020. ການສຳຫຼວດເສດຖະກິດໄດ້ສະໜອງຂໍ້ມູນທີ່ສຳຄັນຂອງລັດວິສາຫະກິດ ໃນປະເທດ ເຊັ່ນ: ກິດຈະກຳການເຄື່ອນໄຫວຂອງພວກເຂົາແບ່ງຕາມຂະແໜງການ, ການຈ້າງງານ, ຂະໜາດວິສາຫະກິດ, ລາຍຮັບ, ລາຍຈ່າຍ, ການເງິນ ແລະ ຄວາມສອດຄ່ອງຂອງການປະຕິບັດຕາມຂໍ້ກຳນົດ ກົດລະບຽບຕ່າງໆ. ການສຳຫຼວດເຫຼົ່ານີ້ສະແດງໃຫ້ເຫັນເຖິງ ການເຕີບໂຕຂອງວິສາຫະກິດຍັງຖືກຈຳກັດໃນ 15 ປີຜ່ານມາ, ທັງໃນດ້ານຈຳນວນຂອງວິສາຫະກິດ ແລະ ໂຄງສ້າງລວມຂະໜາດຂອງວິສາຫະກິດ (ຕາຕະລາງ 8).

**ຕາຕະລາງ 8: ບາງຕົວຊີ້ວັດຂອງວິສາຫະກິດ, 2006–2020**
(%)

| ຕົວປ່ຽນ | 2006 | 2013 | 2020 |
|---|---|---|---|
| **ທະບຽນວິສາຫະກິດ** | | | |
| - ມີ | 40.0 | 34.9 | 30.4 |
| - ບໍ່ມີ | 60.0 | 65.1 | 69.6 |
| **ເລກປະຈຳຕົວອາກອນ** | | | |
| - ມີ | 8.0 | 14.8 | 12.9 |
| - ບໍ່ມີ | 92.0 | 85.2 | 87.1 |
| **ຂະໜາດຂອງວິສາຫະກິດ** | | | |
| - ຈຸນລະວິສາຫະກິດ | 93.5 | 86.0 | 94.2 |
| - ນ້ອຍ | 4.2 | 9.2 | 4.9 |
| - ກາງ | 2.2 | 5.0 | 0.7 |
| - ໃຫຍ່ | 0.2 | 0.2 | 0.7 |

ໝາຍເຫດ: ນິຍາມຂະໜາດຂອງວິສາຫະກິດໃນປີ 2020 ແມ່ນແຕກຕ່າງກັນ, ອີງຕາມດຳລັດຂອງນາຍົກລັດຖະມົນຕີເລກທີ 25, ລົງວັນທີ 16 ມັງກອນ, 2017 ວ່າດ້ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ.
ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດລາວ, ການສຳຫຼວດເສດຖະກິດເລືອກບາງປີ.

ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍແມ່ນຖືຄອງໃນໂຄງສ້າງທຸລະກິດຂອງເສດຖະກິດ. ໃນປີ 2020, ຈຸນລະວິສາຫະກິດກວມອັດຕາສ່ວນສູງເຖິງ 94.2% ຂອງວິສາຫະກິດທັງໝົດ, ຕໍ່ມາແມ່ນວິສາຫະກິດຂະໜາດນ້ອຍກວມອັດຕາສ່ວນ 4.9%, ວິສາຫະກິດຂະໜາດກາງກວມ 0.7% ແລະ ຂະໜາດໃຫຍ່ກວມ 0.2%. ໃນດ້ານຂອງການຈ້າງງານ, ວິສາຫະກິດສ່ວນຫຼາຍມີຈຳນວນແຮງງານ 5 ຄົນ ຫຼື ໜ້ອຍກວ່າ (90.6%), ໃນຂະນະທີ່ວິສາຫະກິດທີ່ມີຈຳນວນແຮງງານຫຼາຍກວ່າ 50 ຄົນ, ກວມອັດຕາສ່ວນພຽງ 0.4% ຂອງວິສາຫະກິດທັງໝົດ (ຮູບທີ 24). ສຳລັບລະດັບການສຶກສາຂອງບັນດາເຈົ້າຂອງວິສາຫະກິດ, ສອງສ່ວນສາມຂອງວິສາຫະກິດທັງໝົດຈົບລະດັບການສຶກສາໃນຊັ້ນມັດທະຍົມປາຍ.

ຄວາມບໍ່ເປັນທາງການກໍຍັງສູງ, ໂດຍສະເພາະລະຫວ່າງຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ. ໃນປີ 2020, ມີພຽງ 30.4% ຂອງວິສາຫະກິດທັງໝົດທີ່ລາຍງານວ່າ ພວກເຂົາຈົດທະບຽນວິສາຫະກິດແລ້ວ, ເຊິ່ງຫຼຸດລົງຈາກ 34.9% ໃນປີ 2013 ແລະ 40% ໃນປີ 2006. ອັດຕາສ່ວນຂອງວິສາຫະກິດທີ່ມີເລກປະຈຳຕົວອາກອນເພີ່ມຂຶ້ນເລັກນ້ອຍຈາກ 8.0% ໃນປີ 2006 ມາເປັນ 12.9% ໃນປີ 2020. ເຖິງຢ່າງໃດກໍຕາມ, ອັດຕາສ່ວນໂດຍລວມຂອງວິສາຫະກິດທີ່ມີເລກປະຈຳຕົວອາກອນຍັງຄົງຕ່ຳ (ຮູບທີ 25). ໃນຂະນະດຽວກັນ, ພາລະໃນການປະຕິບັດລະບຽບຂອງທຸລະກິດແມ່ນຂ້ອນຂ້າງສູງສຳລັບວິສາຫະກິດຂະໜາດນ້ອຍ, ເນື່ອງຈາກວ່າຄ່າໃຊ້ຈ່າຍ ແລະ ເວລານຳໃຊ້ໃນການຂໍທະບຽນວິສາຫະກິດ, ການຂໍອະນຸຍາດສຳລັບເລີ່ມຕົ້ນດຳເນີນທຸລະກິດຄືງທີ່. ວິສາຫະກິດທີ່ໄດ້ຈົດທະບຽນ

**ຮູບທີ 24: ໂຄງສ້າງຂອງວິສາຫະກິດໃນ ສປປ ລາວ, 2020**
**(%)**




ວສກ: ວິສາຫະກິດ.
ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດລາວ, 2020. ການສຳຫຼວດເສດຖະກິດ.

**ຮູບທີ 25: ຈຳນວນວິສາຫະກິດທີ່ມີເອກະສານປະກອບທຸລະກິດທີ່ຈຳເປັນ, 2020**
**(%)**




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດລາວ, 2020. ການສຳຫຼວດເສດຖະກິດ.

ຢ່າງຖືກຕ້ອງລາຍງານວ່າ ໄດ້ຖືກກວດກາລະດັບຢ່າງເຂັ້ມຂຸ້ນຈາກເຈົ້າໜ້າທີ່, ເຊິ່ງມັນບໍ່ໄດ້ສ້າງສິ່ງຈູງໃຈສຳລັບວິສາຫະກິດທີ່ເປັນທາງການໃຫ້ໄປລົງທະບຽນກັບອົງການປົກຄອງທີ່ກ່ຽວຂ້ອງ.

ການນຳໃຊ້ການເງິນຢ່າງເປັນທາງການ, ວິທີການບັນຊີທີ່ທັນສະໄໝ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ແມ່ນຂ້ອນຂ້າງຈຳກັດສຳລັບທຸລະກິດສ່ວນຫຼາຍ. ມີພຽງແຕ່ 3.3% ຂອງວິສາຫະກິດທີ່ປະຕິບັດຕາມລະບົບບັນຊີທົ່ວໄປ ແລະ 0.5% ນຳໃຊ້ບັນຊີຄູ່. ໃນຂະນະທີ່ 96.4% ຂອງວິສາຫະກິດ ບໍ່ໄດ້ນຳໃຊ້ການບັນຊີໃດໆເລີຍ. ການຂາດລະບົບບັນຊີທີ່ເຊື່ອຖືໄດ້ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການເຂົ້າໃຈ, ປະເມີນໃບດຸ່ນດ່ຽງ, ລາຍຮັບ ແລະ ລາຍຈ່າຍຂອງວິສາຫະກິດ, ສິ່ງດັ່ງກ່າວໄດ້ກີດຂວາງການຄາດຄະເນທີ່ຖືກຕ້ອງກ່ຽວກັບໜີ້ສິນອາກອນຂອງວິສາຫະກິດ. ມີພຽງແຕ່ 6.6% ຂອງວິສາຫະກິດລາຍງານວ່າ ພວກເຂົາໄດ້ນຳໃຊ້ເຄື່ອງມື ICT ໃນການດຳເນີນ

ທຸລະກິດປີ 2020 ແລະ ມີພຽງ 9.6% ລາຍງານວ່າ ພວກເຂົາໄດ້ຮັບເງິນກູ້ຈາກສະຖາບັນການເງິນທີ່ເປັນທາງການ ເຊັ່ນ: ທະນາຄານ ໃນໄລຍະ 3 ປີ ຜ່ານມາ. ການນຳໃຊ້ສິນເຊື່ອ, ເຕັກໂນໂລຊີ, ເຄື່ອງມືຄຸ້ມຄອງການເງິນຕ່ຳ ຊີ້ໃຫ້ເຫັນເຖິງສິ່ງກະຕຸ້ນທີ່ອ່ອນແອ ສຳລັບການເຕີບໂຕຂອງວິສາຫະກິດ.

ເມື່ອຖາມຄວາມຄິດເຫັນກ່ຽວກັບຂໍ້ຈຳກັດທີ່ວິສາຫະກິດປະເຊີນ, ພວກເຂົາລາຍງານວ່າ ການເຂົ້າເຖິງຕະຫຼາດແມ່ນໜຶ່ງໃນບັນຫາທີ່ໃຫຍ່ທີ່ສຸດ, ຕໍ່ມາແມ່ນສະພາບແວດລ້ອມຂອງການດຳເນີນທຸລະກິດພາຍໃນປະເທດ. ແລະ ນອກຈາກນັ້ນ ຄວາມສອດຄ່ອງຂອງລະບຽບທາງທຸລະກິດຍັງບໍ່ໄດ້ຮັບການປັບປຸງໃນໄລຍະຜ່ານມາ. ດັ່ງນັ້ນ, ຍ້ອນສະພາບແວດລ້ອມດ້ານກົດລະບຽບທີ່ສັບຊ້ອນສຳລັບທຸລະກິດເປັນຂໍ້ຈຳກັດທີ່ມີຜົນຜູກພັນຕໍ່ການ ເຕີບໂຕຂອງວິສາຫະກິດ ແລະ ອາດເປັນປັດໄຈສຳຄັນທີ່ຈຳກັດການເຕີບໂຕຂອງວິສາຫະກິດໃນຊ່ວງ 15 ປີຜ່ານມາ. ສະພາບການດັ່ງກ່າວ ຮຽກຮ້ອງໃຫ້ບັນດາຜູ້ວາງນະໂຍບາຍເພີ່ມຄວາມເອົາໃຈໃສ່ຢ່າງຮີບດ່ວນ ເພາະວ່າການຂາດການປະຕິຮູບທີ່ມີປະສິດທິພາບເພື່ອກະຕຸ້ນການເຕີບໂຕຂອງວິສາຫະກິດຈະກໍ່ໃຫ້ເກີດຄວາມສ່ຽງຕໍ່ແນວໂນ້ມການເຕີບໂຕ ແລະ ການພັດທະນາປະເທດ.

## B. ຜົນກະທົບຂອງຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018 ຕໍ່ການຂໍທະບຽນວິສາຫະກິດ

ຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018 ມີຈຸດປະສົງເພື່ອຫຼຸດຄ່າໃຊ້ຈ່າຍ ແລະ ໄລຍະເວລາໃນ ການຈົດທະບຽນວິສາຫະກິດໃໝ່ (ຮູບທີ 26). ຂໍ້ມູນທີ່ໄດ້ຈາກການສຳຫຼວດໃນບົດລາຍງານນີ້ສະແດງໃຫ້ ເຫັນວ່າວິສາຫະກິດທີ່ສ້າງຕັ້ງໃນປີ 2019 ທີ່ໄດ້ຈົດທະບຽນວິສາຫະກິດພາຍໃຕ້ຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018 ມີຄ່າໃຊ້ຈ່າຍສະເລ່ຍໃນການຈົດທະບຽນວິສາຫະກິດ 1.7 ລ້ານກີບ, ໃນຂະນະທີ່ວິສາຫະກິດທີ່ສ້າງຕັ້ງພາຍໃຕ້ລະບຽບການເດີມມີຄ່າໃຊ້ຈ່າຍສະເລ່ຍ 2.6 ລ້ານກີບ. ເຖິງຢ່າງໃດກໍຕາມ, ຄ່າທຳນຽມທາງການສະເລ່ຍມີພຽງ 590,000 ກີບ. ສະນັ້ນ, ຄ່າທຳນຽມທີ່ຈ່າຍຍັງຫຼາຍກວ່າສອງເທົ່າຂອງ ຄ່າໃຊ້ຈ່າຍຢ່າງເປັນທາງການທີ່ກຳນົດໄວ້. ສິ່ງດັ່ງກ່າວຊີ້ໃຫ້ເຫັນວ່າ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ເຊັ່ນ: ຄ່າທຳນຽມການເລັ່ງລັດຂະບວນການຕ່າງໆ ມີບົດບາດສຳຄັນໃນການຮັບປະກັນການປະຕິບັດຕາມກົດລະບຽບ.

**ຮູບທີ 26: ຄ່າໃຊ້ຈ່າຍ ແລະ ເວລາທີ່ນຳໃຊ້ສະເລ່ຍໃນການຂໍທະບຽນວິສາຫະກິດກ່ອນ ແລະ ຫຼັງມີຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018**




PMO = ຄຳສັ່ງນາຍົກລັດຖະມົນຕີ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

ຜົນໄດ້ຮັບທາງບວກຂອງຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018, ໄລຍະເວລາສະເລ່ຍທີ່ນຳໃຊ້ໃນ ການຂໍທະບຽນວິສາຫະກິດໄດ້ຫຼຸດລົງຈາກ 27 ວັນໃນປີ 2017 ມາເປັນ 17 ວັນໃນປີ 2019. ເຖິງຢ່າງໃດກໍຕາມ, ນີ້ແມ່ນຍັງສູງກວ່າ 10 ວັນ ທີ່ໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນວິສາຫະກິດຕາມດຳລັດກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0023 ວ່າດ້ວຍມະຕິຕົກລົງການຂຶ້ນທະບຽນວິສາຫະກິດ, ລົງວັນທີ 9 ມັງກອນ, 2019 (ຫ້ອງຂໍ້ມູນ 2). ການນຳໃຊ້ລະບຽບຂອງລັດຖະບານໃນຂັ້ນແຂວງທີ່ບໍ່ສອດຄ່ອງກັນດັ່ງກ່າວໄດ້ສົ່ງຜົນກະທົບຕໍ່ຄວາມຮູ້ສຶກຂອງທຸລະກິດທົ່ວໄປ ແລະ ອາດອະທິບາຍໄດ້ວ່າ ເປັນຫຍັງວິສາຫະກິດລາຍງານວ່າພວກເຂົາຮັບຮູ້ສະພາບແວດດ້ານກົດລະບຽບເປັນຂໍ້ຈຳກັດອັນສຳຄັນ ທີ່ພວກເຂົາປະເຊີນໃນການດຳເນີນທຸລະກິດ ດັ່ງທີ່ໄດ້ລາຍງານໃນການສຳຫຼວດເສດຖະກິດ 2020.

### ຫ້ອງຂໍ້ມູນ 2: ການປະຕິຮູບຜ່ານມາກ່ຽວກັບຂັ້ນຕອນການເລີ່ມຕົ້ນທຸລະກິດ

ອີງຕາມການປະຕິຮູບຂັ້ນຕອນການເລີ່ມສ້າງທຸລະກິດໃນມື້ນີ້ (ຮູບດ້ານລຸ່ມ), ການຂໍໃບຢັ້ງຢືນການຂຶ້ນທະບຽນວິສາຫະກິດຈະໃຊ້ເວລາບໍ່ເກີນ 10 ວັນລັດຖະການ. ນີ້ແມ່ນອີງຕາມດຳລັດຂອງກະຊວງອຸດສາຫະກຳ ແລະ ການຄ້າເລກທີ 0023 ວ່າດ້ວຍການຂຶ້ນທະບຽນວິສາຫະກິດ, ລົງວັນທີ 9 ມັງກອນ, 2019. ການຢັ້ງຢືນຕາປະທັບຂອງບໍລິສັດ ແລະ ການຂໍອະນຸມັດນຳໃຊ້ ແມ່ນໃຊ້ເວລາບໍ່ເກີນ 5 ວັນລັດຖະການ. ອີງຕາມຂໍ້ຕົກລົງຂອງກະຊວງປ້ອງກັນຄວາມສະຫງົບສະບັບເລກທີ 1784/ນຍ, ລົງວັນທີ 2 ຕຸລາ 2018 ວ່າດ້ວຍການຄຸ້ມຄອງ ແລະ ການຜະລິດຕາປະທັບ. ໃບທະບຽນປະກັນສັງຄົມແມ່ນໃຫ້ອະນຸມັດພາຍໃນ 2 ວັນລັດຖະການ ອີງຕາມຄຳແນະນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມສະບັບເລກທີ 1206 ລົງວັນທີ 23 ເມສາ 2019. ຂະບວນການຂໍທະບຽນວິສາຫະກິດແບບໃໝ່ໄດ້ເລີ່ມປະຕິບັດໃນເດືອນກຸມພາ 2019 ສຳລັບທຸກແຂວງ, ບາງວິສາຫະກິດຕ້ອງຂໍໃບອະນຸຍາດດຳເນີນທຸລະກິດກັບຂະແໜງການທີ່ກ່ຽວຂ້ອງ. ຖ້າກິດຈະກຳທາງທຸລະກິດ ຖືກຈັດໃນປະເພດແບບມີເງື່ອນໄຂ, ຄວບຄຸມ ຫຼື ສຳປະທານຕາມທີ່ໄດ້ກຳນົດໄວ້ໃນດຳລັດເລກທີ 03/ນຍ, ລົງວັນທີ 10 ມັງກອນ 2019 ວ່າດ້ວຍການຮັບຮອງບັນຊີລາຍການຄວບຄຸມ ແລະ ສຳປະທານ. ນັກລົງທຶນແມ່ນໃຫ້ເວລາ 90 ວັນລັດຖະການ, ຫຼັງຈາກການອອກໃບຢັ້ງຢືນທະບຽນວິສາຫະກິດ ເພື່ອຂໍໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ ແລະ ກະຊວງສຳເນົາຢ່າງເປັນທາງການໃຫ້ຫ້ອງການທະບຽນວິສາຫະກິດທີ່ກ່ຽວຂ້ອງ.

#### ຂະບວນການຂອງການເລີ່ມຕົ້ນທຸລະກິດໃນ ສປປ ລາວ




Lao PDR = ສປປ ລາວ.
ແຫຼ່ງຂໍ້ມູນ: ຖານຂໍ້ມູນວິສາຫະກິດແຫ່ງຊາດ. http://www.ned.moic.gov.la/index.php/en/.

ອັດຕາສ່ວນຂອງວິສາຫະກິດທີ່ລາຍງານວ່າ ໄດ້ຈ່າຍຄ່າໃຊ້ຈ່າຍ ທີ່ບໍ່ເປັນທາງການໃນການຂໍທະບຽນວິສາຫະກິດແມ່ນຫຼຸດລົງລະຫວ່າງ 2017 ແລະ 2019 (ຮູບທີ 27). ນີ້ໄດ້ສະແດງໃຫ້ເຫັນວ່າ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີເລກທີ 02/2018 ສະໜັບສະໜູນການຫຼຸດລົງຂອງຄ່າໃຊ້ຈ່າຍ ແລະ ເວລາໃນການຂໍທະບຽນວິສາຫະກິດ. ເຖິງຢ່າງໃດກໍຕາມ, ການໃຊ້ຈ່າຍບໍ່ເປັນທາງການໃນລະຫວ່າງການຂໍທະບຽນວິສາຫະກິດ ຍັງບໍ່ມີການປ່ຽນແປງ. ເຖິງວ່າມີການປະຕິຮູບລະບຽບການທີ່ເຮັດໃຫ້ການດຳເນີນທຸລະກິດສະດວກຂຶ້ນກໍຕາມ, ແຕ່ບັນດາວິສາຫະກິດ ແລະ ພະນັກງານລັດ ຍັງມີການເຈລະຈາຄ່າບໍລິການທີ່ບໍ່ເປັນທາງການ.

**ຮູບທີ 27: ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃນຊ່ວງການຂໍທະບຽນວິສາຫະກິດ, 2017–2019**
(% ຂອງວິສາຫະກິດຈ່າຍຄ່າໃຊ້ຈ່າຍບໍ່ເປັນທາງການ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ວິສາຫະກິດສ່ວນຫຼາຍລາຍງານວ່າ ພວກເຂົາຍັງບໍ່ຮູ້ກ່ຽວກັບຄໍາສັ່ງທ່ານນາຍົກລັດຖະມົນຕີເລກທີ 02/ 2018, ມີພຽງແຕ່ 22% ຂອງຜູ້ຕອບທັງໝົດແມ່ນຮູ້ກ່ຽວກັບຄໍາສັ່ງດັ່ງກ່າວ (ຮູບທີ 28). ດັ່ງນັ້ນ, ຕ້ອງໄດ້ພະຍາຍາມເພີ່ມຕື່ມ ເພື່ອເຜີຍແຜ່ຄໍາສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018, ໂດຍສະເພາະຢ່າງຍິ່ງ ເມື່ອພິຈາລະນາເຖິງຄວາມກັງວົນຂອງວິສາຫະກິດກ່ຽວກັບຄວາມໂປ່ງໃສຕໍ່າ ແລະ ການເຂົ້າເຖິງຂໍ້ມູນຂ່າວ ສານຍັງບໍ່ທົ່ວເຖິງ. ນອກນັ້ນ, ການປັບປຸງການປະຕິບັດຕາມຂໍ້ກໍານົດກົດລະບຽບແມ່ນມີຄວາມຈໍາເປັນ ໂດຍຜ່ານຄວາມສອດຄ່ອງຂອງການນໍາໃຊ້ ແລະ ການບັງຄັບໃຊ້ກົດລະບຽບທາງທຸລະກິດ. ຈໍາເປັນຕ້ອງມີການປັບປຸງໃນດ້ານຊັບພະຍາກອນມະນຸດ, ລວມທັງຄວາມສາມາດຂອງລັດຖະບານໃນການບັງຄັບໃຊ້ລະບຽບການໃນຂັ້ນແຂວງ.

**ຮູບທີ 28: ຄວາມຮັບຮູ້ກ່ຽວກັບຄໍາສັ່ງຂອງທ່ານນາຍົກລັດຖະມົນຕີເລກທີ 02/2018**
(% ຂອງວິສາຫະກິດທັງໝົດ)




PMO = ຄໍາສັ່ງນາຍົກລັດຖະມົນຕີ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

## C. ພາລະຄ່າໃຊ້ຈ່າຍທີ່ຫຼາຍເກີນໄປສຳລັບທຸລະກິດເອກະຊົນ

ເຖິງວ່າຄຳສັ່ງທ່ານນາຍົກລັດຖະມົນຕີເລກທີ 02/2018 ໄດ້ເຮັດໃຫ້ເກີດມີການປະຕິຮູບທີ່ສຳຄັນ, ວິສາຫະກິດໃນປະເທດຍັງຄົງບໍ່ໄດ້ປຸງບ ຍ້ອນຂາດຄວາມໂປ່ງໃສ, ຄ່າໃຊ້ຈ່າຍໃນການຂໍທະບຽນສູງເກີນໄປ, ການອະນຸຍາດ ແລະ ຂໍ້ກຳນົດການອະນຸຍາດ ແລະ ການປະຕິບັດຂອງຄ່າໃຊ້ຈ່າຍບໍ່ເປັນທາງການ (ຮູບທີ 29). ເຖິງວ່າພາຍຫຼັງມີການຈັດຕັ້ງປະຕິບັດຄຳສັ່ງເລກທີ 02/2018, ຫຼາຍກວ່າສອງສ່ວນສາມຂອງວິສາຫະກິດ ທັງໝົດລາຍງານວ່າ ພວກເຂົາຕ້ອງໄດ້ຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ເພື່ອໃຫ້ໄດ້ໃບອະນຸຍາດດຳເນີນທຸລະກິດຈາກອົງການປົກຄອງທ້ອງຖິ່ນ ເມື່ອພວກເຂົາຈົດທະບຽນວິສາຫະກິດຂອງພວກເຂົາ. ເຖິງແມ່ນວ່າ ມູນຄ່າໃຊ້ຈ່າຍບໍ່ເປັນທາງການອາດຈະຫຼຸດລົງ, ໂດຍລວມຂອງການປະຕິບັດການທີ່ບໍ່ເປັນທາງການຊີ້ໃຫ້ ເຫັນເຖິງຄວາມຈຳເປັນ ສຳລັບການສ້າງຄວາມເຂັ້ມແຂງຂອງອົງການປົກຄອງທ້ອງຖິ່ນ ເພື່ອຫຼຸດຜ່ອນການສວຍໃຊ້ໂອກາດໃນການສະແຫວງຫາຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງ.

**ຮູບທີ 29: ຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການສຳລັບການຂໍທະບຽນ ແລະ ໃບອະນຸຍາດ (% ຂອງວິສາຫະກິດ)**




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ຜົນການປະເມີນຊີ້ໃຫ້ເຫັນເຖິງ ຄວາມແຕກຕ່າງກັນຫຼາຍໃນທຸກກະຊວງຂອງລັດຖະບານທີ່ວິສາຫະກິດ ຕ້ອງຮັບມືໃນການຂໍໃບອະນຸຍາດດຳເນີນທຸລະກິດ (ຮູບທີ 30).

**ຮູບທີ 30: ຄ່າໃຊ້ຈ່າຍ ແລະ ເວລາສະເລ່ຍທີ່ນຳໃຊ້ໃນການຂໍອະນຸຍາດດຳເນີນທຸລະກິດ**




Lao PDR = ສປປ ລາວ.
ແຫຼ່ງຂໍ້ມູນ: ຜູ້ຂຽນ.

ຄ່າໃຊ້ຈ່າຍໃນການຂໍທະບຽນວິສາຫະກິດຈົດສໍາເລັດໃນປີ 2019 ແມ່ນ 1.9 ລ້ານກີບ, ໃຊ້ເວລາສະເລ່ຍ 19 ວັນ. ໄລຍະເວລາສະເລ່ຍທີ່ວິສາຫະກິດນໍາໃຊ້ ເພື່ອເລີ່ມຕົ້ນທຸລະກິດ ພ້ອມກັບໃບອະນຸຍາດດໍາເນີນດໍາເນີນທຸລະກິດໃນປີ 2018 ແລະ 2019 ແມ່ນ 32 ວັນ, ແລະ ຄ່າໃຊ້ຈ່າຍສະເລ່ຍແມ່ນ 5 ລ້ານກີບ (ຮູບທີ 31). ໃບອະນຸຍາດດໍາເນີນທຸລະກິດຕ້ອງໄດ້ຂໍຕໍ່ອາຍຸທຸກໆປີ, ໂດຍນໍາໃຊ້ເວລາສະເລ່ຍ 17 ວັນ ແລະ ມີຄ່າໃຊ້ຈ່າຍ 2.1 ລ້ານກີບຕໍ່ປີ. ນອກຈາກຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ, ວິສາຫະກິດຍັງຕ້ອງໄດ້ຂໍອະນຸຍາດຕໍ່ເລກປະຈໍາຕົວອາກອນທຸກໆປີ, ເຊິ່ງໃຊ້ເວລາສະເລ່ຍ 16 ວັນ ແລະ ຄ່າໃຊ້ຈ່າຍ 2 ລ້ານກີບ. ຄ່າໃຊ້ຈ່າຍໃນການຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ ແລະ ເລກປະຈໍາຕົວອາກອນແມ່ນເລື້ອຍໆສູງກວ່າຄ່າໃຊ້ຈ່າຍໃນການຂໍທະບຽນວິສາຫະກິດເບື້ອງຕົ້ນ.

**ຮູບທີ 31: ຕົ້ນທຶນ ແລະ ເວລາທີ່ຈໍາເປັນສໍາລັບການປະຕິບັດຕາມຂັ້ນຕອນ**




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ວິສາຫະກິດສ່ວນຫຼາຍໃນປະເທດຕ້ອງໄດ້ຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃນການດໍາເນີນທຸລະກິດຂອງ ພວກເຂົາ. ຄ່າໃຊ້ຈ່າຍບໍ່ເປັນທາງການດັ່ງກ່າວສະເລ່ຍກວມອັດຕາສ່ວນ 5.6% ຂອງລາຍຮັບວິສາຫະກິດທັງໝົດ. ຫຼາຍກວ່າສອງສ່ວນສາມຂອງວິສາຫະກິດລາຍງານວ່າ ການຈ່າຍເງິນທີ່ບໍ່ເປັນທາງການ ເພື່ອຮັບປະກັນການດໍາເນີນທຸລະກິດຂອງພວກເຂົາ. ວິສາຫະກິດໃນອັດຕາສ່ວນຄ້າຍຄືກັນກ່າວວ່າ ມັນເປັນເລື້ອງປົກກະຕິທີ່ຕ້ອງມີການເຈລະຈາຕໍ່ລອງກ່ຽວກັບຈໍານວນອາກອນທີ່ພວກເຂົາຈ່າຍໃນອົງການປົກຄອງທ້ອງຖິ່ນ (ຮູບທີ 32).

**ຮູບທີ 32: ອັດຕາສ່ວນຂອງຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ**
(% ຂອງວິສາຫະກິດ)




ແຫຼ່ງຂໍ້ມູນ: ຜູ້ຂຽນ.

ສິ່ງດັ່ງກ່າວເຮັດໃຫ້ເກີດອຸປະສັກດ້ານການບໍລິຫານທີ່ໃຫຍ່ຫຼວງ ຕໍ່ການເຂົ້າເຖິງຕະຫຼາດຢ່າງເປັນທາງການ ໃນດ້ານຂອງການນໍາໃຊ້ຕົ້ນທຶນ ແລະ ເວລາສູງ ສໍາລັບການຈົດທະບຽນວິສາຫະກິດ ແລະ ການຂໍໃບອະນຸຍາດດໍາເນີນທຸລະກິດ ແລະ ຄວາມຕ້ອງການໃຫ້ຂໍຕໍ່ໃບອະນຸຍາດ ແລະ ເລກປະຈໍາຕົວອາກອນທຸກໆປີ. ມີພຽງແຕ່ 45% ຂອງຜູ້ຕອບທັງໝົດທີ່ຍອມຮັບໄດ້, ວິສາຫະກິດທີ່ເຫຼືອເຫັນວ່າມັນບໍ່ສາມາດຍອມຮັບໄດ້ ແຕ່ບໍ່ມີທາງເລືອກທີ່ຈະຫຼີກເວັ້ນພວກເຂົາ.

ສປປ ລາວ ເປັນພຽງປະເທດດຽວໃນອາຊີຕາເວັນອອກສຽງໃຕ້ ທີ່ກໍານົດໃຫ້ວິສາຫະກິດຕ້ອງຕໍ່ໃບອະນຸຍາດ ດໍາເນີນທຸລະກິດ ແລະ ເລກປະຈໍາຕົວອາກອນທຸກໆປີ. ການວິເຄາະປຽບທຽບກັບລະດັບພາກພື້ນ ແລະ ສາກົນ ທີ່ເປັນໄປຕາມວິທີການມາດຕະຖານຈະໃຫ້ຂໍ້ມູນທີ່ເປັນປະໂຫຍດ ເພື່ອປະເມີນວ່າ ສປປ ລາວ ປຽບທຽບກັບປະເທດເພື່ອນບ້ານແນວໃດ (ຫ້ອງຂໍ້ມູນ 3).

**ຫ້ອງຂໍ້ມູນ 3: ການປະເມີນສະພາບແວດລ້ອມການດໍາເນີນທຸລະກິດຂອງທະນາຄານໂລກ**

ທະນາຄານໂລກໄດ້ຕິດຕາມ ແລະ ລາຍງານກ່ຽວກັບ 12 ດ້ານຂອງລະບຽບການດໍາເນີນທຸລະກິດໃນທົ່ວໂລກ ໂດຍຜ່ານການສໍາຫຼວດສາກົນທີ່ດໍາເນີນກັບຜູ້ຊ່ຽວຊານ. ສໍາລັບ ສປປ ລາວ, ທະນາຄານໂລກໄດ້ສໍາຫຼວດ 50 ກຸ່ມວິຊາສະເພາະ ແລະ ຊ່ຽວຊານພາກເອກະຊົນຢູ່ໃນ ນະຄອນຫຼວງວຽງຈັນ. ການສໍາຫຼວດຖືກເຜີຍແຜ່ໂດຍໃຊ້ເວລາ 1 ປີ, ມີຕົວຊີ້ວັດດ້ານລະບຽບສໍາລັບການເລີ່ມຕົ້ນທຸລະກິດ ແລະ ອື່ນໆ ໂດຍພິຈາລະນາຈາກການທົບທວນກົດໝາຍ ແລະລະບຽບຂໍ້ບັງຄັບ ລວມທັງການຈັດຕັ້ງປະຕິບັດຂັ້ນຕອນເຫຼົ່ານີ້ໂດຍຜູ້ຊ່ຽວຊານກົດໝາຍ. ຈາກນັ້ນ, ການສໍາຫຼວດໄດ້ເກັບກໍາຂໍ້ມູນກ່ຽວກັບການປະຕິບັດການປະຕິຮູບທີ່ພົວພັນກັບປະສິດທິພາບຂອງລະບົບອົງກອນ. ການສໍາຫຼວດຂອງທະນາຄານໂລກໄດ້ລະບຸ 9 ຂັ້ນຕອນທີ່ຈໍາເປັນໃນການເລີ່ມທຸລະກິດໃນ ສປປ ລາວ ແລະ ໄດ້ລາຍງານວ່ານໍາໃຊ້ເວລາ 173 ວັນ ຈຶ່ງສໍາເລັດຂັ້ນຕອນດັ່ງກ່າວໃນປີ 2020, 9 ຂັ້ນຕອນປະກອບມີ: (i) ໃບຢັ້ງຢືນທະບຽນວິສາຫະກິດ 60-90 ວັນ; (ii) ລົງທະບຽນຂໍ້ບັງຄັບອື່ນໆ 7 ວັນ; (iii) ສະໝັກຂໍໃບຢັ້ງຢືນທະບຽນອາກອນ 30 ວັນ; (iv) ເຂົ້າຮ່ວມກອງປະຊຸມແນະນໍາອາກອນ ແລະ ໄດ້ຮັບເລກປະຈໍາຕົວອາກອນ 30 ວັນ; (v) ການຄວດຕາປະທັບບໍລິສັດ 14 ວັນ; (vi) ລົງທະບຽນຕາປະທັບບໍລິສັດກັບກົມປ້ອງກັນຄວາມສະຫງົບສູງສຸດ 14 ວັນ; (vii) ຂໍອະນຸຍາດເນື້ອໃນປ້າຍບໍລິສັດສູງສຸດ 14 ວັນ; (viii) ລົງທະບຽນກໍາລັງແຮງງານສໍາລັບປະກັນສັງຄົມ 7 ວັນ; ແລະ (ix) ລົງທະບຽນອາກອນມູນຄ່າເພີ່ມ 21 ວັນ.

ກົງກັນຂ້າມ, ດັດສະນີການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ແມ່ນອີງໃສ່ການສໍາຫຼວດເຈົ້າ ຂອງວິສາຫະກິດຈໍານວນ 1,357 ຫົວໜ່ວຍ ໃນ 17 ແຂວງ, ໂດຍອີງໃສ່ 6 ດັດສະນີຍ່ອຍເພື່ອນໍາສະເໜີຂໍ້ມູນກ່ຽວກັບສະພາບແວດລ້ອມ ການດໍາເນີນທຸລະກິດຂັ້ນແຂວງ. ProFIT ມີຂອບເຂດການສຶກສາທີ່ແຕກຕ່າງກັນ, ມີພຽງແຕ່ສາມຂັ້ນຕອນຖືກປະເມີນ, ເຊິ່ງນໍາໃຊ້ເວລາສະເລ່ຍໃນການຂໍອະນຸຍາດຈົນສໍາເລັດ 60 ວັນ. ສາມຂັ້ນຕອນດັ່ງກ່າວປະກອບມີ: (i) ການຂໍໃບຢັ້ງຢືນທະບຽນວິສາຫະກິດ 28 ວັນ; (ii) ການໄດ້ຮັບເລກປະຈໍາຕົວອາກອນພ້ອມກັບໃບຢັ້ງຢືນທະບຽນວິສາຫະກິດ; ແລະ (iii) ໃບອະນຸຍາດດໍາເນີນທຸລະກິດ 32 ວັນ. ຜົນໄດ້ຮັບຂອງການສໍາຫຼວດ ProFIT ໄດ້ລວມເອົາການປະຕິຮູບຂອງລັດຖະບານລ້າສຸດ ທີ່ໄດ້ປັບປຸງຂັ້ນຕອນການເລີ່ມຕົ້ນທຸລະກິດ ເຊັ່ນ: ການອອກທະບຽນວິສາຫະກິດພ້ອມກັບເລກປະຈໍາຕົວອາກອນ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ, 2022. ດັດສະນີການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ, ມະນີລາ. ທະນາຄານໂລກ, 2021. *ບົດບັນທຶກເສດຖະກິດຂອງປະເທດ, ວຽງຈັນ.*

ແຜນງານການປະຕິຮູບລະບຽບການຮອບດ້ານແມ່ນສິ່ງຈໍາເປັນສໍາລັບ ສປປ ລາວ ເພື່ອຫຼຸດຜ່ອນໄລຍະເວລາໃນການຈົດທະບຽນ, ໃບອະນຸຍາດ ແລະ ການອະນຸຍາດ ໂດຍການເຮັດໃຫ້ລະບຽບການ ແລະ ຂັ້ນຕອນການບໍລິຫານງ່າຍຂຶ້ນ ແລະ ປັບປຸງຄວາມໂປ່ງໃສໃນການຈັດຕັ້ງປະຕິບັດນະໂຍບາຍການດໍາເນີນທຸລະກິດ ໃນລະຂັ້ນແຂວງ. ໂດຍສະເພາະແມ່ນລັດຖະບານຄວນອະນຸຍາດໃຫ້ວິສາຫະກິດສາມາດເລີ່ມດໍາເນີນການໄດ້ທັນທີ ຫຼັງຈາກສໍາເລັດການຂໍທະບຽນວິສາຫະກິດ. ສ້າງໂຄງການແນະນໍາການຂໍທະບຽນວິສາຫະກິດ ທາງອີເລັກໂຕຣນິກ ສາມາດຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເວລາທີ່ຕ້ອງການສໍາລັບຂໍທະບຽນວິສາຫະກິດ, ດັ່ງທີ່ປະເທດເພື່ອນບ້ານກໍາປູເຈຍໄດ້ຈັດຕັ້ງປະຕິບັດ (ຫ້ອງຂໍ້ມູນ 4).

ວາລະການປະຕິຮູບລະບຽບການດັ່ງກ່າວ ຄວນແນ່ໃສ່ຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເວລາທີ່ຕ້ອງການ ໃຫ້ບັນດາວິສາຫະກິດໄດ້ຮັບເອກະສານທີ່ສອດຄ່ອງຕາມຄວາມຈໍາເປັນ, ສະກັດກັ້ນການໃຊ້ຈ່າຍທີ່ບໍ່ເປັນທາງການ ແລະ ປັບປຸງຄວາມໂປ່ງໃສ. ລັດຖະບານຄວນຈັດຕັ້ງວາລະການປະຕິຮູບດັ່ງກ່າວໂດຍໄວ ເພື່ອໃຫ້ໄດ້ຜົນປະໂຫຍດໃນລະຍະກາງ, ດັ່ງທີ່ປະເທດເພື່ອນບ້ານອື່ນໆໃນພາກພື້ນໄດ້ຈັດຕັ້ງປະຕິບັດ (ຫ້ອງຂໍ້ມູນ 5).

### ຫ້ອງຂໍ້ມູນ 4: ລະບົບການລົງທະບຽນທຸລະກິດອອນລາຍຂອງກໍາປູເຈຍ

ລັດຖະບານກໍາປູເຈຍໄດ້ເປີດໂຕ ລະບົບການຂໍທະບຽນວິສາຫະກິດແບບລອນລາຍ (Single Portal) ວັນທີ 15 ມິຖຸນາ, 2020. ໄດ້ອະນຸຍາດໃຫ້ນັກລົງທຶນສາມາດລົງທະບຽນວິສາຫະກິດ ແລະ ອາກອນ ຂອງພວກເຂົາຜ່ານປະຕູດຽວ, ເຊິ່ງຈະຊ່ວຍຫຼຸດຂັ້ນຕອນທີ່ບໍ່ຈໍາເປັນ. ຈາກນັ້ນ, ຄ່າທໍານຽມທັງໝົດສາມາດຈ່າຍຜ່ານອອນລາຍ ໂດຍຜ່ານຫຼາຍທາງເລືອກການຊໍາລະເງິນແບບອີເລັກໂຕຼນິກ. ຈຸດປະສົງແມ່ນເພື່ອອານຸມັດຄໍາຮ້ອງສະໝັກພາຍໃນ 8 ວັນ ລັດຖະການ.

ໄດ້ມີ 6 ກະຊວງ ທີ່ຖືກລວມເຂົ້າຢູ່ໃນລະບົບ: ກະຊວງພາຍໃນ, ກະຊວງເສດຖະກິດ ແລະ ການເງິນ, ກະຊວງການຄ້າ, ກະຊວງແຮງງານ ແລະ ຝຶກອົບຮົມວິຊາຊີບ, ກົມອາກອນທົ່ວໄປ ແລະ ສະພາພັດທະນາກໍາປູເຈຍ. ໝາຍຄວາມວ່າການນໍາໃຊ້ລະບົບນີ້ ນັກລົງທຶນສາມາດຫຼີກລ້ຽງການຊັກຊ້າ ແລະ ຄ່າບໍລິການທີ່ບໍ່ເປັນທາງການ. ລັດຖະບານມີຈຸດປະສົງທີ່ຈະຂະຫຍາຍລະບົບດັ່ງກ່າວໄປທົ່ວທຸກກະຊວງ ແລະ ສະຖາບັນ, ໝາຍຄວາມວ່າໃບອະນຸຍາດ ແລະ ໃບຢັ້ງຢືນທັງໝົດຈະຖືກອອກ ທາງດິຈິຕອລໃນອານາຄົດ.

ແຫຼ່ງຂໍ້ມູນ: ບົດລາຍງານຂອງ ASEAN 2020. *ປະເທດກໍາປູເຈຍໄດ້ເປີດໂຕ ລະບົບການຂຶ້ນທະບຽນວິສາຫະກິດແບບ ອອນລາຍ.* https://www.aseanbriefing.com/news/cambodia-launches-new-online-business-registration-system/.

### ຫ້ອງຂໍ້ມູນ 5: ການປະຕິຮູບລະບຽບການຢູ່ປະເທດຫວຽດນາມ

ການຂາດຄວາມໂປ່ງໃສໃນການດໍາເນີນທຸລະກິດແມ່ນບັນຫາໃຫຍ່ໃນປະເທດຫວຽດນາມ, ແຕ່ປະເທດແມ່ນກໍາລັງດໍາເນີນການເພື່ອແກ້ໄຂບັນຫາດັ່ງກ່າວ. ປະເທດຫວຽດນາມ ແມ່ນໄດ້ປະຕິບັດຕາມຂໍ້ກໍານົດຄວາມໂປ່ງໃສທັງໝົດທີ່ຕີພິມໂດຍອົງການ ການຄ້າໂລກ, ເຊິ່ງໄດ້ກໍານົດໃຫ້ທຸກລະບຽບ ແລະ ກົດໝາຍທັງໝົດຕ້ອງເຜີຍແຜ່ທາງອີເລັກໂຕຣນິກ ເພື່ອໃຫ້ສາທາລະນະ ມີຄໍາເຫັນພາຍໃນ 60 ວັນ, ກ່ອນທີ່ຈະມີຜົນບັບຄັບໃຊ້. ໜ່ວຍງານທີ່ອອກລະບຽບດັ່ງກ່າວ ຕ້ອງລາຍງານຄວາມຄິດເຫັນຫຼັກຂອງປະຊາຊົນຕໍ່ຜູ້ກໍານົດນະໂຍບາຍ ເພື່ອພິຈາລະນາ ແລະ ປັບປຸງຮ່າງລະບຽບດັ່ງກ່າວ. ທຸກແຂວງ, ກະຊວງ, ສານ ຕ້ອງມີເວັບໄຊສາທາລະນະທີ່ເປັນທາງການ ທີ່ມີກົດລະບຽບທັງໃນສະບັບຮ່າງ ແລະ ສະບັບສົມບູນ.

ນາຍົກລັດຖະມົນຕີໄດ້ຈັດຕັ້ງໜ່ວຍງານໃໝ່ໜຶ່ງໃນປີ 2011 ເຊິ່ງເອີ້ນວ່າ ໜ່ວຍງານຄວບຄຸມຂັ້ນຕອນການບໍລິຫານງານ (APCA), ມີໜ້າທີ່ຊີ້ນໍາການປະຕິຮູບລະບຽບການ/ຂັ້ນຕອນການບໍລິຫານງານ ແລະ ພັດທະນາລະບົບເອເລັກໂຕຣນິກຂອງ ພາກລັດ. ໜ່ວຍງານນີ້ໄດ້ຮັບການສະໜັບສະໜູນ ແລະ ແນະນໍາໂດຍຄະນະກໍາມະການທີ່ປຶກສາກ່ຽວກັບການປະຕິຮູບຂັ້ນຕອນການບໍລິຫານງານ ເຊິ່ງນໍາພາໂດຍ ກຸ່ມທຸລະກິດຕ່າງປະເທດ ແລະ ທ້ອງຖິ່ນ. APCA ແມ່ນໄດ້ສະເໜີໃຫ້ ຂັ້ນຕອນການບໍລິຫານງານ ແລະ ຄ່າໃຊ້ຈ່າຍທີ່ເປັນທາງການທັງໝົດ ຕ້ອງເຜີຍແຜ່ທາງອອນລາຍ ແລະ ຢູ່ຕາມຫ້ອງການຕ່າງໆ ຂອງພາກລັດ ບ່ອນທີ່ພາກລັດໃຫ້ການບໍລິການ.

APCA ໄດ້ປະກາດການປະຕິຮູບລະບຽບການຄັ້ງໃຫຍ່ໃນປີ 2012 ເພື່ອປັບປຸງຫຼາຍພັນລະບຽບການ ແລະ ຂັ້ນຕອນຕ່າງໆ. ນອກນັ້ນ, ຫົວໜ່ວຍທຸລະກິດລາຍໃຫຍ່ຫາກໍ່ໄດ້ຈັດຕັ້ງຄະນະກໍາມະການພັດທະນາພາກເອກະຊົນ (PSD) ເຊິ່ງຮັບຮອງໂດຍ ທ່ານນາຍົກລັດຖະມົນຕີ, ແລະ ໄດ້ລວບລວມຊັບພະຍາກອນຂອງເຂົາ ເພື່ອສະໜັບສະໜູນເລຂານຸການເຮັດວຽກແບບເຕັມ ເວລາ ເພື່ອເຮັດວຽກກັບຫ້ອງການລັດຖະບານກ່ຽວກັບການປະຕິຮູບລະບຽບການ. ຄະນະກໍາມະການ ແລະ APCA ໄດ້ເປີດ ໂຕດັດສະນີຄວາມສອດຄ່ອງຂອງຂັ້ນຕອນການບໍລິຫານງານ (APCI) ໃນປີ 2018, ເຊິ່ງຈັດອັນດັບບັນດາກະຊວງ ແລະ ໜ່ວຍງານຕ່າງໆກ່ຽວກັບຄ່າໃຊ້ຈ່າຍໃນການປະຕິບັດຕາມຂັ້ນຕອນໂດຍອີງໃສ່ການປະເມີນຂອງຈາກຫົວໜ່ວຍທຸລະກິດ, ຫ້ອງການລັດຖະບານໄດ້ສ້າງຊ່ອງທາງບໍລິການສາທາລະນະທາງອອນລາຍ ເດືອນກຸມພາ 2020, ເຊິ່ງສັງລວມທຸກຂັ້ນຕອນການບໍລິຫານງານພາກລັດ ເຂົ້າໃນຊ່ອງທາງດຽວໂດຍມີການຊໍາລະເງິນທາງເອເລັກໂຕຣນິກ, ລາຍເຊັນເອເລັກໂຕຣນິກ ແລະ ຊ່ອງທາງການຕິດຕາມເອກະສານ. ຊ່ອງທາງດັ່ງກ່າວ ເຮັດໃຫ້ຫົວໜ່ວຍທຸລະກິດ ແລະ ປະຊາຊົນ ສາມາດເຮັດທຸລະກໍາອອນລາຍກັບລັດຖະບານ ໃນຊ່ວງການແຜ່ລະບາດຂອງ COVID-19. ປະຊາຊົນ ແລະ ຫົວໜ່ວຍທຸລະກິດສາມາດສົ່ງຂໍ້ສະເໜີ ແລະ ການແນະນໍາເພື່ອການປັບປຸງຮູບແບບຂອງການບໍລິການໃຫ້ກັບຫ້ອງການລັດຖະບານໂດຍກົງ.

ແຫຼ່ງຂໍ້ມູນ: ຜູ້ຂຽນ.



# ພາກສະເໜີ 5

## ນະໂຍບາຍທາງເລືອກ

ໃນການສໍາຫຼວດ ProFIT ຄັ້ງທີ່ 2 ນີ້ ແມ່ນໄດ້ມີການສອບຖາມຄວາມຄິດເຫັນຂອງວິສາຫະກິດຈໍານວນ 1,357 ຫົວໜ່ວຍໃນ 17 ແຂວງທົ່ວ ສປປ ລາວ ກ່ຽວກັບຕົວຊີ້ວັດການຄຸ້ມຄອງຂອງພາກລັດຢູ່ໃນຂັ້ນແຂວງ ຕໍ່ກັບສະພາບແວດລ້ອມການດໍາເນີນທຸລະກິດຢູ່ພາຍໃນປະເທດ. ສະພາບແວດລ້ອມຂອງການດໍາເນີນທຸລະກິດ ໂດຍລວມໃນທົ່ວທຸກແຂວງແມ່ນໄດ້ປັບປຸງດີຂຶ້ນ ແຂວງສ່ວນຫຼາຍໄດ້ຄະແນນສູງຂຶ້ນໃນການສໍາຫຼວດຄັ້ງທີ 2 ທຽບກັບການສໍາຫຼວດຄັ້ງທີ 1, ສິ່ງດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງການປັບປຸງບາງເງື່ອນໄຂ ຂອງການດໍາເນີນທຸລະກິດໃນຂັ້ນທ້ອງຖິ່ນ.

ໃນບັນດາ ແຂວງທົ່ວປະເທດ, ແຂວງວຽງຈັນແມ່ນໄດ້ຄະແນນສູງສຸດສໍາລັບດັດສະນີ ProFIT ລື່ນ ແຂວງອື່ນໃນດ້ານການຫຼຸດຜ່ອນພາລະທາງດ້ານລະບຽບການ ແລະ ການໃຊ້ຈ່າຍທີ່ບໍ່ເປັນທາງການ. ເຖິງຢ່າງໃດກໍຕາມ, ແຂວງສະຫວັນນະເຂດແມ່ນໄດ້ມີການປັບປຸງຫຼາຍສຸດລະຫວ່າງປີ 2017 ແລະ 2019, ແຂວງດັ່ງກ່າວໄດ້ມີການປັບປຸງຫຼາຍຂະແໜງການຂອງສະພາບແວດລ້ອມໃນການດໍາເນີນທຸລະກິດ ໂດຍສະເພາະແມ່ນ ຄວາມສອດຄ່ອງໃນການຈັດຕັ້ງປະຕິບັດດ້ານນະໂຍບາຍ ແລະ ການຫຼຸດຜ່ອນພາລະດ້ານລະບຽບການ. ເຖິງແມ່ນວ່າມີການປັບປຸງໃນຫຼາຍດ້ານກໍຕາມ ແຕ່ກໍ່ຍັງມີຫຼາຍໜ້າວຽກສໍາຄັນທີ່ຕ້ອງໄດ້ ເຮັດໃຫ້ຂັ້ນຕອນຕ່າງໆສະດວກຂຶ້ນ ເພື່ອສ້າງສິ່ງກະຕຸ້ນໃຫ້ມີການດຶງດູດການລົງທຶນຂອງພາກເອກະຊົນເພີ່ມຂຶ້ນ. ສິ່ງດັ່ງກ່າວໄດ້ຊີ້ໃຫ້ເຫັນເຖິງຄວາມຈໍາເປັນ ໃນການເຮັດໃຫ້ສະພາບແວດລ້ອມການດໍາເນີນທຸລະກິດຂອງປະເທດສະດວກຂຶ້ນ, ເສີມສ້າງຂີດຄວາມສາມາດຂອງພະນັກງານລັດ ແລະ ທີ່ສໍາຄັນແມ່ນການເທົ່າທຽມກັນ ເຊິ່ງເຮັດໃຫ້ພະນັກງານລັດມີຄວາມເປັນມິດຕໍ່ພາກທຸລະກິດຫຼາຍຂຶ້ນ.

ເຖິງວ່າໂດຍລວມຈະມີການປັບປຸງດັດສະນີຂອງ ProFIT ໃນການສໍາຫຼວດຄັ້ງທີ່ 2, ແຕ່ຄວາມຄືບໜ້າກໍ່ເປັນໄປຢ່າງລ່າຊ້າ ໂດຍສະເພາະຄວາມໂປ່ງໃສໃນການເຂົ້າເຖິງຂໍ້ມູນຂ່າວສານ (TAI), ຄວາມເປັນມິດຕໍ່ທຸລະກິດ ແລະ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ. ໃນປີ 2019 ມີ 11 ຈາກທັງໝົດ 17 ແຂວງມີເວັບໄຊ ແລະ ຕົວເລກດັ່ງກ່າວໄດ້ຫຼຸດລົງເຫຼືອພຽງ 7 ແຂວງ ໃນເວລາທີ່ກໍາລັງຕີພິມບົດລາຍງານດັ່ງກ່າວ. ແຕ່ປະສິດທິພາບຂອງການເຜີຍແຜ່ກົດລະບຽບໃໝ່ລວມທັງຄຸນນະພາບຂອງໂຄງລ່າງພື້ນຖານດ້ານການສື່ສານ ແລະ ລະບົບສໍາລັບສະໜັບສະໜູນການເຜີຍແຜ່ຍັງມີຂໍ້ຈໍາກັດ. ຜົນການສໍາຫຼວດ ProFIT ໃນປີ 2019 ຍັງໄດ້ຢັ້ງຢືນໃຫ້ເຫັນວ່າ ລັດຖະບານໄດ້ເລີ່ມດໍາເນີນຕາມແຜນປະຕິຮູບຕາມຄໍາສັ່ງນາຍົກລັດຖະມົນຕີເລກ ທີ 02/2018 ໂດຍເຫັນໄດ້ຈາກຜູ້ຕອບແບບສອບຖາມຈໍານວນຫຼາຍໄດ້ລາຍງານວ່າຕົ້ນທຶນ ແລະ ໄລຍະເວລາທີ່ຕ້ອງການໃນການເລີ່ມຕົ້ນທຸລະກິດແມ່ນຫຼຸດລົງພາຍຫຼັງມີການປະຕິຮູບດັ່ງກ່າວ.

ຂໍ້ກໍານົດດ້ານກົດລະບຽບ ແລະ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການທີ່ຫຼາຍເກີນໄປໃນລະດັບທ້ອງຖິ່ນ ຍັງຄົງເປັນສິ່ງທ້າທາຍຫຼັກສໍາລັບວິສາຫະກິດສ່ວນໃຫຍ່. ຫຼາຍກວ່າ 70% ຂອງວິສາຫະກິດພາຍໃນປະເທດ ຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃຫ້ກັບອົງການປົກຄອງທ້ອງຖິ່ນ ເພື່ອຮັບປະກັນວ່າພວກເຂົາຈະໄດ້ຮັບ ທະບຽນວິສາຫະກິດ, ໃບອະນຸຍາດ ແລະ ໄດ້ຮັບອະນຸຍາດໃນການດໍາເນີນທຸລະກິດ. ລາຍຮັບທີ່ຄວນ ໄດ້ຈາກການເກັບອາກອນຈໍານວນຫຼາຍຖືກສູນເສຍຍ້ອນການປະຕິບັດດັ່ງກ່າວ, ແນະນໍາໃຫ້ມີການທົບທວນ ນະໂຍບາຍທີ່ຄວບຄຸມສະພາບແວດລ້ອມໃນການດໍາເນີນທຸລະກິດເພື່ອປັບປຸງ ແລະ ດຶງດູດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ. ຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດການປະຕິຮູບ ແມ່ນຕ້ອງໄດ້ປັບປຸງ ຄວາມສະດວກໃນການຂໍທະບຽນວິສາຫະກິດໃນທົ່ວທຸກແຂວງ ເພື່ອສ້າງວຽກເຮັດງານທໍາໃນຂະແໜງທຸລະກິດທີ່ເປັນທາງການຫຼາຍຂຶ້ນ ແລະ ສະໜັບສະໜູນປະເທດໃຫ້ບັນລຸຈຸດປະສົງທັງຂອງແຜນພັດທະນາເສດຖະກິດ ແລະ ສັງຄົມ ແຫ່ງຊາດຄັ້ງທີ່ 9, ພ້ອມທັງຊ່ວຍໃຫ້ປະເທດບັນລຸເປົ້າໝາຍທີ່ໄດ້ຕັ້ງໄວ້ໃນປີ 2030 ວ່າດ້ວຍການພັດທະນາແບບຍືນຍົງ.

ບັນດາມາດຕະການນະໂຍບາຍປະຈຸບັນນີ້ ມີຈຸດປະສົງເພື່ອລວມສູນຂໍ້ກໍານົດກ່ຽວກັບການດໍາເນີນທຸລະກິດ ແລະ ນໍາໄປສູ່ການປັບປຸງສະພາບແວດລ້ອມການດໍາເນີນທຸລະກິດໃນທົ່ວປະເທດ. ເຖິງຢ່າງໃດກໍຕາມ, ຄວາມຄືບໜ້າດ້ານຄວາມໂປ່ງໃສຂອງລະບຽບການ ແລະ ລະບຽບການຕ່າງໆຂອງແຂວງຍັງບໍ່ມີຄວາມຊັດເຈນ, ເຮັດໃຫ້ມີຄວາມເປັນໄປໄດ້ໃນການປັບປຸງເພີ່ມເຕີມ ເພື່ອໃຫ້ສະພາບແວດລ້ອມການດໍາເນີນທຸລະກິດ ເປັນມິດກັບວິສາຫະກິດເພີ່ມຂຶ້ນ. ການດໍາເນີນທຸລະກິດທີ່ບໍ່ເປັນທາງການຍັງຄົງມີແຜ່ຫຼາຍ ເຊິ່ງໄດ້ສົ່ງຜົນ ໃນທາງລົບຕໍ່ການເຕີບໂຕຂອງວິສາຫະກິດ ແລະ ການເກັບລາຍຮັບຂອງລັດຖະບານ. ຜົນຂອງການສຶກສາຂອງບົດລາຍງານນີ້ຊີ້ໃຫ້ເຫັນວ່າວິສາຫະກິດໃນ ສປປ ລາວ ຍັງຄົງເສຍປຽບເນື່ອງຈາກ ຂໍ້ກໍານົດດ້ານລະບຽບການທີ່ຫຼາຍເກີນໄປ ແລະ ຍັງຄົງມີການປະຕິບັດແບບບໍ່ເປັນທາງການຢ່າງຕໍ່ເນື່ອງ, ໂດຍສະເພາະ ເມື່ອປຽບທຽບກັບປະເທດເພື່ອນບ້ານ ເຊັ່ນ: ກໍາປູເຈຍ ແລະ ຫວຽດນາມ. ຫຼາຍກວ່າສອງສ່ວນສາມຂອງ ວິສາຫະກິດໃນປະເທດລາຍງານວ່າ ພວກເຂົາຕ້ອງຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການໃຫ້ກັບພະນັກງານລັດ ຢູ່ທ້ອງຖິ່ນສໍາລັບການຈົດທະບຽນວິສາຫະກິດ, ໄດ້ຮັບໃບອະນຸຍາດ ແລະ ການອະນຸມັດຕ່າງໆ. ການເຈລະຈາຕໍ່ລອງໃນການຈ່າຍອາກອນລະຫວ່າງວິສາຫະກິດ ແລະ ໜ່ວຍງານ

ເກັບອາກອນໃນລະດັບທ້ອງຖິ່ນ ຍັງມີຢ່າງແພ່ຫຼາຍໃນທຸກແຂວງ, ການປະຕິຮູບສະພາບແວດລ້ອມການດຳເນີນທຸລະກິດທີ່ມີປະສິດທິພາບ ແລະ ຊື່ສັດ ເປັນສິ່ງຈຳເປັນ ເພື່ອສ້າງຄວາມເຊື່ອໝັ້ນທາງທຸລະກິດ ເພື່ອຂັບເຄື່ອນການຟື້ນຕົວຢ່າງແຂງແຮງຂອງວິສາຫະກິດ ຫຼັງການແພ່ລະບາດຂອງ COVID-19.

ທາງເລືອກສຳຄັນຂອງນະໂຍບາຍທັງອົງການປົກຄອງແຂວງ ແລະ ລັດຖະບານຈາກສູນກາງຈະຕ້ອງໄດ້ພິຈາລະນາຢ່າງຈິງຈັງໃນການດຳເນີນການໃນຂັ້ນຕໍ່ໄປດັ່ງໄດ້ສະຫຼຸບລຸ່ມນີ້, ໂດຍສະເພາະແມ່ນ ການລວມຂໍ້ກຳນົດຕ່າງໆເພື່ອກະຕຸ້ນການຈັດຕັ້ງປະຕິບັດທີ່ເປັນທາງການ, ປັບປຸງຄວາມໂປ່ງໃສ, ແລະ ການປັບປຸງຄຸນນະພາບຂອງການຈັດຕັ້ງປະຕິບັດນະໂຍບາຍ.

## ສັງລວມຂໍ້ກຳນົດດ້ານລະບຽບການເພື່ອສ້າງສິ່ງຈູງໃຈໃນການສ້າງວິສາຫະກິດທີ່ເປັນທາງການ

1. **ການລວມເອົາການລົງທະບຽນວິສາຫະກິດຜ່ານລະບົບອີເລັກໂຕຣນິກ**. ການຈັດຕັ້ງປະຕິບັດຂັ້ນຕອນການລົງທະບຽນທຸລະກິດແບບອອນລາຍ ຄວນໄດ້ຮັບການເລັ່ງລັດ. ໜຶ່ງໃນຂໍ້ແນະນຳ ໃນຄຳສັ່ງຂອງທ່ານນາຍົກລັດຖະມົນຕີເລກທີ 02/2018 ແມ່ນອະນຸຍາດໃຫ້ວິສາຫະກິດລົງທະບຽນແບບອອນລາຍ. ກຳປູເຈຍ, ມຽນມາ ແລະ ຫວຽດນາມ ໄດ້ກ່າວໄປສູ່ການລົງທະບຽນວິສາຫະກິດທາງ ອອນລາຍ, ເຊິ່ງໄດ້ຫຼຸດຕົ້ນທຶນ ແລະ ເວລາທີ່ຕ້ອງການ ສຳລັບການດຳເນີນທຸລະກິດຢູ່ໃນປະເທດ ເຫຼົ່ານັ້ນ. ວິສາຫະກິດຢູ່ໃນ ສປປ ລາວ ຍັງຕ້ອງໄດ້ຈົດທະບຽນວິສາຫະກິດແບບອອນລາຍ ທັງໃນລະດັບປະເທດ ແລະ ແຂວງ ແລະ ຍັງຕ້ອງໄດ້ປະສານກັບຫຼາຍໜ່ວຍງານ, ເຊິ່ງເຮັດໃຫ້ມີຕົ້ນທຶນການດຳເນີນງານທີ່ສູງ ລວມທັງຕົ້ນທຶນທາງການເງິນ ແລະ ຕົ້ນທຶນຂອງຄວາມຫຼ້າຊ້າ. ໂຄງການລົງທະບຽນວິສາຫະກິດທາງອີເລັກໂຕຣນິກ ຄວນວາງຂໍ້ມູນກ່ຽວກັບລະບຽບຂໍ້ບັງຄັບທາງອອນລາຍ ແລະ ບໍລິສັດທີ່ສະໝັກຕ້ອງຕື່ມຂໍ້ມູນໃຫ້ຄົບຖ້ວນກ່ອນເລີ່ມດຳເນີນການ. ເຖິງຢ່າງໃດກໍຕາມ, ເນື່ອງຈາກຫຼາຍກວ່າ 95% ຂອງບົດລາຍງານສະບັບທຳອິດແມ່ນຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ, ຈຶ່ງຍັງຄົງຕ້ອງໄດ້ເບິ່ງຕື່ມວ່າ ພວກເຂົາຈະໄດ້ຮັບການຝຶກອົບຮົມພຽງພໍທີ່ຈະເຂົ້າໃຈ ເຄື່ອງມືຂອງເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານແບບໃໝ່. ການສ້າງແຜນຝຶກອົບຮົມວິສາຫະກິດເຫຼົ່ານີ້ ໃນການນຳໃຊ້ເຄື່ອງມືເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ໂດຍການສະໜັບສະໜູນຈາກລັດຖະບານ ຫຼື ຮ່ວມທຶນລະຫວ່າງລັດຖະບານ ແລະ ວິສາຫະກິດຈະເປັນການຊ່ວຍເຫຼືອອັນສຳຄັນ ໃຫ້ວິສາຫະກິດຕ່າງໆຍອມຮັບເຄື່ອງມືເຕັກໂນໂລຊີ ແລະ ການສື່ສານ.

2. **ການປະຕິຮູບການອອກໃບອະນຸຍາດ ແລະ ການກວດກາ**. ໃນປະຈຸບັນ, ອົງການປົກຄອງທ້ອງຖິ່ນ ໃນປະເທດຮຽກຮ້ອງໃຫ້ທຸລະກິດປະຕິບັດຕາມລະບຽບເຖິງວ່າກ່ອນທີ່ຈະເລີ່ມດຳເນີນການ. ຈາກປະສົບການສາກົນໄດ້ສະແດງໃຫ້ເຫັນວ່າ, ຍົກເວັ້ນກິດຈະກຳທີ່ມີຄວາມສ່ຽງສູງ, ການຄວບຄຸມ ແລະ ຫຼຸດຄວາມສ່ຽງລະຫວ່າງການດຳເນີນທຸລະກິດໄດ້ດີກວ່າ ເມື່ອຂະບວນການ ແລະ ການຈັດຕັ້ງປະຕິບັດຂອງວິສາຫະກິດເລີ່ມດຳເນີນການຢ່າງເຕັມສ່ວນ. ກົດລະບຽບ ແລະ ມາດຕະຖານຈະລະບຸໄວ້ຊັດເຈນໃນຂັ້ນເລີ່ມຕົ້ນ, ຈາກນັ້ນຈຶ່ງມີການຕິດຕາມກວດກາຢ່າງລະອຽດໃນລະຫວ່າງການປະຕິບັດງານ ແລະ ບໍ່ແມ່ນກວດສອບກ່ອນ. ນີ້ແມ່ນຊ່ວຍໃຫ້ປະເມີນການດຳເນີນທຸລະກິດໄດ້ດີຂຶ້ນ ຫຼັງຈາກເລີ່ມດຳເນີນການ ການກວດສອບມີຄວາມເປັນໄປໄດ້ສູງທີ່ຈະຮັບຮອງການປະຕິບັດຕາມກົດໝາຍ, ກົດລະບຽບ ແລະ ມາດຕະຖານ ເມື່ອປຽບທຽບກັບການກວດສອບທີ່ໄດ້ດຳເນີນການກ່ອນທີ່ທຸລະກິດຈະເລີ່ມດຳເນີນການ. ນອກຈາກການປະຕິຮູບໃນການອອກໃບອະນຸຍາດ ແລະ ການກວດສອບແລ້ວ ຍັງມີປະໂຫຍດໃນການເຮັດໃຫ້ຂັ້ນຕອນການລົ້ມລະລາຍທີ່ຫຍຸ້ງຍາກໃນປະເທດງ່າຍຂຶ້ນ. ເພື່ອຮັບປະກັນການເຕີບໂຕຂອງວິສາຫະກິດ, ຍຸດທະສາດທາງອອກທີ່ດີ ໂດຍຜ່ານຂັ້ນຕອນຂອງການລົ້ມລະລາຍທີ່ເໝາະສົມ ແມ່ນມີຄວາມສຳຄັນທຽບເທົ່າກັບການປະຕິຮູບເພື່ອເຮັດໃຫ້ຂັ້ນຕອນງ່າຍດາຍຂຶ້ນ ເພື່ອເຮັດໃຫ້ຜູ້ປະກອບການກ້າວເຂົ້າສູ່ທຸລະກິດໄດ້.

3. **ແນະນຳລະບົບການອອກໃບອະນຸຍາດຕາມຄວາມສ່ຽງ**. ການປະຕິຮູບຂໍ້ກຳນົດສຳລັບການອອກໃບອະນຸຍາດດຳເນີນທຸລະກິດຕາມການໃຊ້ລະບົບການອອກໃບອະນຸຍາດແບບ“ວິທີການທີ່ອີງຕາມຄວາມສ່ຽງ”,ລະບົບການອອກໃບອະນຸຍາດເຊິ່ງສະໜັບສະໜູນໃຫ້ເຈົ້າໜ້າທີ່ອອກໃບອະນຸຍາດ ສາມາດນຳໃຊ້ໃບອະນຸຍາດດັ່ງກ່າວເປັນເຄື່ອງມືຫຼຸດຜ່ອນຜົນກະທົບແທນທີ່ຈະເປັນເຄື່ອງມືຫຼົບຫຼີກ, ເພື່ອຈັດການກັບຄວາມສ່ຽງທີ່ສຳຄັນທີ່ກິດຈະ

ກໍາທາງທຸລະກິດສາມາດສ້າງຕໍ່ສຸຂະພາບ, ຄວາມປອດໄພ, ຄວາມໝັ້ນຄົງຂອງປະຊາຊົນ, ຜູ້ບໍລິໂພກ, ທຸລະກິດອື່ນໆ ແລະ ສິ່ງແວດລ້ອມ. ກ່າວອີກຢ່າງໜຶ່ງ, ຂໍ້ກໍານົດໃບອະນຸຍາດດໍາເນີນທຸລະກິດໃນຂະແໜງການ ແລະ ກິດຈະກໍາຕ່າງໆ ຄວນຢູ່ບົນພື້ນຖານຂອງການປະເມີນຕາມຫຼັກການ, ເຊິ່ງສະຫຼຸບໄດ້ວ່າມີຄວາມເປັນໄປໄດ້ສູງ ແລະ ຄວາມເສຍຫາຍຈໍານວນຫຼາຍສາມາດເກີດຂຶ້ນ ໂດຍການເລີ່ມຕົ້ນກິດຈະກໍາທາງທຸລະກິດ. ການປະຕິບັດວິທີການດັ່ງກ່າວ ຈະລວມຂໍ້ກໍານົດສໍາລັບທຸລະກິດເພື່ອໃຫ້ສອດຄ່ອງກັບລະບຽບການ.

## ການປັບປຸງຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານໃນຂັ້ນສູນກາງ ແລະ ລະດັບແຂວງ

4. **ການປັບປຸງການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບລະບຽບການ**. ລັດຖະບານທັງຈາກສູນກາງ ແລະ ແຂວງ ຄວນສ້າງລາຍການຂໍ້ກໍານົດດ້ານລະບຽບການ ທີ່ສອດຄ່ອງກັນ ແລະ ຄົບຖ້ວນຕໍ່ສາທາລະນະ. ເຊິ່ງລວມມີຂັ້ນຕອນການດໍາເນີນທຸລະກິດແຕ່ລະຂັ້ນຕອນເທື່ອລະກ້າວ ແລະ ການປະຕິບັດຕາມລະບຽບການຂອງລັດຖະບານ ເຊັ່ນ: ການລົງທະບຽນວິສາຫະກິດ, ການອອກໃບອະນຸຍາດ, ການກວດສອບ ແລະ ອາກອນ. ໂດຍທົ່ວໄປ, ເຈົ້າໜ້າທີ່ຈະບໍ່ເປີດເຜີຍຂໍ້ມູນນີ້ແກ່ທຸລະກິດ ໃນລັກສະນະທີ່ເປັນມິດຕໍ່ຜູ້ໃຊ້, ບັງຄັບໃຫ້ບັນດາວິສາຫະກິດໄປຢ້ຽມຢາມຫ້ອງການລັດຖະບານຫຼາຍຄັ້ງເພື່ອໃຫ້ໄດ້ຮັບຂໍ້ມູນດັ່ງກ່າວ. ລັດຖະບານສາມາດແກ້ໄຂບັນຫານີ້ ໂດຍການຮັກສາການລົງທະບຽນແບບອອນລາຍ ແລະ ປັບປຸງຂໍ້ມູນດັ່ງກ່າວເປັນປະຈໍາທີ່ຂັ້ນສູນກາງ ແລະ ຮັບປະກັນວ່າ ບ່ອນເກັບມ້ຽນນີ້ຖືກເຊື່ອມຕໍ່ກັບເວັບໄຊຂອງອົງການປົກຄອງແຂວງ.

5. **ສ້າງຄວາມໂປ່ງໃສໂດຍຜ່ານມາດຕະຖານຂັ້ນຕໍ່າສໍາລັບເວັບໄຊຂອງແຂວງ**. ລັດຖານບານອີເລັກໂຕຣນິກ (E-Government) ບໍ່ສາມາດຈັດຕັ້ງປະຕິບັດໄດ້ ເວັ້ນເສຍແຕ່ບັນດາແຂວງຕ່າງໆມີເວັບໄຊທາງການທີ່ສາມາດເຂົ້າເຖິງໄດ້ງ່າຍສໍາລັບທຸລະກິດ, ນັກລົງທຶນທີ່ມີທ່າແຮງທັງພາຍໃນ ແລະ ຕ່າງປະເທດ. ເຖິງຢ່າງໃດກໍຕາມ, ເວັບໄຊຂອງແຂວງໃນທົ່ວປະເທດແຕກຕ່າງກັນຢ່າງຫຼວງຫຼາຍ ໃນດ້ານຄຸນນະພາບ ແລະ ຄວາມສົມບູນ, ເຊິ່ງມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ການເຂົ້າເຖິງຂໍ້ມູນ ຂ່າວສານສໍາລັບວິສາຫະກິດ. ເວັບໄຊແຂວງຢ່າງຕໍ່າຕ້ອງປະກອບມີ: ງົບປະມານແຂວງ, ໂອກາດໃນການຈັດຊື້ຈັດຈ້າງພາກລັດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນການນໍາໃຊ້ທີ່ດິນ, ລາຍການຄ່າທໍານຽມທີ່ເປັນທາງການ, ກົດລະບຽບ, ແຈ້ງການກ່ຽວກັບຮ່າງກົດລະບຽບທ້ອງຖິ່ນ ເພື່ອໃຫ້ມີຄໍາເຫັນ ແລະ ມີຂໍ້ແນະນໍາ, ແບບຟອມ ແລະ ຂັ້ນຕອນການບໍລິຫານ. ປະຈຸບັນປະຊາກອນສ່ວນຫຼາຍໃນ ສປປ ລາວ ໄດ້ຖືກຄອບຄຸມດ້ວຍເຄືອຂ່າຍມືຖືທີ່ມີການເຂົ້າເຖິງອິນເຕີເນັດ, ເຊິ່ງຊີ້ໃຫ້ເຫັນວ່າມີຄວາມເປັນໄປໄດ້ສູງຂອງການເຊື່ອມຕໍ່ດີຈິຕອລ ຈະຊ່ວຍກະຈາຍຂໍ້ມູນທີ່ມີປະສິດທິພາບ ຜ່ານເວັບໄຊທາງການຂອງລັດຖະບານໄປສູ່ປະຊາກອນສ່ວນໃຫຍ່.

6. **ການລວມເອົາການບໍລິການຂອງລັດຖະບານໄປສູ່ຮູບແບບອອນລາຍ**. ລັດຖະບານຈາກສູນກາງ ແລະ ຂັ້ນແຂວງ ຕ້ອງໄດ້ພິຈາລະນາວ່າ ເຂົາເຈົ້າສາມາດນໍາໃຊ້ການບໍລິການທາງອິນເຕີເນັດໄດ້ ຢ່າງສົມບູນແບບແນວໃດ ເພື່ອຫຼຸດຜ່ອນການພົບປະກັນແບບໜ້າເຊິ່ງໜ້າ. ການເຮັດທຸລະກໍາກ່ຽວກັບ ອາກອນ ແລະ ການຊໍາລະອາກອນອາກອນຄວນດໍາເນີນການແບບອອນລາຍໄວເທົ່າທີ່ຈະໄວໄດ້ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນການດໍາເນີນງານ ແລະ ຈໍາກັດການສວຍໃຊ້ໂອກາດໃນການສະແຫວງຫາຜົນປະໂຫຍດ ໃນທາງທີ່ບໍ່ຖືກຕ້ອງ. ການບໍລິການອື່ນໆທີ່ກ່ຽວຂ້ອງກັບວິສາຫະກິດເຊັ່ນ: ປະກັນສັງຄົມ ຫຼື ໂຄງການປະກັນໄພ, ສາມາດເຊື່ອມຕໍ່ທາງດິຈິຕອລ ກັບການລົງທະບຽນວິສາຫະກິດ ແລະ ການຈັດເກັບອາກອນ.

## ຄຸນນະພາບຂອງການສ້າງນະໂຍບາຍ ແລະ ການຈັດຕັ້ງປະຕິບັດຢູ່ຂັ້ນສູງກາງ ແລະ ຂັ້ນແຂວງ

7. **ການປຶກສາຫາລືລະຫວ່າງພາກລັດ ແລະ ເອກະຊົນ**. ມັນມີຄວາມຈໍາເປັນທີ່ລັດຖະບານໃນທຸກຂັ້ນ ຕ້ອງມີສ່ວນຮ່ວມພາກເອກະຊົນ ໂດຍຜ່ານການຮ່ວມມືເພື່ອກໍານົດບັນຫາ, ທ່າແຮງໃນອະນາຄົດ, ການແກ້ໄຂຢ່າງໃກ້ຊິດ ແລະ ເປັນລະບົບ. ການຮ່ວມມືຄວນເອົາໃຈໃສ່ດ້ານເຕັກນິກທີ່ເຂັ້ມແຂງ ໃນການວິເຄາະອຸປະສັກຂອງທຸລະກິດ, ພ້ອມທັງເຂົ້າໃຈຄວາມຕ້ອງການຂອງຕະຫຼາດພາກພື້ນ ແລະ ສາກົນໃນປະຈຸບັນ ແລະ ອານາຄົດ, ຫຼີກລ້ຽງກົດລະບຽບທີ່ຫຼາຍເກີນໄປ ແລະ ການອຸດໜູນ. ກອງປະຊຸມທຸລະກິດລາວປະຈໍາປີ ເປັນຕົວຢ່າງຂອງການຈັດຕັ້ງປະຕິບັດທີ່ດີທີ່ສຸດ ໃນການເຈລະຈາທີ່ສາມາດເຮັດຊໍ້າໄດ້ໃນລະດັບຂະແໜງການ ແລະ ແຂວງ. ອົງການປົກຄອງທ້ອງຖິ່ນມີບົດບາດສໍາຄັນໃນການສົ່ງເສີມການພັດທະນາພາກເອກະຊົນໃນທ້ອງຖິ່ນ. ອົງການປົກຄອງແຂວງ ຄວນພິຈາລະນາສ້າງຕັ້ງຄະນະປະຕິບັດງານ ໂດຍມີໜ້າທີ່ສ້າງການປຶກສາຫາລືລະຫວ່າງພາກ

ລັດ ແລະ ເອກະຊົນ.

8. **ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະນຳຂັ້ນກະຊວງກ່ຽວກັບການປະຕິຮູບສະພາບແວດລ້ອມການດຳເນີນທຸລະກິດ.** ເພີ່ມລາຍລະອຽດ ແລະ ໃຫ້ອຳນາດແກ່ຄະນະເຮັດວຽກສະເພາະກິດລະຫວ່າງລັດຖະມົນຕີທີ່ຫາກໍ່ໄດ້ຮັບການແຕ່ງຕັ້ງ ໃຫ້ດຳເນີນວາລະການປະຕິຮູບ, ການປັບປຸງແປງ ເພື່ອໃຫ້ພາກເອກະຊົນມີບົດບາດສຳຄັນໃນການຟື້ນຕົວຫຼັງເກີດໂລກລະບາດໃນປະເທດ, ເຊິ່ງລວມເຖິງການສະໜັບສະໜູນ ການຈັດລຳດັບຄວາມສຳຄັນ ແລະ ການຈັດລຳດັບຂອງການປະຕິຮູບ ແລະ ການເສີມສ້າງຄວາມສາມາດຂອງຄະນະເຮັດວຽກໃນການປະສານງານລະຫວ່າງກະຊວງ ແລະ ແຂວງ.

9. **ການຈັດການຄວາມສາມາດ ແລະ ການພັດທະນາທຶນມະນຸດເພື່ອການຄຸ້ມຄອງທີ່ດີກວ່າ.** ສົ່ງເສີມຂີດຄວາມສາມາດຂອງພະນັກງານສູນກາງ ແລະ ແຂວງ ໃນການປັບປຸງສະພາບແວດລ້ອມດ້ານລະບຽບການສຳລັບທຸລະກິດ ໂດຍການລົງທຶນໃນລະບົບຂໍ້ມູນຂ່າວສານ ແລະ ການຈັດການຂໍ້ມູນ. ຝຶກອົບຮົມການສ້າງຄວາມອາດສາມາດດ້ານອອນລາຍ ຕະຫຼອດຈົນລະບົບຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີທີ່ກ່ຽວຂ້ອງຕ້ອງໄດ້ປັບປຸງ. ການສະໝັກໃຊ້ບໍລິການຕ່າງໆ ເຊັ່ນ: ການບໍລິການທີ່ສະເໜີພາຍໃຕ້ Microsoft Office 365 ລວມທັງ SharePoint ແລະ Outlook, ສາມາດເຮັດໃຫ້ໄດ້ຮັບຜົນສຳລັບການບໍລິການທີ່ທັນສະໄໝ ແລະ ການປັບປຸງການດຳເນີນງານ. ການຮູ້ໜັງສືດິຈິຕອລໄດ້ກາຍເປັນຄວາມສາມາດທີ່ສຳຄັນ, ຄຽງຄູ່ກັບທັກສະດ້ານກົນລະຍຸດ ແລະ ການຕັດສິນໃຈ. ການລົງທຶນໃສ່ຂະແໜງການດັ່ງກ່າວ ຈະປະກອບສ່ວນເຂົ້າໃນການປັບປຸງຄຸ້ມຄອງ ແລະ ການເສີມສ້າງປະສິດທິພາບໃນການຕັດສິນໃຈທີ່ຈຳເປັນສຳລັບການປັບປຸງສະພາບແວດລ້ອມການດຳເນີນທຸລະກິດ.

ບົດລາຍງານນີ້ໄດ້ຍົກໃຫ້ເຫັນເຖິງຄວາມຄືບໜ້າໃນຂະບວນການ ແລະ ການປະຕິບັດການປະຕິຮູບດ້ານນະໂຍບາຍເພື່ອແນໃສ່ຫຼຸດຜ່ອນອຸປະສັກຕໍ່ການພັດທະນາທຸລະກິດ ແລະ ສ້າງຄວາມຫຼາກຫຼາຍໃນລະດັບແຂວງ ໃນປະເທດ. ເຖິງຢ່າງໃດກໍຕາມ, ຍັງມີຂອບເຂດທີ່ສຳຄັນໃນການປັບປຸງຕື່ມອີກ, ດັ່ງທີ່ລັດຖະບານ ໄດ້ຮັບຮູ້ໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9 ໄລຍະ 2021-2025. ເສດຖະກິດ ແລະ ຂຸມຊົນທຸລະກິດຂອງ ສປປ ລາວ ໄດ້ຮັບຜົນກະທົບໜັກຈາກການແຜ່ລະບາດພະຍາດໂຄວິດ-19. ການຜ່ານຜ່າສິ່ງທ້າທາຍທີ່ເກີດຈາກໂຄວິດ-19 ມັນຮຽກຮ້ອງໃຫ້ພາກເອກະຊົນ ພ້ອມທັງລັດຖະບານທຸກຂັ້ນປັບປຸງແປງການຈັດຕັ້ງປະຕິບັດ ແລະ ການປະຕິຮູບທີ່ສຳຄັນເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ຄວາມສ່ຽງຂອງການດຳເນີນທຸລະກິດແມ່ນມີຄວາມຈຳເປັນສຳລັບການດຶງດູດການລົງທຶນໃໝ່ ເພື່ອຊຸກຍູ້ການຟື້ນຕົວຂອງເສດຖະກິດ. ດັດສະນີ ProFIT ແລະ ຕົວຊີ້ວັດຍ່ອຍເປັນເຄື່ອງມືໃນການສົ່ງເສີມການເຈລະຈາລະຫວ່າງ ພາກກະຊົນ ແລະ ອົງການປົກຄອງທ້ອງຖິ່ນໃນປະເທດ.

ບົດລາຍງານນີ້ໄດ້ສ່ອງແສງໃຫ້ເຫັນຄວາມສຳຄັນບາງຢ່າງ ກ່ຽວກັບການປັບປຸງທີ່ເກີດຂຶ້ນໃນປີ 2019, ເນື່ອງຈາກການລິເລີ່ມຕ່າງໆຂອງລັດຖະບານ ໄດ້ຊີ້ໃຫ້ເຫັນບາງສິ່ງທ້າທາຍໃນການປະຕິບັດ. ການປະເມີນຜົນການດຳເນີນງານຂອງລັດຖະບານຂັ້ນແຂວງແມ່ນມີປະໂຫຍດ ໃນການຕິດຕາມການປະຕິບັດລະບຽບການໃນທ້ອງຖິ່ນ, ທັງເປັນການຊຸກຍູ້ການປະຕິຮູບພາຍນອກຂອງລັດຖະບານຈາກສູນກາງ ແລະ ນະຄອນຫຼວງວຽງຈັນ. ການປະເມີນຮູບແບບດັ່ງກ່າວ ຈະກາຍເປັນສິ່ງສຳຄັນໃນຕໍ່ໜ້າ, ການປະຕິຮູບຕາມ ການເນັ້ນໜັກຂອງລັດຖະບານໃນມໍ່ໆນີ້ ກ່ຽວກັບການກະຈາຍອຳນາດ, ການອະນຸມັດ ແລະ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດຂອງອົງການປົກຄອງແຂວງ ໂດຍສະເພາະການຄຸ້ມຄອງນະໂຍບາຍອາກອນ.

ບົດລາຍງານນີ້ຄວນສິ້ນສຸດລົງດ້ວຍຄຳເຕືອນ,ໃນຂະນະທີ່ອົງການປົກຄອງແຂວງແມ່ນພະຍາຍາມເລື້ອຍໆ ເພື່ອເຮັດໃຫ້ສະພາບແວດລ້ອມການດຳເນີນທຸລະກິດທີ່ເປັນມິດຕໍ່ກັບນັກລົງທຶນ, ພວກເຂົາໄດ້ ຖືກຜູກມັດ ໃນການປະຕິບັດຢູ່ພາຍໃນລະບຽບການທີ່ກຳນົດທີ່ລັດຖະບານຈາກສູນກາງ. ສ່ວນໃຫຍ່ຂອງພາລະດ້ານເວລາ ແລະ ຄ່າໃຊ້ຈ່າຍຕໍ່ທຸລະກິດພາຍໃນ ສປປ ລາວ ແມ່ນມາຈາກກົດລະບຽບທີ່ຄຸ້ມຄອງໂດຍ ລັດຖະບານຈາກສູນກາງເຊັ່ນ: ການຕໍ່ເລກປະຈຳຕົວອາກອນ ແລະ ໃບອະນຸຍາດດຳເນີນທຸລະກິດທຸກໆປີ. ນອກນັ້ນ, ຂັ້ນຕອນການສ້າງທຸລະກິດທີ່ສັບຊ້ອນ, ຍັງສືບຕໍ່ເປັນຂໍ້ຈຳກັດໃນການປະຕິຮູບ ແລະ ມາດຕະການໃນການເປີດເສລີທາງທຸລະກິດທີ່ອົງການປົກຄອງແຂວງສາມາດດຳເນີນການໄດ້.

# ເອກະສານຊ້ອນທ້າຍ

## ແບບສອບຖາມ ProFIT 2019

**ດັດສະນີການສ້າງສິ່ງອຳນວຍຄວາມສະດວກ ສໍາລັບການຄ້າ ແລະ ການລົງທຶນຂັ້ນແຂວງ 2019 (ProFIT)**

ສຄອ ແຫ່ງຊາດ ລາວ ໃຫ້ຄໍາໝັ້ນສັນຍາວ່າ ຂໍ້ມູນທັງໝົດທີ່ໄດ້ຮັບຈາກການສໍາຫຼວດດັ່ງກ່າວ ຈະຖືກຮັກສາໄວ້ເປັນຄວາມລັບ ແລະ ບໍ່ມີຜົນກະທົບໃດໆ ຕໍ່ການດໍາເນີນທຸລະກິດຂອງທ່ານ.

1. ຊື່: ______________________   2. ຕໍາແໜ່ງ: ______________________

3. ໂທລະສັບມືຖື: ______________________   4. ອີເມວ: ______________________

5. ເລກທະບຽນວິສາຫະກິດຂອງບໍລິສັດຂອງທ່ານ: ______________________

6. ທ່ານເຄີຍເຂົ້າຮ່ວມປະເມີນການສ້າງສິ່ງອຳນວຍຄວາມສະດວກສໍາລັບການຄ້າ ແລະ ການລົງທຶນ ຂັ້ນແຂວງ ທີ່ ສຄອ ແຫ່ງຊາດລາວຈັດ ໃນປີ 2017 ບໍ່?

1 ☐ ໄດ້ເຂົ້າຮ່ວມ   0 ☐ ບໍ່ໄດ້ເຂົ້າຮ່ວມ

**A. ຂອງມູນທົ່ວໄປຂອງຜູ້ປະກອບການ**

A1. ຊື່ບໍລິສັດ/ຊື່ທຸລະກິດ/ຊື່ທາງການ: ______________________

A2. ປີສ້າງຕັ້ງປີບໍລິສັດ ______________________

A3. ທີ່ຕັ້ງບໍລິສັດ *

| ລະຫັດ | ແຂວງ | ລະຫັດ | ແຂວງ |
|---|---|---|---|
| 1 | ຜົ້ງສາລີ | 9 | ວຽງຈັນ |
| 2 | ຫຼວງນໍ້າທາ | 10 | ນະຄອນຫຼວງວຽງຈັນ |
| 3 | ອຸດົມໄຊ | 11 | ບໍລິຄໍາໄຊ |
| 4 | ບໍ່ແກ້ວ | 12 | ຄໍາມ່ວນ |
| 5 | ຫຼວງພະບາງ | 13 | ສະຫວັນນະເຂດ |
| 6 | ຫົວພັນ | 14 | ສາລະວັນ |
| 7 | ໄຊຍະບູລີ | 15 | ເຊກອງ |
| 8 | ຊຽງຂວາງ | 16 | ຈໍາປາສັກ |
| | | 17 | ອັດຕະປື |

A4. ເພດຂອງ ຜູ້ບໍລິຫານ/ຜູ້ອຳນວຍການ

0 ☐ ຍິງ    1 ☐ ຊາຍ

A5. ເພດຍິງຖືຮຸ້ນ/ເປັນເຈົ້າຂອງ ເທົ່າກັບ ຫຼື ຫຼາຍກວ່າ 30% ແມ່ນບໍ່?

1 ☐ ແມ່ນ    0 ☐ ບໍ່ແມ່ນ

A6. ທຸລະກິດຂອງທ່ານເຮັດກ່ຽວກັບຫຍັງ? (ເລືອກໄດ້ຫຼາຍກວ່າ 1 ຄຳຕອບ)

1 ☐ ການຜະລິດ    2 ☐ ບໍລິການ    3 ☐ ອຸດສາຫະກຳປຸງແຕ່ງ

4 ☐ ກໍ່ສ້າງ    5 ☐ ກະສິກຳ, ປ່າໄມ້ ແລະ ການປະມົງ

6 ☐ ການຄ້າ, ຂາຍຍົກ ແລະ ຂາຍຍ່ອຍ

7 ☐ ອື່ນໆ (ລະບຸ)...

A7. ຜະລິດຕະພັນ/ການບໍລິການຫຼັກ ຂອງບໍລິສັດແມ່ນຫຍັງ? (ລະບຸ 1 ຜະລິດຕະພັນ) ____________________

A8. ຮູບແບບການດຳເນີນງານຂອງບໍລິສັດທ່ານແມ່ນ:

1 ☐ ວິສາຫະກິດຮຸ້ນສ່ວນສາມັນ    2 ☐ ວິສາຫະກິດຮຸ້ນສ່ວນຈຳກັດ

3 ☐ ບໍລິສັດມະຫາຊົນ    4 ☐ ບໍລິສັດຈຳກັດ ລວມທັງຈຳກັດຜູ້ດຽວ

A9. ຈຳນວນພະນັກງານເຮັດວຽກເຕັມເວລາໃນບໍລິສັດທ່ານມີຈັກຄົນ? ________ ຄົນ

A10. ທ່ານໄດ້ຂະຫຍາຍທຸລະກິດບໍໃນປີ 2018?

1 ☐ ຂະຫຍາຍ    0 ☐ ບໍ່ໄດ້ຂະຫຍາຍ

A11. ທ່ານມີແຜນຈະຂະຫຍາຍທຸລະກິດຂອງທ່ານບໍ່ໃນປີ 2019 ແລະ 2020?

1 ☐ ມີແຜນ    0 ☐ ບໍ່ມີແຜນ

**B. ການເລີ່ມຕົ້ນດຳເນີນທຸລະກິດ**

B1. ໃຜເປັນຄົນຍື່ນ/ແລ່ນຂໍໃບອະນຸຍາດໃນການສ້າງຕັ້ງທຸລະກິດ (ໃບທະບຽນວິສາຫະກິດ, ໃບທະບຽນອາກອນ, ກາປະທັບບໍລິສັດ ແລະ ໃບອະນຸຍາດປະກອບກິດຈະການ ຈາກຂະແໜງ ການກ່ຽວຂ້ອງ)

1 ☐ ຍື່ນດ້ວຍຕົວເອງ ຫລື ພະນັກງານຂອງທ່ານ

0 ☐ ຈ້າງບຸກຄົນພາຍນອກ (ບໍລິສັດທີ່ປຶກສາ ຫຼື ນາຍໜ້າ)

B2. ບໍລິສັດທ່ານໄດ້ຮັບທະບຽນວິສາຫະກິດແນວໃດ?

1 ☐ ໄດ້ຮັບທະບຽນວິສາຫະກິດ ພ້ອມກັບເລກປະຈຳຕົວອາກອນເລີຍ (ຮູບແບບໃໝ່)

2 ☐ ໄດ້ຮັບທະບຽນວິສາກະກິດ ແລະ ທະບຽນອາກອນໃນເວລາທີ່ແຕກຕ່າງກັນ (ຮູບແບບເກົ່າ)

3 ☐ ອື່ນໆ: (ລະບຸ) ____________________________________________

B2.1 ໃຊ້ເວລາປະມານຈັກວັນລັດຖະການ ຈຶ່ງໄດ້ຮັບທະບຽນວິສາຫະກິດ, ທະບຽນອາກອນ ແລະ ກາປະທັບບໍລິສັດ? (ນັບແຕ່ມື້ຍື່ນເອກະສານ-ໄດ້ຮັບໃບທະບຽນ)
ໃຊ້ເວລາທັງໝົດ ______________________ ວັນ ________________

B2.2 ໃຊ້ຈ່າຍທັງໝົດເທົ່າໃດ (ລວມທັງເປັນທາງການ ແລະ ບໍ່ເປັນທາງການ)? (ນັບແຕ່ມື້ຍື່ນເອກະສານ-ໄດ້ຮັບໃບທະບຽນ) ໃຊ້ເງິນທັງໝົດ ______________________________________________ ກີບ

B.2.3. ທ່ານຄິດວ່າບໍລິສັດອື່ນໆ ທີ່ດຳເນີນທຸລະກິດໃນຂະແໜງດຽວກັບທ່ານ ໄດ້ຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການເພື່ອຂໍໃບອະນຸຍາດສ້າງຕັ້ງທຸລະກິດບໍ່?
1 ☐ ໄດ້ຈ່າຍ 0 ☐ ບໍ່ໄດ້ຈ່າຍ

B3. ເມື່ອຈະເລີ່ມຕົ້ນເຮັດທຸລະກິດ, ບໍລິສັດຂອງທ່ານຕ້ອງໄດ້ຂໍໃບອະນຸຍາດປະກອບກິດຈະການ ແລະ ໃບອະນຸຍາດອື່ນໆ ອີກບໍ?
1 ☐ ຕ້ອງໄດ້ຂໍ (ສືບຕໍ່ ຕອບ B3.1.1-B3.3.5) 0 ☐ ບໍ່ຈຳເປັນ (ສືບຕໍ່ ຕອບ B4)

B3.1 ກະລຸນາບອກຊື່ໃບອະນຸຍາດປະກອບກິດຈະການ ແລະ ໃບອະນຸຍາດອື່ນໆ (ຖ້າມີ) ແລະ ພາກສ່ວນທີ່ອອກໃບອະນຸຍາດດັ່ງກ່າວ? ໃຊ້ເວລາຈັກວັນ ແລະ ມີຄ່າໃຊ້ຈ່າຍທັງໝົດເທົ່າໃດ?

| 1 | ຊື່ໃບອະນຸຍາດ | ເວລາໃຊ້ (ວັນ) | ໃຊ້ເງິນ (ກີບ) |
|---|---|---|---|
| B.3.1.1 | | | |
| B3.1.2 | | | |
| B3.1.3 | | | |

B3.2 ທ່ານຄິດວ່າບໍລິສັດອື່ນໆ ທີ່ດຳເນີນທຸລະກິດໃນຂະແໜງດຽວກັບທ່ານ ໄດ້ຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການເພື່ອຂໍໃບອະນຸຍາດປະກອບກິດຈະການບໍ່?
1 ☐ ໄດ້ຈ່າຍ (ຕອບ B3.2.1) 0 ☐ ບໍ່ໄດ້ຈ່າຍ (ຕອບ B4)

B3.2.1 ຖ້າຈ່າຍ, ໃຫ້ລະບຸຊື່ໃບອະນຸຍາດປະກອບກິດຈະການ:
1 ______________________________________________
2 ______________________________________________
3 ______________________________________________

B4. ໃນການຂໍໃບອະນຸຍາດດຳເນີນທຸລະກິດຕ່າງໆຜ່ານມາເປັນແນວໃດ?

| ໃບອະນຸຍາດ | ຍາກຫຼາຍທີ່ສຸດ | ຍາກໜ້ອຍ | ບໍ່ຍາກ | ບໍ່ຮູ້ |
|---|---|---|---|---|
| B4.1 ການຂໍໃບທະບຽນວິສາຫະກິດ | 3 | 2 | 1 | 9 |
| B4.2 ທະບຽນອາກອນ | 3 | 2 | 1 | 9 |
| B4.3 ຄັດກາປະທັບບໍລິສັດ | 3 | 2 | 1 | 9 |
| B4.4 ຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ | 3 | 2 | 1 | 9 |

| ໃບອະນຸຍາດ | ຍາກຫຼາຍທີ່ສຸດ | ຍາກໜ້ອຍ | ບໍ່ຍາກ | ບໍ່ຮູ້ |
|---|---|---|---|---|
| B4.5 ຂໍອະນຸຍາດຂະຫຍາຍກິດຈະການ | 3 | 2 | 1 | 9 |
| B4.6 ອື່ນໆ (ລະບຸ) ________ | 3 | 2 | 1 | 9 |

**C. ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ**

C1. ທ່ານຮູ້ບໍ່ວ່າ ອໍານາດການປົກຄອງແຂວງ ໄດ້ເຜີຍແຜ່ເອກະສານດັ່ງລຸ່ມນີ້ບໍ່? ຫຼື ໝົດທຸກຄົນສາມາດເຂົ້າເຖິງໄດ້ບໍ່?

| ເອກະສານ | ໄດ້ເຜີຍແຜ່ | ບໍ່ໄດ້ເຜີຍແຜ່ | ບໍ່ຮູ້/ບໍ່ແນ່ໃຈ |
|---|---|---|---|
| C11 ງົບປະມານແຂວງ | 1 ☐ | 2 ☐ | 9 ☐ |
| C12 ແຜນການພັດທະນາເສດຖະກິດ-ສັງຄົມແຂວງ | 1 ☐ | 2 ☐ | 9 ☐ |
| C13 ກົດໝາຍ, ກົດລະບຽບ, ຄໍາສັ່ງ, ຂໍ້ຕົກລົງ ຂອງແຂວງ | 1 ☐ | 2 ☐ | 9 ☐ |
| C14 ງົບປະມານລົງທຶນພັດທະນາໂຄງລ່າງພື້ນຖານຂອງແຂວງ | 1 ☐ | 2 ☐ | 9 ☐ |
| C15 ແຜນຍຸດທະສາດໃນການນໍາໃຊ້ທີ່ດິນຂອງແຂວງ | 1 ☐ | 2 ☐ | 9 ☐ |
| C16 ນະໂຍບາຍສົ່ງເສີມການລົງທຶນ ລະດັບແຂວງ | 1 ☐ | 2 ☐ | 9 ☐ |
| C17 ຂັ້ນຕອນ ແລະ ແບບຟອມ ທີ່ຕ້ອງນໍາໃຊ້ ໃນການປະສານງານ ກັບພາກລັດ | 1 ☐ | 2 ☐ | 9 ☐ |
| C18 ໂອກາດໃນການປະມູນວຽກງານຂອງພາກລັດຂັ້ນແຂວງ | 1 ☐ | 2 ☐ | 9 ☐ |

C2. ທ່ານເຄີຍໄປຂໍຂໍ້ມູນ ຫຼື ເອກະສານ ທີ່ບໍ່ໄດ້ເປີດເຜີຍສູ່ສາທາລະນະ ຈາກໜ່ວຍງານຂັ້ນແຂວງ ຫຼື ບໍ່?

1 ☐ ເຄີຍ (ຕອບ C2.1-C2.2)  0 ☐ ບໍ່ເຄີຍ (ຕອບ C3)

C2.1. ຖ້າເຄີຍ, ທ່ານໄດ້ຮັບເອກະສານທີ່ຂໍຈາກໜ່ວຍງານຂັ້ນແຂວງ ຫຼື ບໍ່?

1 ☐ ບໍ່ໄດ້ຮັບ

2 ☐ ໄດ້ຮັບບາງຂໍ້ມູນ

3 ☐ ໄດ້ຮັບທຸກຂໍ້ມູນ

C2.2. ທ່ານໄດ້ເສຍຄ່າໃຊ້ຈ່າຍໃຫ້ພະນັກງານລັດ ເພື່ອຂໍຮັບເອກະສານນັ້ນ ຫຼື ບໍ່?

1 ☐ ເສຍ  0 ☐ ບໍ່ເສຍ

C3. ທ່ານມີໂອກາດໄດ້ສະເໜີຄໍາເຫັນຕໍ່ຮ່າງນະໂຍບາຍ ຫຼື ກົດລະບຽບຂອງແຂວງ ຫຼື ບໍ່?

1 ☐ ໄດ້  0 ☐ ບໍ່ໄດ້

**D. ພາລະທາງດ້ານລະບຽບການ**

D1. ໜ່ວຍງານຂັ້ນແຂວງພາກສ່ວນຕ່າງໆ ໄດ້ມາກວດສອບທຸລະກິດຂອງທ່ານລວມທັງໝົດຈັກຄັ້ງ ໃນປີ 2018?

________________________________ ຄັ້ງ

D2. ຈຳນວນຄັ້ງໃນການກວດສອບໃນປີ 2018 ທຽບກັບປີ 2017 ເປັນແນວໃດ?

3 ☐ ຫຼຸດລົງ 2 ☐ ບໍ່ແຕກຕ່າງກັນ 1 ☐ ຫຼາຍຂື້ນ

D3. ທ່ານຖືກກວດສອບຈາກໜ່ວຍງານໃດແດ່ ໃນປີ 2018?

| ເອກະສານ | ຖືກກວດ | ບໍ່ຖືກກວດ |
|---|---|---|
| ໜ່ວຍງານສ່ວຍສາອາກອນ | 1 | 0 |
| ເຈົ້າໜ້າທີ່ຕຳຫຼວດ | 1 | 0 |
| ຂະແໜງການຄ້າ ແລະ ອຸດສາຫະກຳ | 1 | 0 |
| ຂະແໜງການທີ່ກ່ຽວຂ້ອງໃນອອກໃບອະນຸຍາດປະກອບກິດຈະການ | 1 | 0 |
| ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 1 | 0 |
| ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ | 1 | 0 |
| ອື່ນໆ(ລະບຸ) _______________ | 1 | 0 |

D4. ທ່ານເຫັນວ່າ ການກວດສອບຂອງແຕ່ລະໜ່ວຍງານ ແມ່ນມີຄວາມຊໍ້າຊ້ອນກັນ ຫຼື ບໍ່?

1 ☐ ຊໍ້າຊ້ອນ 0 ☐ ບໍ່ຊໍ້າຊ້ອນ

D5. ທ່ານຈ່າຍຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ໃຫ້ແກ່ເຈົ້າໜ້າທີ່ທີ່ມາກວດສອບ ຫຼື ບໍ່?

1 ☐ ຈ່າຍ 2 ☐ ບໍ່ຈ່າຍ

D6. ໃນການຕໍ່ໃບທະບຽນອາກອນ, ທ່ານໃຊ້ເວລາຈັກວັນ (ວັນລັດຖະການ)
(ເລີ່ມຈາກວັນທີ່ຍື່ນເອກະສານ ຈົນເຖິງວັນທີ່ໄດ້ຮັບການຕໍ່ທະບຽນອາກອນ)
ໃຊ້ເວລາທັງໝົດ __________ ວັນ

D7. ໃນການຕໍ່ໃບທະບຽນອາກອນ, ທ່ານໃຊ້ຈ່າຍທັງໝົດເທົ່າໃດ (ເປັນທາງການ ແລະ ບໍ່ເປັນທາງການ)?
(ເລີ່ມຈາກວັນທີ່ຍື່ນເອກະສານ ຈົນເຖິງວັນທີ່ໄດ້ຮັບການຕໍ່ທະບຽນອາກອນ)
ໃຊ້ເງິນທັງໝົດ _____________ ກີບ

D8. ໃນການຕໍ່ໃບອະນຸຍາດປະກອບກິດຈະການຈາກຂະແໜງການກ່ຽວຂ້ອງ, ໃຊ້ເວລາຈັກວັນ (ວັນລັດຖະການ)
(ເລີ່ມຈາກວັນທີ່ຍື່ນເອກະສານ ຈົນເຖິງວັນທີ່ໄດ້ຮັບການຕໍ່ໃບອະນຸຍາດປະກອບກິດຈະການ)
ໃຊ້ເວລາທັງໝົດ __________ ວັນ

D9. ໃນການຕໍ່ໃບອະນຸຍາດປະກອບກິດຈະການຈາກຂະແໜງການກ່ຽວຂ້ອງ, ໃຊ້ຈ່າຍທັງໝົດເທົ່າໃດ (ເປັນທາງການ ແລະ ບໍ່ເປັນທາງການ) (ເລີ່ມຈາກວັນທີ່ຍື່ນເອກະສານ ຈົນເຖິງວັນທີ່ໄດ້ຮັບການຕໍ່ໃບອະນຸຍາດປະກອບກິດຈະການ)
ໃຊ້ເງິນທັງໝົດ _____________ ກີບ

**E. ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ**

E1. ເປີເຊັນລາຍຈ່າຍທີ່ບໍ່ເປັນທາງການ ທີ່ທ່ານຕ້ອງຈ່າຍໃຫ້ແກ່ພະນັກງານລັດ ໂດຍສະເລ່ຍແມ່ນກວມຈັກສ່ວນຮ້ອຍຕໍ່ປີ ຂອງລາຍຮັບຂອງທຸລະກິດທ່ານ?
______________________________________________________________ % ຕໍ່ປີ.

E2. ທ່ານເຫັນວ່າ ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ທີ່ວິສາຫະກິດຈ່າຍໃຫ້ແກ່ພາກລັດ ແມ່ນຍອມຮັບໄດ້ ຫຼື ບໍ່?

1 ☐ ຮັບໄດ້ 0 ☐ ຮັບບໍ່ໄດ້

E3. ທ່ານເຫັນວ່າ ການຈ່າຍຄ່າໃຊ້ຈ່າຍບໍ່ເປັນທາງການ ຊ່ວຍໃຫ້ການດຳເນີນທຸລະກິດ ຜ່ານພົ້ນໄປໄດ້ຢ່າງວ່ອງໄວ?

1 ☐ ແມ່ນ 0 ☐ ບໍ່ແມ່ນ

E4. ທ່ານເຫັນວ່າ ແຂວງໄດ້ເປີດເຜີຍອັດຕາຄ່າທຳນຽມໃນການບໍລິການເປັນທາງການ ຫຼື ບໍ່?

1 ☐ ເປີດເຜີຍ 9 ☐ ບໍ່ເປີດເຜີຍ

E5. ທ່ານເຫັນວ່າ ແມ່ນເລື່ອງປົກກະຕິທີ່ທຸລະກິດຂອງທ່ານຕ້ອງໄດ້ເຈລະຈາ ກ່ຽວກັບການຈ່າຍອາກອນ?

1 ☐ ແມ່ນ 9 ☐ ບໍ່ແມ່ນ

**F. ຄວາມສອດຄ່ອງໃນການຈັດຕັ້ງປະຕິບັດກົດລະບຽບຕ່າງໆ**

F1. ທ່ານເຫັນວ່າ ແຂວງໄດ້ຈັດຕັ້ງປະຕິບັດນະໂຍບາຍ ແລະ ກົດລະບຽບ ການດຳເນີນທຸລະກິດສອດຄ່ອງກັບທີ່ສູນກາງວາງອອກ ຫຼື ບໍ່?

1 ☐ ສອດຄ່ອງ 0 ☐ ບໍ່ສອດຄ່ອງ

F2. ທ່ານເຫັນວ່າ ພະແນກການຕ່າງໆຂອງລັດຢູ່ໃນແຂວງຂອງທ່ານ ຮ່ວມມືກັນເພື່ອສະໜັບສະໜູນພາກທຸລະກິດ ຫຼື ບໍ່?

1 ☐ ຮ່ວມມືກັນ 0 ☐ ບໍ່ຮ່ວມມືກັນ

F3. ທ່ານເຫັນວ່າ ອົງການປົກຄອງແຂວງໄດ້ອອກກົດລະບຽບເພີ່ມເຕີມທີ່ຕິດພັນກັບພາກທຸລະກິດ ທີ່ຕ່າງຈາກລະບຽບຂອງສູນກາງ ຫຼື ບໍ່?

1 ☐ ແມ່ນ (ຕອບ F3.1) 0 ☐ ບໍ່ແມ່ນ (ຕອບ F4)

F3.1 ຖ້າແມ່ນ, ກົດລະບຽບເພີ່ມເຕີມນັ້ນ ມີຜົນຕໍ່ການດຳເນີນທຸລະກິດຂອງທ່ານແນວໃດ?

1 ☐ ຜົນກະທົບດ້ານບວກ 2 ☐ ຜົນກະທົບດ້ານລົບ 3 ☐ ບໍ່ມີຜົນຫຍັງ

F4. ທ່ານເຫັນວ່າອົງການປົກຄອງແຂວງ ໄດ້ສະໜັບສະໜູນທຸລະກິດຂອງລັດ ຫຼາຍກວ່າທຸລະກິດຂອງພາກເອກະຊົນ ຫຼື ບໍ່?

1 ☐ ແມ່ນ 0 ☐ ໃຊ້ນະໂຍບາຍດຽວກັນ 2 ☐ ບໍ່ແມ່ນ

F5. ທ່ານເຫັນວ່າ ໃນການປະມູນຈັດຊື້ຈັດຈ້າງ ຫຼື ການເຂົ້າເຮັດສັນຍາກັບໜ່ວຍງານລັດຂັ້ນແຂວງ, ວິສາຫະກິດທີ່ມີເຄືອຂ່າຍ ແລະ ຄວາມສຳພັນທີ່ໃກ້ຊິດກັບໜ່ວຍງານພາກລັດຂັ້ນແຂວງ ແມ່ນຈະໄດ້ບູລິມະສິດສະເໝີ ແມ່ນ ຫຼື ບໍ່?

1 ☐ ແມ່ນ 0 ☐ ບໍ່ແມ່ນ

## G. ຄວາມເປັນມິດຕໍ່ພາກທຸລະກິດ ຂອງພ່ອຍງານຂັ້ນແຂວງ

G1. ທ່ານເຫັນວ່າ ໜ່ວຍງານລັດຂັ້ນແຂວງ ມີທັດສະນະຄະຕິທາງດ້ານບວກ ຕໍ່ພາກທຸລະກິດເອກະຊົນ ຫຼື ບໍ່?

1 ☐ ແມ່ນ 2 ☐ ບໍ່ແມ່ນ

G2. ອໍານາດການປົກຄອງແຂວງຂອງທ່ານ ໄດ້ຊ່ວຍເຫຼືອພາກທຸລະກິດໃນແຂວງ ຫຼື ບໍ່?

1 ☐ ຊ່ວຍເຫຼືອ 0 ☐ ບໍ່ຊ່ວຍເຫຼືອ

G3. ທ່ານເຫັນວ່າ ອໍານາດການປົກຄອງແຂວງພ້ອມທີ່ຈະປັບປຸງ ແລະ ນໍາໃຊ້ວິທີການຮູບແບບໃໝ່ໆ ມາໃຊ້ໃນການແກ້ໄຂບັນຫາໃໝ່ ທີ່ເກີດຂຶ້ນໃນພາກທຸລະກິດ ຫຼື ບໍ່?

1 ☐ ພ້ອມປັບປຸງ 0 ☐ ບໍ່ພ້ອມປັບປຸງ

G4. ທ່ານຮູ້ກ່ຽວກັບດໍາລັດນາຍົກລັດຖະມົນຕີເລກທີ 02 ກ່ຽວກັບການປັບປຸງບັນດາລະບຽບການ ແລະ ກົນໄກ ການປະສານງານ ໃນການດໍາເນີນທຸລະກິດ ຢູ່ ສປປ ລາວ ບໍ່?

1 ☐ ຮູ້ (ຕອບ G5) 0 ☐ ບໍ່ຮູ້ (ຕອບ G7)

G5. ທ່ານຄິດວ່າດໍາລັດນາຍົກລັດຖະມົນຕີເລກທີ 02 ຊ່ວຍປັບປຸງສະພາບແວດລ້ອມໃນການດໍາເນີນທຸລະກິດໃນແຂວງຂອງທ່ານໄດ້ບໍ່?

1 ☐ ຊ່ວຍ (ຕອບ G5.1) 2 ☐ ບໍ່ຊ່ວຍ (ຕອບ G5.2)

3 ☐ ບໍ່ຮູ້ (ຕອບ G7)

G5.1 ຖ້າຕອບຊ່ວຍ, ຊ່ວຍປັບປຸງສະພາບແວດລ້ອມໃນການດໍາເນີນທຸລະກິດແນວໃດ?

| **ສະພາບແວດລ້ອມການດໍາເນີນທຸລະກິດ** | **ແມ່ນ** | **ບໍ່ແມ່ນ** |
|---|---|---|
| 1. ຂັ້ນຕອນການສ້າງຕັ້ງທຸລະກິດງ່າຍ ແລະ ຊັດເຈນຂຶ້ນ | 1 | 0 |
| 2. ຕົ້ນທຶນການສ້າງຕັ້ງທຸລະກິດຫຼຸດລົງ | 1 | 0 |
| 3. ຜູ້ປະກອບການສາມາດເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບການສ້າງຕັ້ງທຸລະກິດໄດ້ຢ່າງສະດວກ | 1 | 0 |
| 4. ການດໍາເນີນງານຂອງພາກລັດມີຄວາມໂປ່ງໃສຂຶ້ນ | 1 | 0 |
| 5. ການຂໍອະນຸຍາດປະກອບກິດຈະການຈາກຂະແໜງການກ່ຽວຂ້ອງວ່ອງໄວຂຶ້ນ ແລະ ເກັບຄ່າທໍານຽມທີ່ເໝາະສົມ | 1 | 0 |
| 6. ອື່ນໆ (ລະບຸ) ________________________ | 1 | 0 |

G5.2 ຖ້າຕອບບໍ່ຊ່ວຍ, ຍ້ອນຫຍັງຈຶ່ງບໍ່ຊ່ວຍປັບປຸງສະພາບແວດລ້ອມໃນການດໍາເນີນທຸລະກິດ?

| **ສະພາບແວດລ້ອມການດໍາເນີນທຸລະກິດ** | **ແມ່ນ** | **ບໍ່ແມ່ນ** |
|---|---|---|
| 1. ຂັ້ນຕອນການສ້າງຕັ້ງທຸລະກິດຍັງບໍ່ມີການປັບປຸງຫຼາຍ | 1 | 0 |
| 2. ຕົ້ນທຶນການສ້າງຕັ້ງທຸລະກິດຍັງສູງ | 1 | 0 |
| 3. ຜູ້ປະກອບການບໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບການສ້າງຕັ້ງທຸລະກິດໄດ້ | 1 | 0 |
| 4. ການດໍາເນີນງານຂອງພາກລັດຍັງຂາດຄວາມໂປ່ງໃສ | 1 | 0 |

| | | |
|---|---|---|
| 5. ການຂໍອະນຸຍາດປະກອບກິດຈະການຈາກຂະແໜງການກ່ຽວຂ້ອງຍັງຫຍຸ້ງຍາກ ແລະ ມີຕົ້ນທຶນສູງ | 1 | 0 |
| 6. ອື່ນໆ (ລະບຸ) ________________________ | 1 | 0 |

G6. ການຈັດຕັ້ງປະຕິບັດໃດລຸ່ມນີ້ ຈະຊ່ວຍໃຫ້ການຈັດຕັ້ງປະຕິບັດດຳລັດນາຍົກລັດຖະມົນຕີເລກທີ 02 ມີປະສິດທິພາບ? (ເລືອກໄດ້ຫຼາຍກວ່າ 1 ຄຳຕອບ)

1 ☐ ການນຳໃຊ້ລະບົບເອເລັກໂຕຣນິກ ໃນການອອກທະບຽນວິສາຫະກິດ

2 ☐ ການນຳໃຊ້ລະບົບເອເລັກໂຕຣນິກ ໃນການຊຳລະອາກອນ

3 ☐ ການປັບປຸງກົນໄກການປະສານງານລະຫວ່າງໜ່ວຍງານພາກລັດ

4 ☐ ຫຼຸດເວລາໃນການອອກໃບທະບຽນຕ່າງໆ ແລະ ປຸງປັບລະບຽບທຸລະກິດໃຫ້ງ່າຍຂຶ້ນ

5 ☐ ອື່ນໆ (ລະບຸ) ________________________

| | | ໃຊ້ບໍລິການຈາກ | | |
|---|---|---|---|---|
| **G7. ໃນປີຜ່ານມາ, ບໍລິສັດຂອງທ່ານໃນນຳໃຊ້ບໍລິການລຸ່ມນີ້ໃນແຂວງຂອງທ່ານບໍ່? ຖ້າໃຊ້, ໃຫ້ລະບຸພາກສ່ວນທີ່ໃຫ້ບໍລິການດັ່ງກ່າວ?** | **ບໍ່ໄດ້ໃຊ້ (1)** | **ໜ່ວຍງານພາກລັດ (2)** | **ວິສາຫະກິດເອກະຊົນ (3)** | **ອົງການຈັດຕັ້ງພາກເອກະຊົນ (ສຄອ ຫຼື ສະມາຄົມ) (4)** |
| G71. ການຊອກຫາຂໍ້ມູນຕະຫຼາດ | 0 | 1 | 2 | 3 |
| G72. ປຶກສາທາງດ້ານກົດໝາຍ | 0 | 1 | 2 | 3 |
| G73. ຊອກພະນັກງານໃໝ່ | 0 | 1 | 2 | 3 |
| G74. ບໍລິການຈັບຄູ່ທຸລະກິດ | 0 | 1 | 2 | 3 |
| G75. ສົ່ງເສີມການຄ້າ ແລະ ການຈັດວາງສະແດງຕ່າງໆ | 0 | 1 | 2 | 3 |
| G76. ຝຶກອົບຮົມກ່ຽວກັບເຕັກໂນໂລຊີ | 0 | 1 | 2 | 3 |
| G77. ຝຶກອົບຮົມການເງິນ ແລະ ການບັນຊີ | 0 | 1 | 2 | 3 |
| G78. ຝຶກອົບຮົມການບໍລິການທຸລະກິດ | 0 | 1 | 2 | 3 |
| G79. ຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ພາກທຸລະກິດ | 0 | 1 | 2 | 3 |
| 10. ອື່ນໆ (ລະບຸ) __________ | 0 | 1 | 2 | 3 |

G8. ຈາກຄຳຖາມເບື້ອງເທິງທັງໝົດ, ທ່ານຢາກໃຫ້ອຳນາດການປົກຄອງແຂວງ ຄວນດຳເນີນການກ່ອນແມ່ນຂອດໃດ ເພື່ອປັບປຸງການສ້າງສິ່ງອຳນວຍຄວາມສະດວກໃນການດຳເນີນທຸລະກິດ (1 ແມ່ນບູລິມະສິດສຳຄັນໜ້ອຍສຸດ ແລະ 5 ສຳຄັນຫຼາຍສຸດ)

| | **1** | **2** | **3** | **4** | **5** |
|---|---|---|---|---|---|
| ການເລີ່ມຕົ້ນດຳເນີນທຸລະກິດທີ່ງ່າຍ (ພາກ B) | 1 | 2 | 3 | 4 | 5 |
| ປັບປຸງຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຕ່າງໆຂອງພາກລັດ (ພາກ C) | 1 | 2 | 3 | 4 | 5 |

| | | | | | |
|---|---|---|---|---|---|
| ຫຼຸດຜ່ອນພາລະທາງດ້ານລະບຽບການ (ພາກ D) | 1 | 2 | 3 | 4 | 5 |
| ປັບປຸງຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ (ພາກ E) | 1 | 2 | 3 | 4 | 5 |
| ປັບປຸງຄວາມສອດຄ່ອງໃນການຈັດຕັ້ງປະຕິບັດກົດລະບຽບຕ່າງໆ (ພາກ F) | 1 | 2 | 3 | 4 | 5 |
| ປັບປຸງຄວາມເປັນມິດຕໍ່ພາກທຸລະກິດຂອງພະນັກງານລັດຂັ້ນແຂວງ (ພາກ G) | 1 | 2 | 3 | 4 | 5 |

G8. ຂໍ້ສະເໜີເພີ່ມເຕີມກ່ຽວກັບການປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດໃນແຂວງທ່ານ:

.......................................................................................................................

.......................................................................................................................

.......................................................................................................................

## ບົດລາຍງານການສ້າງສິ່ງອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ

*ວັດແທກການຄຸ້ມຄອງເສດຖະກິດຂອງພາກລັດ ສຳລັບການພັດທະນາທຸລະກິດ*

ບົດລາຍງານນີ້ນຳສະເໜີຜົນການສຳຫຼວດ ການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ທີ່ໄດ້ດຳເນີນການສຳຫຼວດໃນ ສປປ ລາວ. ມັນສະໜອງ ພາບລວມທີ່ມີລັກສະນະຄົບຖ້ວນ ປະສົບການ ແລະ ທັດສະນະຂອງພາກທຸລະກິດໃນການທີ່ຈະປະຕິບັດລະບຽບໃຫ້ສອດຄ່ອງໃນຂັ້ນທ້ອງຖິ່ນ ບົດລາຍງານນີ້ນຳສະເໜີການວິເຄາະຫຼັກດັດສະນີຊີ້ວັດ (i) ການເລີ່ມຕົ້ນດຳເນີນທຸລະກິດ, (ii) ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ, (iii) ພາລະທາງດ້ານລະບຽບການ, (iv) ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ, (v) ຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດນະໂຍບາຍ, (vi) ຄວາມເປັນມິດຕໍ່ພາກທຸລະກິດຂອງອົງການປົກຄອງແຂວງ. ມັນສະແດງໃຫ້ເຫັນວ່າມີການປັບໃນແວດລ້ອມການດຳເນີນທຸລະກິດໃນທຸກແຂວງ ເນື່ອງຈາກວ່າມີຂະບວນການໃນທາງບວກຂອງເງື່ອນໄຂທີ່ຕ້ອງການໃນການຂຶ້ນທະບຽນ.

### ກ່ຽວກັບ ທະນາຄານພັດທະນາອາຊີ

ADB ມຸ້ງໝັ້ນທີ່ຈະເຮັດໃຫ້ ພາກພື້ນອາຊີ ແລະ ປາຊີຟິກ ມີຄວາມຈະເລີນຮຸ່ງເຮືອງ, ໄດ້ຮັບໂອກາດຮ່ວມກັນ, ສາມາດຟື້ນໂຕຈາກວິກິດການຕ່າງໆ ແລະ ມີການພັດທະນາເສດຖະກິດແບບຍືນຍົງ, ພ້ອມນີ້ຍັງມີຄວາມພະຍາຍາມທີ່ຈະໃຫ້ຫຼຸດພົ້ນຈາກຄວາມທຸກຍາກ. ທະນາຄານພັດທະນາອາຊີ ສ້າງຕັ້ງຂຶ້ນໃນປີ 1966 ມີສະມາຊິກທັງໝົດ 68 ປະເທດ, ເຊິ່ງໃນນັ້ນມີ 49 ປະເທດມາຈາກພາກພື້ນ. ເຄື່ອງມືຕົ້ນຕໍຂອງເອດີບີສຳລັບຊ່ວຍເຫຼືອບັນດາປະເທດສະມາຊິກທີ່ກຳລັງພັດທະນາ ປະກອບມີການປຶກສາຫາລືດ້ານນະໂຍບາຍ, ເງິນກູ້, ການລົງທຶນໃນຫຼັກຊັບ, ການຄ້ຳປະກັນ, ທຶນຊ່ວຍເຫຼືອລ້າ ແລະ ການຊ່ວຍເຫຼືອດ້ານວິຊາການ.

**ທະນາຄານພັດທະນາອາຊີ**
6 ADB ຖະໜົນ, ມັນດາລູຢອງ ຊີຕີ້
1550 ເມໂທຣ ມະນີລາ, ຟີລິບປິນ
www.adb.org